# ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີ ສອນແບບຈິກຊໍ່ສໍາຫລັບນັກສຶກສາປີ 3, ລະບົບ 12+4 ສາຍຄູ ພາສາອັງກິດ ທີ່ວິທະຍາໄລຄູຫຼວງພະບາງ

ຄໍາແພງ ເມືອງໂພໄຊ

ວິທະຍານິພົນປະລິນຍາໂທ ສຶກສາສາດ

ສາຂາວິຊາ ຫຼັກສູດ ແລະ ການສອນ

ຄະນະສຶກສາສາດ

ມະຫາວິທະຍາໄລແຫ່ງຊາດລາວ

**FED0125/15**

ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີ
ສອນແບບຈິກຊໍ່ສຳຫລັບນັກສຶກສາປີ 3, ລະບົບ 12+4 ສາຍຄ
ພາສາອັງກິດ ທີ່ວິທະຍາໄລຄູຫຼວງພະບາງ

**THE TEACHING-LEARNIN GOFREADING COMPREHENSION BY USING JIGSAW FOR YEAR 3 STUDENTS 12+4 SYSTEM OF ENGLISH SECTION, LUANGPRABANG TEACHER TRAINING COLLEGE**

ຄຳແພງ ເມືອງໂພໄຊ

ວິທະຍານິພົນເປັນສ່ວນໜຶ່ງຂອງການສຶກສາ
ຫຼັກສູດປະລິນຍາໂທ ສຶກສາສາດ
ສາຂາວິຊາ ຫຼັກສູດ ແລະ ການສອນ

ຄະນະສຶກສາສາດ
ມະຫາວິທະຍາໄລແຫ່ງຊາດລາວ

**FED0125/15**

ວິທະຍານິພົນສະບັບນີ້ ສະເໜີຕໍ່ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ

**ຄໍາແພງ ເມືອງໂພໄຊ**

ຄະນະກຳມະການທີ່ປຶກສາ ແລະ ຄະນະກຳມະການສອບເສັງວິທະຍານິພົນໄດ້ມີການພິຈາລະນາ ວິທະຍານິພົນສະບັບນີ້ແລ້ວ ເຫັນວ່າສົມຄວນຮັບເປັນສ່ວນໜຶ່ງຂອງການສຶກສາຕາມຫຼັກກາສູດປະລິນຍາໂທສຶກສາສາດສາຂາວິຊາ ຫຼັກສູດ ແລະ ການສອນຂອງຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດລາວໄດ້.

**ຄະນະກຳມະການທີ່ປຶກສາ**

**ປະທານກຳມະການ**.................................
ຮສ. ດຣ. ສາຍສະໝອນ ປຣະສອນໄຊ

**ກຳມະການ**...........................................
ອາຈານ ລິນ້າ ພອນມາເຈດີ

**ຄະນະກຳມະການສອບເສັງວິທະຍານິພົນ**

**ປະທານກຳມະການ**..............................
ຮສ. ລຳໄມ ພິພັກຂະວົງ

**ກຳມະການ**.........................................
ຮສ. ບົວພັນ ລືເດດມູນສອນ

**ກຳມະການ**.........................................
ອຈ. ສົມລອຍ ສຸຕິຍະໄທ

**ກຳມະການ**.........................................
ຮສ.ດຣ. ສີຖານ ສຸຂະວົງ

**ກຳມະການ**.........................................
ຮສ.ດຣ. ໄຫງວ ແກ້ວສະດາ

ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ອະນຸມັດຮັບເອົາວິທະຍານິພົນສະບັບນີ້ ເປັນສ່ວນໜຶ່ງຂອງການສຶກສາຕາມຫລັກສູດປະລິນຍາໂທສຶກສາສາດ ສາຂາວິຊາຫຼັກສູດ ແລະ ການສອນຂອງຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ.

**ຄະນະບໍດີ ຄະນະສຶກສາສາດ**

# ປະກາດກຽດຕິຄຸນ

ຂ້າພະເຈົ້າໃນນາມຜູ້ຂຽນບົດວິທະຍານິພົນຂໍສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫຼືອ ແລະ ຂອບອົກຂອບໃຈເປັນຢ່າງສູງມາຍັງ ທ່ານ ຮສ ລຳໄມ ພິພັກຂະວົງ ປະທານຄະນະກຳມະການປ້ອງກັນບົດ, ທ່ານ ຮສ ບົວພັນ ລີເດດມູນສອນ ຮອງປະທານການປ້ອງກັນບົດ, ທ່ານ ຮສ ດຣ ສີຖານ ສຸຂະວົງ ຄະນະປ້ອງກັນບົດ, ທ່ານ ອາຈານ ສົມລວຍ ສຸຕິຍະໄທ ຄະນະປ້ອງກັນບົດ, ທ່ານ ຮສ ດຣ ໄຫງວ ແກ້ວສະດາ ຄະນະປ້ອງກັນບົດ ແລະ ຂອບອົກຂອບໃຈມາຍັງທ່ານ ຮສ ດຣ ສາຍສະໜອນ ປຣະສອນໄຊ, ທ່ານ ອາຈານ ລີນ້າ ພອນມາເຈດີ ເຊິ່ງອາຈານທີ່ປຶກສາທີ່ໄດ້ໃຫ້ຄຳແນະນຳ, ຄຳປຶກສາ ແລະ ໃຫ້ຄວາມຊ່ວຍເຫຼືອຢ່າງຈິງໃຈພ້ອມທັງກວດແກ້ເນື້ອໃນບົດວິທະຍານິພົນຂອງຂ້າພະເຈົ້າແຕ່ຕົ້ນຕະຫຼອດປາຍຈົນເຮັດໃຫ້ການຂຽນບົດວິທະຍານິພົນສະບັບນີ້ສຳເລັດຜົນຢ່າງຈົບງາມ.

ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບອົກຂອບໃຈມາຍັງຄະນະນຳມະຫາວິທະຍາໄລແຫ່ງຊາດລາວ, ຄະນະອຳນວຍການ ແລະ ບັນດາຄູອາຈານທຸກໆທ່ານທີ່ຢູ່ໃນວິທະຍາໄລຄູຫຼວງພະບາງ ເຊິ່ງຍາມໃດກໍໄດ້ສຶກສາອົບຮົມ, ຄອຍຊີ້ທິດເຍືອງທາງ ແລະ ຖ່າຍທອດວິຊາຄວາມຮູ້ອັນລ້ຳຄ່າໃຫ້ແກ່ຂ້າພະເຈົ້າຈົນກາຍເປັນຄົນທີ່ມີຄວາມຮູ້ທາງດ້ານວິຊາສະເພາະທີ່ສູງສົ່ງ ແລະ ເປັນຜູ້ສືບທອດທີ່ດີຂອງປະເທດຊາດ. ຂ້າພະເຈົ້າຂໍຈາລຶກບຸນຄຸນຂອງທ່ານໄວ້ໃນດວງໃຈຂອງຂ້າພະເຈົ້າຕະຫຼອດໄປ, ຂໍອວຍພອນແດ່ບັນດາທ່ານຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມສຸກກັບຊີວິດສ່ວນຕົວປາສະຈາກໂລກໄພໄຂ້ເຈັບພ້ອມທັງສືບຕໍ່ກໍ່ສ້າງຊັບພະຍາກອນມະນຸດຂອງປະເທດໃຫ້ມີຄຸນນະພາບສູງຂຶ້ນເລື້ອຍໆ.

ຂໍຂອບໃຈມາຍັງຄະນະຫ້ອງພ້ອມດ້ວຍນ້ອງໆນັກສຶກສາ ຊັ້ນປີ.3 ລະບົບ 12+4 ສາຍຄູພາສາອັງກິດ ທີ່ວິທະໄລຄູຫຼວງພະບາງ ທີ່ໃຫ້ຄວາມຮ່ວມໄມ້ຮ່ວມມືໂດຍສະເພາະໃນການຕອບແບບສອບຖາມ ແລະ ແບບທົດສອບເຮັດໃຫ້ຂ້າພະເຈົ້າສາມາດຂຽນບົດວິທະຍານິພົນສະບັບນີ້ສຳເລັດຕາມຈຸດປະສົງທີ່ວາງໄວ້, ຂໍໃຫ້ນັກສຶກສາທຸກຄົນຈົ່ງມີສຸຂະພາບເຂັ້ມແຂງປະສົບຜົນສຳເລັດໃນການຮຽນໝົດທຸກຄົນ.

**ຫົວຂໍ້ວິທະຍານິພົນ:** ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ສຳຫລັບນັກສຶກສາປີ 3, ລະບົບ 12+4 ສາຍຄູພາສາອັງກິດ ທີ່ວິທະຍາໄລຄູຫຼວງພະບາງ

**ຜູ້ຄົ້ນຄວ້າ:** ຄຳແພງ ເມືອງໂພໄຊ

**ປະລິນຍາ:** ປະລິນຍາໂທສຶກສາສາດ, ສາຂາວິຊາ ຫຼັກສູດ ແລະ ການສອນ ມະຫາວິທະຍາໄລແຫ່ງຊາດ, 2015

**ທີ່ປຶກສາວິທະຍານິພົນ:** ຮສ. ດຣ. ສາຍສະໝອນ ປຣະສອນໄຊ
ອາຈານ ລີນ້າ ພອນມາເຈດີ

156 ໜ້າ, MFED0046/11

# ບົດຄັດຫຍໍ້

ການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີແບບຈິກຊໍ່ (Jigsaw) ເປັນວິທີໜຶ່ງທີ່ເນັ້ນໃຫ້ຜູ້ຮຽນເປັນສຳຄັນເຊິ່ງຄູຈະຕ້ອງມີການກະກຽມ ແລະ ວາງແຜນເພື່ອຈັດກິດຈະກຳການຮຽນ-ການສອນຕາມຮູບແບບຂອງເທັກນິກຈິກຊໍ່ (Jigsaw) ເພື່ອຊ່ວຍໃຫ້ຜູ້ຮຽນມີຄວາມກະຕືລືລົ້ນເປັນໜ້າສົນໃຈຕໍ່ກັບການຮຽນ ແລະ ມີການສົ່ງເສີມໃຫ້ຜູ້ຮຽນໄດ້ເຝິກຝົນຫຼໍ່ຫຼອມຕົນເອງໂດຍໃຊ້ຄວາມຄິດຄວາມເຫັນ, ມີຄວາມຮັບຜິດຊອບຕໍ່ຕົນເອງ ແລະ ສົ່ງເສີມໃຫ້ຜູ້ຮຽນທີ່ມີຄວາມຮູ້ຄວາມສາມາດທີ່ແຕກຕ່າງກັນໄດ້ມີການຮຽນຮູ້ຮ່ວມກັນມີຄວາມຄິດຄວາມເຫັນແລກປ່ຽນເຊິ່ງກັນ ແລະ ກັນ ສົ່ງຜົນໃຫ້ຜູ້ຮຽນໄດ້ປະສົບຜົນສ□າເລັດໃນການຮຽນຂອງຕົນເອງ. ການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ດັ່ງກ່າວນີ້ມີຄວາມສຳຄັນ ແລະ ເປັນຜົນປະໂຫຍດຕໍ່ຜູ້ຮຽນ, ຜູ້ສອນໃຫ້ມີຄວາມສາມາດນຳໄປໃຊ້ຢ່າງມີປະສິດທິພາບຕາມເກນ80/80ເພື່ອສຶກສາຫາຄ່າດັດສະນີປະສິດທິຜົນການຮຽນ ແລະ ຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການຈັດການຮຽນ-ການສອນອ່ານຈັບໃຈຄວາມດ້ວຍວິທີແບບຈິກຊໍ່(Jigsaw)ສຳລັບນັກສຶກສາປີທີ່3 ລະບົບ 12+4 ສາຍຄູພາສາອັງກິດ ທີ່ວິທະຍາໄລຄູຫຼວງພະບາງຈຳນວນ 30 ຄົນ. ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາມີບົດສອນການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ຈຳນວນ 5 ບົດ, ແຕ່ລະບົດປະກອບມີແບບທົດສອບຍ່ອຍທ້າຍບົດສອນເຊິ່ງເປັນແບບປາລາໄນທີ່ປະກອບມີ 4 ຄຳຕອບ ແລະ ແຕ່ລະຊຸດມີ 5 ຂໍ້ ເຊິ່ງມີຄວາມຍາກງ່າຍ P=0.20–0.80 ແລະ ຄ່າ r=0.20–0.80.; ແບບທົດສອບສະນິດ 4 ຕົວເລືອກທີ່ເອົາໄປທົດລອງລວມທັງ 5 ບົດສອນມີ 35 ຂໍ້ເຊິ່ງມີຄ່າຄວາມຍາກ P=0.20 ເຖິງ 0.80 ແລະ ຄ່າອຳນາດຈຳແນກ r=0.20 ເຖິງ 0.80 ແລະ ຄັດເລືອກເອົາຂໍ້ສອບທີ່ມີຄຸນນະພາບຈຳນວນ 25 ຂໍ້ໄປທົດສອບ ກ່ອນຮຽນ ແລະ ຫຼັງຮຽນກັບນັກສຶກສາກຸ່ມຕົວຢ່າງທີ່ໄດ້ກະກຽມໄວ້.

ຜົນການຫາປະສິດທິພາບຂອງບົດສອນ, ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ສໍາລັບນັກສຶກສາປີ 3 ລະບົບ 12+4 ສາຍຄູພາສາອັງກິດທີ່ສ້າງຂຶ້ນຕາມເກນ 80/80 ເຊິ່ງມີຄ່າ $E_1/E_2$=80.53/84.00 ແລະ ມີຄ່າດັດສະນີປະສິດທິຜົນເທົ່າກັບ 0.66

ໂດຍສະຫຼຸບແລ້ວຜ່ານການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ນີ້ມີປະສິດທິພາບ ແລະ ປະສິດທິຜົນສາມາດນໍາໄປໃຊ້ເຂົ້າກັບການຮຽນ-ການສອນລາຍວິຊາຕ່າງໆໄດ້ ແລະ ຈະຊ່ວຍໃຫ້ນັກສຶກສາມີຜົນການຮຽນ ແລະ ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີແບບຈິກຊໍ່ (Jigsaw) ດີຂຶ້ນ.

| | |
|---|---|
| **TITLE:** | THE TEACHING-LEARNING OF READING COMPREHENSION BY USING JIGSAW FOR YEAR 3 STUDENTS 12+4 SYSTEM OF ENGLISH SECTION, LUANGPRABANG TEACHER TRAINING COLLEGE |
| **RESEARCHER:** | KHAMPHAENG MEUONGPHOSAY |
| **DEGREE:** | MASTER OF EDUCATION PROGRAM IN CURRICULUM AND INSTRUCTION, NATIONAL UNIVERSITY OF LAOS, 2015 |
| **THESIS ADVISORS:** | ASSOC.PROF.DR. SAYSAMONE PRASONEXAY<br>LYNA PHONEPRAJADY<br>156 PAGE MFED0046/11 |

# ABSTRACT


The teaching–Learning of reading comprehension through using Jigsaw is a way of teaching- Learning with an emphasis on the learners as an important role. This method also helps prepare plans of activities for teaching by using jigsaw to help students become interested in teaching - learning and to support the learners practice by themselves with their ideas. It also supports the learners who have different knowledge to study and share ideas together to help them succeed in their study.

Teaching–learning of reading comprehension English text by using jigsaw is very important and useful for learners and teachers to be able to be use effectively on range 80/80, the index effectiveness of the teaching–learning and study satisfaction of students with the teaching - learning of reading comprehension using Jigsaw. The sample group was year 3 students at Luangprabang teacher training college. There are 30 people; instruments used in this research were 5 lesson plans of teaching–learning reading texts in English using jigsaw. There 5 chapters and the quizzes after the end of lesson and the test consist of 5 points with difficulty P = 0.20 – 0.80 and r = 0.20–0.80.

The multiple choice test had four answers and with difficult- easy value at P = 0.20 – 0.80 and r = 0.20 – 0.80

After finish teaching 5 Lesson plans, 25 items of the test were administered before and after the trial.

Findings of research were as follows: The index effectiveness of teaching-learning of reading comprehension using Jigsaw by sample students years3 system 12+4 the English teacher students at Luangprabang teacher training college was 80/80 and valuable index was $E_1/E_2$=80.53/84.00 and there were index effectiveness of 0.66

Teaching–learning reading texts in English using jigsaw for students years3 system 12+4 the English teacher students at Luangprabang teacher training college had many advantages for students and teachers, especially its effectiveness for those who want to apply this teaching- learning method to use in their teaching in the future.

# ສາລະບານ

ໜ້າ


ໜ້າອະນຸມັດ.......... i

ປະກາດກຽດຕິຄຸນ.......... ii

ບົດຄັດຫຍໍ້ (ພາສາລາວ).......... iii

ບົດຄັດຫຍໍ້ (ພາສາອັງກິດ).......... v

ສາລະບານ.......... vi

ສາລະບານຕາຕະລາງ.......... ix

ສາລະບານພາບປະກອບ.......... x

**ບົດທີ 1 ບົດນ□າ.......... 1**

1. ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ.......... 1
2. ຄຳຖາມຄົ້ນຄວ້າ.......... 3
3. ຈຸດປະສົງຂອງການຄົ້ນຄວ້າ.......... 3
4. ສົມມຸດຖານຂອງການຄົ້ນຄວ້າ.......... 3
5. ຂອບເຂດການຄົ້ນຄວ້າ.......... 3
   - 5.2 ກຸ່ມຕົວຢ່າງ.......... 4
   - 5.3 ດ້ານເນື້ອໃນ.......... 4
6. ຂອບເຂດດ້ານຕົວປ່ຽນ.......... 5
7. ຜົນປະໂຫຍດຄາດວ່າຈະໄດ້ຮັບ.......... 5
8. ນິຍາມສັບສະເພາະ.......... 5

**ບົດທີ 2 ທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ.......... 7**

1. ຫຼັກສູດສ້າງຄູມັດທະຍົມລະດັບປະລິນຍາຕີລະບົບ 12+4.......... 7
2. ແນວຄິດທິດສະດີການຮຽນຮູ້.......... 14
3. ຫຼັກການ ແລະ ແນວຄິດການຮຽນຮູ້ແບບຮ່ວມມື.......... 15
   - 3.1 ຫຼັກການພື້ນຖານການຮຽນຮູ້.......... 15
   - 3.2 ຂະບວນການກຸ່ມ (Group Process).......... 16
   - 3.3 ທິດສະດີການຮຽນຮູ້ແບບຈິກຊໍ່ (Jigsaw Cooperative Learning).......... 17
4. ເທັກນິກການຮຽນຮູ້ແບບຮ່ວມມື.......... 20
5. ເທັກນິກຈິກຊໍ່ (Jigsaw).......... 24
   - 5.1 ຄວາມໝາຍຂອງເທັກນິກຈິກຊໍ່ (Jigsaw).......... 24

5.2 ການສອນແບບຈິກຊໍ່ (Jigsaw) ມີອົງປະກອບທີ່ສຳຄັນ 3 ດ້ານຄື.............. 26

5.4 ຂັ້ນຕອນການສອນແບບຈິກຊໍ່ (Jigsaw) ມີດັ່ງນີ້:.................................... 31

6. ຄວາມໝາຍການຮຽນຮູ້ແບບຮ່ວມມື.................................................... 32

7. ຄວາມໝາຍຂອງການອ່ານຈັບໃຈຄວາມ ................................................. 34

8. ທິດສະດີກ່ຽວກັບຄວາມເພິ່ງພໍໃຈ ........................................................ 35

8.1 ທິດສະດີຄວາມເພິ່ງພໍໃຈ.................................................................. 35

8.2 ຄວາມໝາຍຂອງຄວາມເພິ່ງພໍໃຈ (Satisfaction) .................................... 35

9. ການຫາປະສິດທິພາບ ........................................................................ 36

9.1 ການຫາປະສິດທິພາບຂອງນະວັດຕະກຳ .............................................. 36

9.2 ການຫາປະສິດຜົນການຮຽນຮູ້.......................................................... 37

9.3 ການວິເຄາະຄ່າ ແລະ ການຕີຄວາມໝາຍ.............................................. 38

9.4 ຂັ້ນຕອນການນຳຄ່າດັດສະນີປະສິດທິຜົນໄປໃຊ້ໃນການຮຽນ-ການສອນ......... 39

9.5 ການຫາປະສິດທິພາບການສອນ......................................................... 40

10. ການສ້າງແບບທົດສອບ .................................................................... 40

10.2 ຫຼັກການສ້າງແບບວັດຜົນສຳປະສິດທາງການຮຽນ ................................. 41

10.3 ການຫາຄຸນນະພາບຂອງຂໍ້ສອບ ........................................................ 43

11. ບົດຄົ້ນຄວ້າທີ່ກ່ຽວຂ້ອງ .................................................................... 45

**ບົດທີ 3 ວິທີການດຳເນີນການຄົ້ນຄວ້າ...................................................... 47**

1. ປະຊາກອນ ແລະ ກຸ່ມຕົວຢ່າງ ............................................................ 47

1.1 ປະຊາກອນ ................................................................................... 47

1.2 ກຸ່ມຕົວຢ່າງ................................................................................... 47

2. ຂັ້ນຕອນໃນການຄົ້ນຄວ້າ................................................................... 48

3. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ.............................................................. 48

3.1 ການສ້າງ ແລະ ການຫາຄຸນນະພາບຂອງເຄື່ອງມື .................................... 49

3.2 ການສ້າງ ແລະ ການຫາຄຸນນະພາບແບບທົດສອບວັດຜົນການຮຽນ
ຂອງນັກສຶກສາ............................................................................... 50

3.3 ການສ້າງ ແລະ ການຫາຄຸນນະພາບແບບສອບຖາມຄວາມເພິ່ງພໍໃຈ .......... 52

4. ການເກັບລວບລວມຂໍ້ມູນ ................................................................... 54

5. ການວິເຄາະຂໍ້ມູນ .......................................................................... 55

6. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ ........................................................................ 56
**ບົດທີ 4 ຜົນຂອງການວິເຄາະຂໍ້ມູນ ........................................................................ 58**
1. ຜົນການວິເຄາະປະສິດທິພາບບົດສອນ E1........................................................... 58
2. ຜົນການຫາຄ່າປະສິດທິພາບຂອງຜົນສຳເລັດ ($E_2$)........................................... 60
3. ຜົນການວິເຄາະຄ່າດັດສະນີປະສິດທິຜົນ (E.I) ຂອງການຮຽນ.......................... 62
4. ຜົນວິເຄາະແບບວັດຄວາມເພິ່ງພໍໃຈ.................................................................... 63
**ບົດທີ 5 ສະຫຼຸບຜົນ ອະພິປາຍຜົນ ແລະ ຂໍ້ສະເໜີແນະ............................................. 67**
1. ຈຸດປະສົງຂອງການຄົ້ນຄວ້າ.................................................................................. 67
2. ສະຫຼຸບຜົນການສຶກສາຄົ້ນຄ້ວາ ........................................................................... 67
3. ອະພິປາຍຜົນ ...................................................................................................... 68
4. ຂໍ້ສະເໜີແນະ ...................................................................................................... 70
4.1. ຂໍ້ສະເໜີແນະສຳລັບການນຳຜົນການສຶກສາໄປໃຊ້.............................................. 70
4.2. ຂໍ້ສະເໜີເພື່ອການສຶກສາຄັ້ງຕໍ່ໄປ........................................................................ 71
**ເອກະສານອ້າງອີງ ...................................................................................................... 72**
**ເອກະສານຊ້ອນທ້າຍ ................................................................................................... 76**
ກ. ໜັງສືສະເໜີຕ່າງໆ ............................................................................................... 77
ຂ. ເຄື່ອງມືການທີ່ໃຊ້ໃນການຄົ້ນຄວ້າ......................................................................... 81
ຂ. ລາຍຊື່ຜູ້ຊ່ຽວຊານກວດສອບເຄື່ອງມື ..................................................................... 128
ງ. ຄ່າດັດສະນີຄວາມສອດຄ່ອງຂອງເຄື່ອງມື (IOC) .................................................... 130
ຈ. ຜົນການຫາຄ່າຄວາມທ່ຽງຂອງເຄື່ອງມື ................................................................... 133
ສ. ຜົນການວິເຄາະຫາປະສິດທິພາບ .......................................................................... 135
**ປະຫວັດຂອງຜູ້ຄົ້ນຄ້ວາ .............................................................................................. 144**

# ສາລະບານຕາຕະລາງ

ໜ້າ

**ຕາຕະລາງທີ 1**: ສະແດງຄ່າຄ່າປະສິດທິພາບຂອງບົດສອນ ($E_1$) ................................ 58
**ຕາຕາລາງທີ 2:** ສະແດງຄະແນນຜົນສຳເລັດທາງການຮຽນ ($E_2$) .................................. 60
**ຕາຕາລາງທີ 3:** ສະແດງຄ່າປະສິດທິພາບ ແລະ ປະສິດດທິຜົນຂອງ ($E_1/E_2$).................. 61
**ຕາຕະລາງທີ 4:** ສະແດງຄ່າດັດສະນີປະສິດທິຜົນ (E.I) .............................................. 62
**ຕາຕະລາງທີ 5:** ສະແດງຄ່າປະສິດທິຜົນທາງການຮຽນຂອງນັກສຶກສາທີ່ມີຄວາມກ້າວໜ້າ .... 63
**ຕາຕະລາງທີ 6:** ຜົນການວິເຄາະຄວາມເພິງພໍໃຈ ........................................................ 63
**ຕາຕະລາງທີ 7:** ດ້ານເນື້ອໃນບົດຮຽນ ....................................................................... 64
**ຕາຕະລາງທີ 8:** ດ້ານການຮຽນຮູ້ແບບຮ່ວມມື. ............................................................ 64
**ຕາຕະລາງທີ 9:** ດ້ານການຈັດການຮຽນ-ການສອນ ....................................................... 65
**ຕາຕະລາງທີ 10:** ດ້ານການອ່ານຈັບໃຈຄວາມ ........................................................... 65
**ຕາຕະລາງທີ 11:** ດ້ານການສອນຂອງຄູ. ................................................................... 66
**ຕາຕະລາງທີ 12:** ບັນຍາກາດໃນຫ້ອງ. ...................................................................... 66

# ສາລະບານພາບປະກອບ

**ໜ້າ**

**ພາບປະກອບທີ 1:** ຂອບເຂດດ້ານຕົວປຸ່ງນ ................................................................ 5
**ພາບປະກອບທີ 2:** ຂັ້ນຕອນໃນການຄົ້ນຄວ້າ ............................................................... 4

# ບົດທີ 1

# ບົດນຳ

## 1. ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ

ໃນຍຸກປະຈຸບັນນີ້ວິຊາພາສາອັງກິດເປັນພາສາໜຶ່ງທີ່ມີຄວາມສຳຄັນທີ່ສຸດຢູ່ໃນສັງຄົມໂດຍສະເພາະໃນຍຸກສະໄໝທີ່ປະເທດເຮົາກຽມຕົວເຂົ້າສູ່ປະຊາຄົມອາຊຽນເຊິ່ງຫຼັກສູດໄດ້ເນັ້ນໃຫ້ຜູ້ຮຽນມີຄວາມສາມາດທາງດ້ານການຟັງ, ການເວົ້າ, ການອ່ານ ແລະ ການຂຽນ. ໂດຍສະເພາະແລ້ວຜູ້ຮຽນອາດມີເຈດຄະຕິທີ່ດີຕໍ່ພາສາອັງກິດ, ສາມາດໃຊ້ພາສາອັງກິດເພື່ອການສື່ສານຕາມສະຖານະການຕ່າງໆ ແລະ ຕາມຖະໜົນຫົນທາງ, ອ່ານໜັງສືພິມ, ອ່ານປ້າຍໂຄສະນາສິນຄ້າ, ອ່ານປະກາດຮັບສະມັກ ຫຼື ອ່ານກ່ຽວກັບສິນຄ້າຕ່າງໆໃຫ້ຖືກຕ້ອງຕາມຫຼັກພາສາ ແລະ ເຂົ້າໃຈວັດທະນາທຳແຕ່ລະຂອບເຂດ ແລະ ເຜົ່າຊົນໃຫ້ຫຼາກຫຼາຍພ້ອມທັງມີຄວາມສາມາດຖ່າຍທອດວັດທະນາທຳຂອງຕົນເຂົ້າສູ່ສັງຄົມໂດຍໃຊ້ພາສາອັງກິດເປັນສື່ກາງ. ທັກສະການອ່ານເປັນທັກສະໜຶ່ງທີ່ມີຄວາມສຳຄັນທີ່ສຸດຕໍ່ການຮຽນ-ການສອນພາສາອັງກິດໃນລະດັບວິຊາຊີບເຊິ່ງມີບົດບາດໃນຫຼັກສູດການສຶກສາເພາະມັນເປັນເຄື່ອງມືທີ່ຈະນຳໄປສູ່ຄວາມຮູ້, ຄວາມສາມາດເຮັດໃຫ້ປວງຊົນທັງຊາດໄດ້ຮັບຮູ້ຂ່າວສານ, ສະແຫວງຫາຄວາມຮູ້ຄວາມສາມາດ ແລະ ຊອກຫາແຫຼ່ງຂໍ້ມູນຕ່າງໆລວມທັງຂະບວນການສຶກສາ, ເສດຖະກິດ, ທ່ອງທ່ຽວລ້ວນແລ້ວແຕ່ໃຊ້ພາສາອັງກິດ ເພື່ອຊ່ວຍໃນການສື່ສານກັບຊາວຕ່າງປະເທດ ແລະ ກໍເພື່ອເສີມສ້າງຄວາມຮູ້ຄວາມສາມາດທາງດ້ານວິຊາການຕ່າງໆທີ່ເຮັດໃຫ້ຊີວິດປະຈຳວັນຄົນເຮົາຈຳເປັນຕ້ອງກ່ຽວຂ້ອງກັບພາສາອັງກິດຢ່າງຫຼີກລ້ຽງບໍ່ໄດ້ ແລະ ການອ່ານເປັນທັກສະທີ່ສຳຄັນຕໍ່ຄວາມກ້າວໜ້າທາງດ້ານເທັກໂນໂລຍີເຊິ່ງເຮັດໃຫ້ມະນຸດຮູ້ຈັກຄົ້ນຄ້ວາຫາຄວາມຮູ້ເພີ່ມເຕີມ ແລະ ການອ່ານກໍມີຄວາມສຳຄັນຕໍ່ຊີວິດຂອງມະນຸດໃນສັງຄົມ ປະຈຸບັນນີ້ພາສາອັງກິດເປັນເຄື່ອງມືໃນການຈັດການຮຽນ-ການສອນ ເພື່ອຊ່ວຍໃຫ້ຜູ້ຮຽນພັດທະນາສະໝອງໃຫ້ເກີດມີຄວາມຄິດທີ່ລິເລີ່ມສ້າງສາຫຼະສິ່ງໃໝ່ໆເຂົ້າມາ, ນອກນັ້ນການອ່ານຍັງເປັນເລື່ອງທີ່ສຳຄັນໃນການພັດທະນາອາລົມຈິດເພື່ອຊ່ວຍໃຫ້ຜູ້ອ່ານມີຄວາມສຸກ ແລະ ມ່ວນຊື່ນເພື່ອຜ່ອນຄາຍອາລົມ, ທັກສະການອ່ານແມ່ນມີບົດບາດສຳຄັນຕໍ່ການຮຽນ-ການສອນຢູ່ໃນໂຮງຮຽນວິທະຍາໄລຄູຫຼວງພະບາງໂດຍສະເພາະແມ່ນການອ່ານພາສາອັງກິດເພື່ອພັດທະນາທັກສະຂອງນັກສຶກສາທີ່ຢູ່ບົນພື້ນຖານຂອງທິດສະດີການຮຽນຮູ້ພາສາທີ່ສອງຂອງ Vygotsky Elli (1995 ອ້າງຈາກ ສິດາ ໂນສິກລັດ, 2548) ເຊື່ອວ່າການພັດທະນາການຂອງຜູ້ຮຽນສາມາດແບ່ງອອກເປັນຫຼາຍລະດັບ.

ວິທີການສອນອ່ານຈັບໃຈຄວາມພາສາອັງກິດເປັນວິທີໜຶ່ງທີ່ຊ່ວຍໃຫ້ຜູ້ຮຽນໄດ້ພັດທະນາຄວາມເຂົ້າໃຈໃນການອ່ານໃຫ້ມີປະສິດທິພາບ ແລະ ກໍໃຫ້ເກີດບັນຍາກາດການຮຽນ-ການສອນ ເພື່ອສົ່ງເສີມ ການພັດທະນາທັກສະວິທີສອນແບບຮ່ວມມື (Collaborative strategic Reading)

Klingner and Vaughn ອ້າງຈາກ ນິ່ງໄທ ວານຕາ (2549:738-747) ເປັນວິທີການສອນທີ່ບົນພື້ນຖານຂອງທິດສະດີການຮຽນຮູ້ທີ່ສຳຄັນຄື: ທິດສະດີສ້າງສະຫຼະຄວາມຮູ້ນິຍົມ (Constructivism) ທີ່ເຊື່ອວ່າອົງປະກອບຫຼັກທີ່ສຳຄັນຂອງການຮຽນຮູ້.

ພັກປະຊາຊົນປະຕິວັດລາວໄດ້ວາງທັດສະນະຕໍ່ວຽກງານການສຶກສາເຊິ່ງໄດ້ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ແນວລາວຮັກຊາດຢູ່ຂໍ້ 9 ວ່າ: ຢາກສົ່ງເສີມວັດທະນາທຳ ແລະ ຄວາມກ້າວໜ້າຂອງຊາດຕ້ອງໄດ້ເອົາໃຈໃສ່ການສຶກສານັບແຕ່ຂັ້ນປະຖົມ, ມັດທະຍົມ ແລະ ປະຊາສຶກສາຕ້ອງຈັດຕັ້ງປະຊາຊົນບັນດາເຜົ່າໄດ້ຮຽນອ່ານ, ຂຽນຢ່າງກວ້າງຂວາງໂດຍສະເພາະແມ່ນປະຊາຊົນທີ່ຢູ່ໃນເຂດພູດອຍຫ່າງໄກສອກຫຼີກ. ພາລາກິດການສຶກສາ (2011:29)

ການຈັດການຮຽນ-ການສອນພາສາອັງກິດເພື່ອຄວາມເຂົ້າໃຈໂດຍເນັ້ນໃສ່ຄວາມຮູ້ເດີມ ແລະເຝິກໃຫ້ໃຊ້ຂະບວນການຂອງຄວາມຄິດໃຊ້ກັບວິທີການຕ່າງໆໃນລະຫວ່າງການອ່ານຕາມແນວຄິດຈິດຕະວິທະຍາແບບບັນຫານິຍົມດັ່ງກ່າວເຊິ່ງຊ່ວຍໃຫ້ຜູ້ຮຽນມີຄວາມເຂົ້າໃຈຂອງຂະບວນການອ່ານ ແລະ ພັດທະນາຄວາມສາມາດໃນການທຳຄວາມເຂົ້າໃຈກັບສິ່ງຕົນເອງອ່ານໄດ້ຫຼາຍກ່ວາແບບເກົ່າ, ການສຶກສາໄດ້ຄົ້ນຄ້ວາຢັ້ງຢືນເຖິງປະສິດທິພາບການສອນແບບຈິກຊໍ່ (Jigsaw) ວິທີສອນອ່ານຈັບໃຈຄວາມມີຂັ້ນຕອນ ແລະ ຫຼັກການສອດຄ່ອງກັບຈຸດປະສົງຂອງການອ່ານຕາມແນວຄິດຈິດຕະວິທະຍາ, ການຈັດກິດຈະກຳການອ່ານເປັນການກະຕຸ້ນໃຫ້ຜູ້ອ່ານມີຄວາມສົນໃຈໃນເລື່ອງທີ່ຈະອ່ານເກີດການຄຳນຶງເຖິງສິ່ງທີ່ຈະອ່ານໃນລັກສະນະຄິດຍ້ອນຄືນ, ກິດຈະກຳການອ່ານເຮັດໃຫ້ຜູ້ອ່ານຄຳນຶງເຖິງໃນຄະນະຜູ້ອ່ານຕີຄວາມໝາຍໃຫ້ກັບສິ່ງທີ່ອ່ານໂດຍເນັ້ນໃສ່ຂະບວນການຄິດຂອງຜູ້ອ່ານໃຫ້ຍົກຄວາມຮູ້ເດີມກັບບົດອ່ານ

ຈາກການຈັດການຮຽນ-ການສອນຜ່ານມາເຫັນວ່າຂະບວນການຮຽນ-ການສອນບໍ່ສາມາດຕອບສະໜອງຕາມຂະບວນການຮຽນຂອງຜູ້ຮຽນໄດ້, ຄູຍຶດເອົາການສອນແບບດັ່ງເດີມໂດຍໃຊ້ວິທີການສອນແບບບອກເລົ່າ ແລະ ບັນລະຍາຍເປັນຫຼັກ, ຄູບໍ່ມີການປ່ຽນແປງພຶດຕິກຳການສອນຄູສ່ວນຫຼາຍບໍ່ໄດ້ເນັ້ນໃຫ້ຜູ້ຮຽນໄດ້ສະແດງຄຳຄິດຄຳເຫັນ ແລະ ສະແຫວງຫາຄວາມຮູ້ດ້ວຍຕົນເອງ, ຜູ້ຮຽນມີສ່ວນຮ່ວມໃນການຈັດກິດຈະກຳການຮຽນ-ການສອນໜ້ອຍ ແລະ ບໍ່ສາມາດນຳຄວາມຮູ້ທີ່ໄດ້ໄປໃຊ້ໃຫ້ເປັນປະໂຫຍດໃນຊີວິດປະຈຳວັນໄດ້, ດັ່ງນັ້ນຈຶ່ງສົ່ງຜົນຕໍ່ການພັດທະນາທັກສະການອ່ານພາສາອັງກິດໂດຍການອ່ານຈັບໃຈຄວາມຂອງນັກສຶກສາເຫັນວ່າຜົນທາງການຮຽນພາສາອັງກິດຂອງນັກສຶກສາຍັງຕ່ຳກ່ວາເກນເຊິ່ງມັນສະແດງອອກຄະແນນກວດກາປະຈຳເດືອນ ແລະ ຄະແນນສອບເສັງທ້າຍພາກຮຽນແມ່ນໄດ້ພຽງແຕ່ 45-50% ຕໍ່ຈຳນວນນັກສຶກສາ 30 ຄົນ ແລະ ການສອບເສັງທ້າຍພາກຮຽນຜົນການຮຽນຂອງນັກສຶກສາແມ່ນໄດ້ 50-55 %, ພ້ອມນັ້ນການສອນດ້ວຍວິທີສອນແບບດັ່ງເດີມທີ່ກ່າວມານັ້ນເຫັນວ່ານັກສຶກສາບໍ່ສາມາດພັດທະນາທັກສະດ້ານການອ່ານຂອງຕົນເອງໃຫ້ສູງຂຶ້ນໄດ້, ຜົນການຮຽນຂອງນັກສຶກສາຍັງຕ່ຳ. ສະນັ້ນ, ຜູ້ຄົ້ນຄວ້າຈຶ່ງສົນໃຈສຶກສາຄົ້ນຄ້ວານຳເອົາວິທີສອນແບບຈິກຊໍ່ນີ້ເປັນການສອນທີ່ນັກວິຊາການຫຼາຍໆທ່ານໄດ້ນຳໃຊ້ ແລະ ມີປະສິດທິຜົນມາແລ້ວ, ຖ້ານັກສຶກສາ ປີ 3, ລະບົບ 12+4

ສາຍຄູພາສາອັງກິດທີ່ວິທະຍາໄລຄູຫຼວງພະບາງ ຫາກໄດ້ຮຽນດ້ວຍວິທີດັ່ງກ່າວຈະຕ້ອງມີຜົນການຮຽນດີຂຶ້ນ.

## 2. ຄໍາຖາມຄົ້ນຄວ້າ

1. ປະສິດທິພາບບົດສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ໄດ້ຕາມເກນ 80/80 ຫຼື ບໍ່ ?

2. ຜົນການຮຽນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ມີປະສິດທິຜົນຢູ່ໃນລະດັບໃດ?

3.ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ຢູ່ໃນລະດັບໃດ?

## 3. ຈຸດປະສົງຂອງການຄົ້ນຄວ້າ

1. ເພື່ອສຶກສາປະສິດທິພາບບົດສອນການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່.

2. ເພື່ອສຶກສາປະສິດທິຜົນຂອງການຮຽນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່.

3. ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ຕາມເກນ 80/80.

## 4. ສົມມຸດຖານຂອງການຄົ້ນຄວ້າ

1. ປະສິດທິພາບຂອງບົດສອນການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ສູງກ່ວາເກນທີ່ກໍານົດໄວ້.

2. ເພື່ອສຶກສາປະສິດທິຜົນການຮຽນຂອງນັກສຶກສາການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດຢູ່ໃນລະດັບສູງ.

3. ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ຢູ່ໃນລະດັບດີຫຼາຍ.

## 5. ຂອບເຂດການຄົ້ນຄວ້າ

ຂອບເຂດການສຶກສາຄົ້ນຄ້ວາໃນຄັ້ງນີ້ມີດັ່ງນີ້:

### 5.1 ດ້ານປະຊາກອນ

ປະຊາກອນຄືນັກສຶກສາຊັ້ນປີທີ 3, ລະບົບ 12+4 ສາຍຄູພາສາອັງກິດໃນພາກຮຽນທີ່ II ສົກຮຽນ 2013-14 ທີ່ວິທະຍາໄລຄູຫລວງພະບາງຈໍານວນ 1 ຫ້ອງ, ມີນັກສຶກສາທັງໝົດ 45 ຄົນ, ຍິງ 18 ຄົນ.

### 5.2 ກຸ່ມຕົວຢ່າງ

ນັກສຶກສາປີທີ 3, ລະບົບ 12+4 ສາຍຄູພາສາອັງກິດໃນພາກຮຽນທີ່ II ສົກຮຽນ 2013-2014 ທີ່ວິທະຍາໄລຄູຫລວງພະບາງຈຳນວນ 1 ຫ້ອງ, ມີນັກສຶກສາຈຳນວນ 30 ຄົນ ຍິງ 11 ຄົນໂດຍໃຊ້ ການເລືອກແບບເຈາະຈົງ (Purposive Sampling).

### 5.3 ດ້ານເນື້ອໃນ

ການສຶກສາໃນຄັ້ງນີ້ເພື່ອສຶກສາຄົ້ນຄ້ວາເນື້ອໃນການສອນອ່ານຈັບໃຈຄວາມພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw), ການຮຽນພາສາອັງກິດປີທີ 3, ລະບົບ 12+4 ທີ່ວິທະຍາໄລຄູຫຼວງພະບາງມີຈຳນວນ 5 ບົດ ດັ່ງນີ້:

1. Celebrating Lao New Year
2. Lightning
3. Killer Bees
4. Law about children
5. The Orphan Became King

ວິທີສອນແບບຈິກຊໍ່ (Jigsaw) ເປັນຮູບແບບການຮຽນ-ການສອນທີ່ສົ່ງເສີມການຮຽນຮູ້ແບບຮ່ວມມືຮູບແບບໜຶ່ງ ແລະ ວິທີການຈັດການຮຽນ-ການສອນເປັນກຸ່ມເພື່ອສຶກສາເນື້ອໃນຕາມຂະບວນການຮຽນ-ການສອນແບບຈິກຊໍ່ (ທິດສະໜາ ແຂມມະນີ, 2552).

ວິທີຈັດກຸ່ມແມ່ນອີງຕາມຄວາມເໝາະສົມຂອງນັກສຶກສາ ແລະ ສະຖານທີ່ຮຽນຄື:

1. ຈັດຜູ້ຮຽນເຂົ້າກຸ່ມໂດຍປະກອບມີນັກສຶກສາເກັ່ງ, ກາງ ແລະ ອ່ອນ, ກຸ່ມລະ 4 ຄົນ
2. ສະມາຊິກໃນກຸ່ມສຶກສາເນື້ອໃນບົດຮຽນ ແລະ ຫາຄຳຕອບໃນປະເດັ່ນບັນຫາທີ່ຜູ້ສອນມອບໝາຍໃຫ້
3. ສະມາຊິກໃນກຸ່ມແຕ່ລະກຸ່ມແຈກຍາຍກັນໄປຮ່ວມກັບສະມາຊິກກຸ່ມອື່ນເຊິ່ງໄດ້ຮັບເນື້ອໃນດຽວກັນແລ້ວຕັ້ງເປັນກຸ່ມໃໝ່ແລະ ຮ່ວມກັນທຳຄວາມເຂົ້າໃຈເນື້ອໃນບົດຮຽນຢ່າງລະອຽດ ແລະ ຮ່ວມກັນອະທິບາຍຄຳຕອບປະເດັ່ນບັນຫາທີ່ຜູ້ສອນມອບໝາຍໃຫ້.
4. ສະມາຊິກກຸ່ມໃໝ່ກັບໄປສູ່ກຸ່ມເດີມແຕ່ລະກຸ່ມຊ່ວຍສອນໝູ່ຄູ່ພາຍໃນກຸ່ມເດີມໃຫ້ເຂົ້າໃຈເນື້ອໃນບົດຮຽນທີ່ຕົນເອງໄປສຶກສາຮ່ວມກັບກຸ່ມໃໝ່.
5. ນັກສຶກສາທຸກຄົນເຮັດແບບທົດສອບ, ແຕ່ລະຄົນຈະໄດ້ຄະແນນເປັນຂອງບຸກຄົນ ແລະ ນຳເອົາຄະແນນບຸກຄົນໃນກຸ່ມເກົ່າມາລວມກັນແລ້ວມາຫານຄ່າສະເລ່ຍເປັນຄະແນນກຸ່ມ.

## 6. ຂອບເຂດດ້ານຕົວປ່ຽນ




**ພາບປະກອບທີ 1:** ຂອບເຂດດ້ານຕົວປ່ຽນ

## 7. ຜົນປະໂຫຍດຄາດວ່າຈະໄດ້ຮັບ

1. ໄດ້ຮູ້ເຖິງປະສິດທິພາບຂອງບົດສອນແບບຈິກຊໍ່.
2. ຮູ້ເຖິງປະສິດທິຜົນການຮຽນຂອງນັກສຶກສາຕາມຮູບແບບຈິກຊໍ່ ແລະ ຂອງຄູດ້ວຍການສອນແບບຈິກຊໍ່ (Jigsaw).
3. ຮູ້ເຖິງຄວາມເພິ່ງພໍໃຈຂອງຜູ້ຮຽນຕໍ່ການສອນແບບຈິກຊໍ່.
4. ຄູສອນວິຊາຕ່າງໆສາມາດນໍາໃຊ້ວິທີສອນແບບຈິກຊໍ່ (Jigsaw) ໄປນໍາໃຊ້ເຂົ້າໃນການສອນຂອງຕົນເອງໄດ້.
5. ເພື່ອເປັນການພັດທະນາທັກສະການອ່ານພາສາອັງກິດຂອງນັກສຶກສາໃຫ້ດີຂຶ້ນ.

## 8. ນິຍາມສັບສະເພາະ

**ວິທີສອນແບບຈິກຊໍ່** ໝາຍເຖິງ ວິທີສອນຈັດນັກສຶກສາເປັນກຸ່ມເຊິ່ງນັກສຶກສາແຕ່ລະກຸ່ມໄດ້ແລກປ່ຽນການຮຽນຮູ້ເຊິ່ງກັນ ແລະ ກັນ.

**ປະສິດທິພາບຂອງບົດສອນອ່ານຈັບໃຈຄວາມ** ໝາຍເຖິງຄວາມສາມາດຂອງຜູ້ຮຽນທີ່ເຮັດໃຫ້ຜູ້ຮຽນເກີດການຮຽນຮູ້ຕາມຈຸດປະສົງໂດຍໃຊ້ເກນ 80/80.

$E_1$ **ຕົວທໍາອິດ** ໝາຍເຖິງເປີເຊັນຂອງຄະແນນສະເລ່ຍຂອງນັກສຶກສາທຸກຄົນທີ່ໄດ້ຈາກການປະເມີນທາງການຮຽນ ແລະ ການທົດສອບຍ່ອຍແຕ່ລະບົດສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່.

$E_2$ **ຕົວຫຼັງ** ໝາຍເຖິງ ເປີເຊັນຂອງຄະແນນສະເລ່ຍຂອງນັກສຶກສາທຸກຄົນທີ່ໄດ້ຈາກການເຮັດແບບທົດສອບວັດຜົນທາງສະຖິຕິທາງການອ່ານຈັບໃຈຄວາມຫຼັງຮຽນດ້ວຍວິທີສອນແບບຈິກຊໍ່.

**ດັດສະນີປະສິດທິຜົນ (The Effectiveness Index: E.I)** ໝາຍເຖິງ ຄ່າທີ່ສະແດງເຖິງຄວາມກ້າວໜ້າໃນການຮຽນຂອງຜູ້ຮຽນໂດຍທຽບຄະແນນທີ່ເພີ່ມຂຶ້ນຈາກຄະແນນການທົດສອບກ່ອນຮຽນກັບຄະແນນທີ່ໄດ້ຈາກການທົດສອບຫຼັງຮຽນ ແລະ ຄະແນນເຕັມ ຫຼື ຄະແນນສູງສຸດກັບຄະແນນທີ່ໄດ້ຈາກການທົດສອບກ່ອນຮຽນ,ຫຼັງຈາກທີ່ນັກສຶກສາຮຽນດ້ວຍວິທີສອນແບບຈິກຊໍ່.

**ການສອນອ່ານຈັບໃຈຄວາມ** ໝາຍເຖິງ ການເຂົ້າໃຈເນື້ອໃນບົດເລື່ອງທີ່ອ່ານ, ອ່ານແລ້ວເຂົ້າໃຈໃນສະຫຼະສຳຄັນຂອງເລື່ອງທີ່ອ່ານ ແລະ ສະຫຼຸບຄວາມຈາກເລື່ອງທີ່ອ່ານໄດ້.

**ຜົນການຮຽນ** ໝາຍເຖິງ ຄະແນນເຊິ່ງເປັນຕົວແທນຄວາມຮັບຮູ້ຂອງນັກສຶກສາສາຍຄູພາສາອັງກິດປີທີ່3 ຕໍ່ກັບການອ່ານຈັບໃຈຄວາມບົດເລື່ອງເປັນພາສາອັງກິດດ້ວຍການສອນແບບຈິກຊໍ່.

**ຄວາມເພິງພໍໃຈ** ໝາຍເຖິງ ຄວາມຮູ້ສຶກມັກ, ຍິນດີ, ເຕັມໃຈ, ມີເຈດຕະຕິທີ່ດີຕໍ່ສິ່ງທີ່ໄດ້ເຮັດ ແລະ ສາມາດຕອບສະໜອງຄວາມຕ້ອງການຂອງບຸກຄົນນັ້ນ, ມີຄວາມເພິງພໍໃຈໃນການຮຽນຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນອ່ານຈັບໃຈຄວາມດ້ວຍວິທີສອນແບບຈິກຊໍ່.

**ການຮຽນແບບກຸ່ມຮ່ວມມື** ໝາຍເຖິງ ການຈັດການຮຽນ-ການສອນເພື່ອແບ່ງນັກສຶກສາອອກ ເປັນກຸ່ມຍ່ອຍ, ໃຫ້ຜູ້ຮຽນເຮັດວຽກຂອງຕົນໂດຍສະມາຊິກມີເປົ້າໝາຍຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ການໝູນວຽນເຮັດໜ້າທີ່ກັນເພື່ອໃຫ້ຂໍ້ມູນຍ້ອນກັບແກ່ກັນ ແລະ ຮັບລາງວັນຕາມຜົນງານທີ່ກຸ່ມເຮັດໄດ້.

**ບົດສອນ**ໝາຍເຖິງແຜນການສອນ ຫຼື ໂຄງການທີ່ຜູ້ສຶກສາຄົ້ນຄ້ວາຂຽນເພື່ອໃຊ້ເປັນແນວທາງໃນການປະຕິບັດການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່.

**ແບບທົດສອບວັດຜົນສະຖິຕິທາງການຮຽນ** ໝາຍເຖິງແບບທົດສອບທີ່ຜູ້ສຶກສາຄົ້ນຄ້ວາສ້າງຂຶ້ນເພື່ອວັດຄວາມຮູ້, ຄວາມເຂົ້າໃຈໃນການຮຽນຂອງນັກສຶກສາທີ່ຮຽນວິຊາການອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່.

# ບົດທີ 2

# ທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ການສຶກສາຄົ້ນຄວ້າໃນຄັ້ງນີ້ ຜູ້ສຶກສາໄດ້ຄົ້ນຄວ້າ ແລະ ສຶກສາເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງມີດັ່ງນີ້:

1. ຫຼັກສູດການສອນພາສາອັງກິດ.
2. ແນວຄິດທິດສະດີການຮຽນຮູ້.
3. ການຮຽນຮູ້ແບບຮ່ວມມື.
4. ການຮຽນດ້ວຍກຸ່ມຮ່ວມມືແບບຈິກຊໍ່.
5. ແຜນການສອນແບບຈິກຊໍ່.
6. ຄວາມໝາຍ.
7. ຄວາມເພິ່ງພໍໃຈ.
8. ບົດຄົ້ນຄວ້າທີ່ກ່ຽວຂ້ອງພາຍໃນ ແລະ ຕ່າງປະເທດ.

## 1. ຫຼັກສູດສ້າງຄູມັດທະຍົມລະດັບປະລິນຍາຕີລະບົບ 12+4

ຫຼັກສູດສ້າງຄູມັດທະຍົມ ລະດັບປະລິນຍາຕີ ລະບົບ 12+4 ມີຈຸດປະສົງເພື່ອແນໃສ່ສ້າງໃຫ້ນັກສຶກສາຄູມີດັ່ງນີ້:

1. ມີຄວາມພ້ອມໃນຄວາມເປັນຄູ, ມີວິໄສທັດທີ່ກວ້າງໄກ ແລະ ມີຈັນຍາບັນທາງດ້ານວິຊາຊີບຄູ; ສອດຄ່ອງກັບ 3 ລັກສະນະ ແລະ 5 ຫຼັກມູນຂອງການສຶກສາ.

2. ສາມາດແກ້ໄຂບັນຫາຢ່າງມີຫົວຄິດປະດິດສ້າງ, ມີຄວາມຮັບຜິດຊອບ ແລະ ພັດທະນາຄວາມຮູ້ ແລະ ຄວາມສາມາດຂອງຕົນໃນອະນາຄົດ.

3. ມີຄວາມຮູ້ຄວາມສາມາດທາງດ້ານວິຊາຊີບຄູ; ສາມາດສອນໄດ້ທຸກຂັ້ນໃນຊັ້ນມັດທະຍົມສຶກສາ (ສອນໄດ້ແຕ່ ມ.1 ຫາ ມ.7) ແລະ ພົວພັນຊ່ວຍເຫຼືອຄູສອນຢູ່ໃນໂຮງຮຽນ ພ້ອມທັງເປັນຫຼັກແຫຼ່ງທາງດ້ານວິຊາການ.

| ໂຄງຮ່າງຫຼັກສູດລາຍວິຊາ<br>ຊື່ວິຊາ: Reading 3<br>ຫຼັກສູດສ້າງຄູມັດທະຍົມລະບົບ 12+4<br>ລະຫັດວິຊາ: 0910306 | |
|---|---|
| Program | 4 year Program Semester on Year 2 |
| Period | 48 hours |
| Credit | 2(1-2-0) |
| Credit explanation | This subject has two credits. There are 2 hours in seminar. One hour for lectures. The total teaching is 16 weeks |
| Objectives | After learning this subject, students will be able to:<br>1. Use more new vocabularies to summarize the main idea of the text.<br>2. Predict, skim, scan the text to get the gist of text. |
| Synopsis | Experiences about living life, general knowledge customs, food, nature's disasters, inventions, the law and readings from literature. |
| Method | There are 8 units with 16 chapters will be taught in the book. In addition, students will be working in pairs, group to share their ideas and summarize the text to present in the class. |
| week1 | **Unit1 : Your personality**<br>**Chapter 1 : Right Brain or left brain ?**<br>**1. pre-reading Activity**<br>• questions discussion in pairs<br>• Matching words to meaning<br>**2. Text reading**<br>• Read the text in using skimming and scanning techniques and discuss in whole class.<br>**3. Vocabulary activity**<br>• Complete the sentences with the words given, then answer the questions.<br>**4. Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity, it is the supplementary or self study for students )** |
| Week2 | **Chapter 2 : The shape of the Face**<br>**1. pre-reading Activity**<br>• questions discussion in pairs<br>• Matching words to meaning<br>**2. Text reading**<br>• Read the text in using skimming and scanning techniques and discuss in whole class.<br>**3. Vocabulary activity**<br>• Complete the sentences with the words given, then answer the questions. |

| | |
|---|---|
| | 4. **Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity, it is the supplementary or self study for students )** |
| week 3 | **Unit 2 : Food**<br>**Chapter 3 : Potatoes**<br>1. **pre-reading Activity**<br>• questions discussion in pairs<br>• Matching words to meaning<br>2. **Text reading**<br>• Read the text in using skimming and scanning techniques and discuss in whole class.<br>3. **Vocabulary activity**<br>• Complete the sentences with the words given, then answer the questions.<br>4. **Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity, it is the supplementary or self study for students)** |
| Week 4 | **Chapter 4 : Delicacies**<br>1. **pre-reading Activity**<br>• questions discussion in pairs<br>• Matching words to meaning<br>2. **Text reading**<br>• Read the text in using skimming and scanning techniques and discuss in whole class.<br>3. **Vocabulary activity**<br>• Complete the sentences with the words given, then answer the questions.<br>4. **Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity in the textbook, it is the supplementary or self study for students )** |
| Week 5 | **Unit 3: Customs and Traditions**<br>**Chapter 5: The Persian New Year**<br>1. **pre-reading Activity**<br>• questions discussion in pairs<br>• Matching words to meaning<br>2. **Text reading**<br>• Read the text in using skimming and scanning techniques and discuss in whole class. |

| | |
|---|---|
| | 3. **Vocabulary activity**<br>• Complete the sentences with the words given, then answer the questions.<br>4. **Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note: For writing activity in the textbook, it is the supplementary or self study for students )** |
| week 6 | **Chapter 6: Celebrating Fifteen**<br>1. **pre-reading Activity**<br>• questions discussion in pairs<br>• Matching words to meaning<br>2. **Text reading**<br>• Read the text in using skimming and scanning techniques and discuss in whole class.<br>3. **Vocabulary activity**<br>• Complete the sentences with the words given, then answer the questions.<br>4. **Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity in the textbook, it is the supplementary or self study for students )** |
| Week 7 | **Unit4: Famous People**<br>**Chapter 7 : Louis Braille**<br>1. **Pre-reading Activity**<br>• questions discussion in pairs<br>• Matching words to meaning<br>2. **Text reading**<br>• Read the text in using skimming and scanning techniques and discuss in whole class.<br>3. **Vocabulary activity**<br>• Complete the sentences with the words given, then answer the questions.<br>4. **Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity in the textbook, it is the supplementary or self study for students )** |
| Week 8 | **Chapter 8 : The World's Most Unusual Millionaire**<br>1. **pre-reading Activity**<br>• questions discussion in pairs<br>• Matching words to meaning<br>2. **Text reading** |

| | |
|---|---|
| | • Read the text in using skimming and scanning techniques and discuss in whole class.<br>3. **Vocabulary activity**<br>• Complete the sentences with the words given, then answer the questions.<br>4. **Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity in the textbook, it is the supplementary or self study for students )** |
| week 9 | **Unit 5: Nature's Disasters**<br>**Chapter 9: Lightning**<br>1. **pre-reading Activity**<br>• questions discussion in pairs<br>• Matching words to meaning<br>2. **Text reading**<br>• Read the text in using skimming and scanning techniques and discuss in whole class.<br>3. **Vocabulary activity**<br>• Complete the sentences with the words given, then answer the questions.<br>4. **Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity in the textbook, it is the supplementary or self study for students )** |
| Week 10 | **Chapter10: Killer Bees**<br>1. **pre-reading Activity**<br>• questions discussion in pairs<br>• Matching words to meaning<br>2. **Text reading**<br>• Read the text in using skimming and scanning techniques and discuss in whole class.<br>3. **Vocabulary activity**<br>• Complete the sentences with the words given, then answer the questions.<br>4. **Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity in the textbook, it is the supplementary or self study for students )** |

| | |
|---|---|
| week 11 | **Unit 6 : Inventions**<br>**Chapter 11: Corn Flakes**<br>**1. pre-reading Activity**<br>• questions discussion in pairs<br>• Matching words to meaning<br>**2. Text reading**<br>• Read the text in using skimming and scanning techniques and discuss in whole class.<br>**3. Vocabulary activity**<br>• Complete the sentences with the words given, then answer the questions .<br>**4. Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity in the textbook, it is the supplementary or self study for students )** |
| Week 12 | **Chapter 12 : Robots**<br>**1. pre-reading Activity**<br>• questions discussion in pairs<br>• Matching words to meaning<br>**2. Text reading**<br>• Read the text in using skimming and scanning techniques and discuss in whole class.<br>**3. Vocabulary activity**<br>• Complete the sentences with the words given, then answer the questions.<br>**4. Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity in the textbook, it is the supplementary or self study for students )** |
| week 13 | **Unit 7 : The Law**<br>**Chapter 13 : It's the Law**<br>**1. pre-reading Activity**<br>• questions discussion in pairs<br>• Matching words to meaning<br>**2. Text reading**<br>• Read the text in using skimming and scanning techniques and discuss in whole class.<br>**3. Vocabulary activity**<br>• Complete the sentences with the words given, then answer the questions.<br>**4. Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False |

| | |
|---|---|
| | • Group discussion to answer the questions<br>**( Note : For writing activity in the textbook, it is the supplementary or self study for students )** |
| Week 14 | **Chapter 14 : Laws About Children**<br>**1. pre-reading Activity**<br>• questions discussion in pairs<br>• Matching words to meaning<br>**2. Text reading**<br>• Read the text in using skimming and scanning techniques and discuss in whole class.<br>**3. Vocabulary activity**<br>• Complete the sentences with the words given, then answer the questions.<br>**4. Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity in the textbook, it is the supplementary or self study for students )** |
| week 15 | **Unit 8 : Readings From Literature**<br>**Chapter 15 : A Poem**<br>**1. pre-reading Activity**<br>• questions discussion in pairs<br>• Matching words to meaning<br>**2. Text reading**<br>• Read the text in using skimming and scanning techniques and discuss in whole class.<br>**3. Vocabulary activity**<br>• Complete the sentences with the words given, then answer the questions.<br>**4. Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity in the textbook, it is the supplementary or self study for students )** |
| Week 16 | **Chapter 16: A Folktale**<br>**1. pre-reading Activity**<br>• questions discussion in pairs<br>• Matching words to meaning<br>**2. Text reading**<br>• Read the text in using skimming and scanning techniques and discuss in whole class.<br>**3. Vocabulary activity**<br>• Complete the sentences with the words given, then answer the questions. |

| | |
|---|---|
| | **4. Comprehension**<br>• Looking for the main ideas and circle the best answer<br>• Looking for details to circle True or False<br>• Group discussion to answer the questions<br>**( Note : For writing activity in the textbook, it is the supplementary or self study for students )** |
| Evaluation | 1.Class attendance 10 %<br>2. Classroom Participation 15 %<br>3. Assignment 15%<br>4. Midterm and Monthly 25 %<br>5. Semester Examination 35 % |
| References | Weaving It Together; Connecting Reading and Writing. MILADA BROUKAL .Second Edition 2004. |
| Writer | Mrs. Bounseng KHOUNPHON Mobile: 22420090<br>Bankeun TTC |

## 2. ແນວຄິດທິດສະດີການຮຽນຮູ້

ການຄົ້ນຄວ້າໃນຄັ້ງນີ້ຜູ້ຄົ້ນຄ້ວາໄດ້ສຶກສາຄົ້ນຄວ້າຕາມແນວຄິດທິດສະດີການຮຽນຮູ້ແບບຮ່ວມມື (Theory of Co-operative Learning) ຕ່າງໆດັ່ງນີ້:

Johnson, D.W and Johnson, R.T (1994:31-32 ອ້າງຈາກ ທິດສະໜາ ແຂມມະນີ, 2552) ໄດ້ລວບລວມທິດສະດີການຮຽນຮູ້ແບບຮ່ວມມືໄວ້ດັ່ງນີ້:

ກ່າວວ່າ: ການພົວພັນລະຫວ່າງຜູ້ຮຽນມີ 3 ລັກສະນະຄື:

1.1. ລັກສະນະແຂ່ງຂັນກັນໃນການສຶກສາຮຽນຮູ້, ຜູ້ຮຽນແຕ່ລະຄົນພະຍາຍາມຮຽນໃຫ້ໄດ້ດີກ່ວາຄົນອື່ນເພື່ອໃຫ້ໄດ້ຄະແນນດີ, ໄດ້ຮັບການຍ້ອງຍໍສັນລະເສີນ ຫຼື ໄດ້ຮັບການຕອບແທນໃນລັກສະນະຕ່າງໆ.

1.2. ລັກສະນະຕ່າງຄົນຕ່າງຮຽນຄື: ແຕ່ລະຄົນກໍ່ຕ່າງຮັບຜິດຊອບດູແລຕົນເອງໃຫ້ເກີດການຮຽນຮູ້ບໍ່ຫຍຸ້ງກ່ຽວກັບຄົນອື່ນໆ:

1.3. ລັກສະນະຮ່ວມມືກັນໃນການຮຽນຮູ້ຄືແຕ່ລະຄົນຕ່າງກໍຮັບຜິດຊອບໃນການຮຽນຮູ້ຂອງຕົນເອງ ແລະ ໃນລັກສະນະດຽວກັນກໍຕ້ອງຊ່ວຍໃຫ້ສະມະຊິກຄົນອື່ນຮຽນຮູ້.

1.4. ການຮຽນຮູ້ເປັນກຸ່ມຍ່ອຍໂດຍສະມະຊິກກຸ່ມມີຄວາມສາມາດແຕກຕ່າງກັນປະມານ 3-6 ຄົນຊ່ວຍເຫຼືອກັນຮຽນເພື່ອໄປສູ່ເປົ້າໝາຍຂອງກຸ່ມໂດຍຜູ້ຮຽນມີປະຕິສຳພັນໃນລະຫວ່າງຜູ້ຮຽນໃນລັກສະນະແຂ່ງຂັນກັນ, ຕ່າງຄົນກໍຕ່າງຮຽນ ແລະ ຮ່ວມມືກັນ ຫຼື ຊ່ວຍເຫຼືອກັນໃນການຮຽນຮູ້, ໃນການຈັດການຮຽນ-ການສອນຕາມທິດສະດີນີ້ຈະເນັ້ນໃຫ້ຜູ້ຮຽນຊ່ວຍກັນໃນການຮຽນຮູ້ໂດຍມີກິດຈະກຳທີ່ໃຫ້ຜູ້ຮຽນມີການເພິ່ງພາອາໄສກັນໃນການຮຽນຮູ້, ມີການປຶກສາຫາລືກັນຢ່າງໃກ້ສິດ, ມີການພົວພັນກັນ, ມີການເຮັດວຽກຮ່ວມກັນເປັນກຸ່ມ, ການວິເຄາະຂະບວນການຂອງກຸ່ມ ແລະ ແບ່ງໜ້າທີ່ຮັບຜິດຊອບວຽກຮ່ວມກັນ.

ວັດສະລາ ເວດບັນພິດ (2550) ກ່າວວ່າ ການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ່ (Jigsaw) ເປັນວິທີການຈັກການຮຽນ-ການສອນຮູບແບບໜຶ່ງທີ່ເນັ້ນຜູ້ຮຽນເປັນສຳຄັນເຊິ່ງຕ້ອງມີການກະກຽມສື່ໃຫ້ເໝາະສົມກັບລະດັບໄວຜູ້ຮຽນເພື່ອກະຕຸ້ນໃຫ້ຜູ້ຮຽນຍາກອ່ານຢາກຄົ້ນຫາມີຄວາມເພີດເພີນຈາກສະພາບແລະວາງແຜນການຈັດການຮຽນຮູ້ຕາມຮູບແບບຈິກຊໍ່ (Jigsaw).

## 3. ຫຼັກການ ແລະ ແນວຄິດການຮຽນຮູ້ແບບຮ່ວມມື

### 3.1 ຫຼັກການພື້ນຖານການຮຽນຮູ້

ທົນອະລົນ ທຽນເຈນຖາ (2548:24) ກ່າວໄວ້ວ່າ: ຫຼັກການສຳຄັນຄືການໃຫ້ຜູ້ຮຽນມີລັກຊະນະແຕກຕ່າງກັນມີໂອກາດໄດ້ສະແດງບົດບາດໃນການແກ້ໄຂບັນຫາຈົນບັນລຸຕາມເປົ້າໝາຍທີ່ວາງໄວ້ປະເມີນຄວາມສຳເລັດຂອງການເຮັດວຽກກຸ່ມເປັນສຳຄັນ.

ອາລົມພອນ ພອນສີມາ (2541:57) ສະເໜີວ່າ: ການຮຽນແບບຮ່ວມແຮງຮ່ວມໃຈຄວນມີລັກຊະນະຄື:

- ແບ່ງນັກຮຽນໃນຫ້ອງອອກເປັນກຸ່ມຍ່ອຍໆແຕ່ລະກຸ່ມປະກອບດ້ວຍສະມາຊິກທີ່ມີຄວາມຮູ້, ຄວາມສາມາດແຕກຕ່າງກັນ, ກຸ່ມປະມານ 2-6 ຄົນ.
- ສະມາຊິກທຸກຄົນພາຍໃນກຸ່ມຕ່າງຄົນຕ່າງມີເປົ້າໝາຍທີ່ຈະເຮັດໃຫ້ຜົນການຮຽນໂດຍສະເລ່ຍ.
- ສະມາຊິກແບ່ງວຽກ ຫຼື ໜ້າທີ່ຄວາມຮັບຜິດຊອບໃຫ້ກັນເຮັດໃຫ້ສຳເລັດຕາມເປົ້າໝາຍຂອງກຸ່ມ.
- ສະມາຊິກທຸກຄົນຕ້ອງຍອມຮັບ ແລະ ໄວ້ວາງໃຈຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ແຕ່ລະຄົນຍອມຮັບໃນບົດບາດ ແລະ ຜົນງານຂອງສະມາຊິກໃນກຸ່ມເຊິ່ງເປັນຜົນງານຂອງຕົນ ແລະ ຍອມຮັບຕາມຄວາມສາມາດຈຸດດີ ແລະ ຈຸດອ່ອນຂອງສະມາຊິກ.
- ສະມາຊິກຂອງກຸ່ມຊ່ວຍເຫຼືອແລກປ່ຽນ ແລະ ໃຫ້ຄວາມຮ່ວມໄມ້ຮ່ວມມືແກ່ກັນ ແລະ ກັນ, ນັກສຶກສາເກັ່ງຈະໃຫ້ກຳລັງໃຈແກ່ນັກສຶກສາອ່ອນ ແລະ ກະຕຸ້ນໃຫ້ໝູ່ຄູ່ດຸໝັ່ນຂຶ້ນເພື່ອຈະໄດ້ປະສົບຄວາມສຳເລັດທາງດ້ານການຮຽນ ແລະ ໄດ້ພະຍາຍາມຫຼາຍຂຶ້ນຕື່ມ, ຜົນການຮຽນບໍ່ສູງແຕ່ກໍ່ໄດ້ຍອມຮັບ.

ອາລົມພອນ ພອນສີມາ (2541:37) ກ່າວວ່າ: ການຮຽນຮູ້ແບບຮ່ວມ (Cooperative Learning) ເປັນວິທີການຮຽນທີ່ຈັດສະພາບແວດລ້ອມໃຫ້ນັກຮຽນໄດ້ຮຽນຮູ້ຮ່ວມກັນເປັນກຸ່ມນ້ອຍໆແຕ່ລະກຸ່ມປະກອບດ້ວຍສະມາຊິກທີ່ມີຄວາມສາມາດແຕກຕ່າງກັນ,ແຕ່ລະຄົນມີສ່ວນຮ່ວມທີ່ແທ້ຈິງໃນການຮຽນຮູ້ ແລະ ໃນການສຳເລັດຂອງກຸ່ມ.

ທິຕິມາ ອຸ່ນໃຈ (2538:3) ໄດ້ກ່າວເຖິງຫຼັກການພື້ນຖານຂອງການຮຽນຮູ້ແບບຮ່ວມມືໄວ້ 5 ປະການຄື:

1.1. ເພິ່ງພາອາໄສເຊິ່ງກັນ ແລະ ກັນໃນທາງບວກ (Positive Interdependent) ທຸກຄົນໃນກຸ່ມເຮັດວຽກຮ່ວມກັນຢ່າງມີເປົ້າໝາຍ ແລະ ທຸກຄົນຕ້ອງມີສ່ວນຮ່ວມໃນການເຮັດວຽກນັ້ນຢ່າງມີເປົ້າໝາຍ, ທຸກຄົນຕ້ອງມີສ່ວນຮ່ວມໃນການເຮັດວຽກ ແລະ ມີການແບ່ງປັນວັດສະດຸອຸປະກອນໃນການເຮັດວຽກ, ທຸກຄົນມີບົດບາດ ແລະ ປະສົບຄວາມສຳເລັດຮ່ວມກັນ, ສະມາຊິກໃນກຸ່ມຈະມີຄວາມສຳເລັດໄດ້ກໍ່ຕໍ່ເມື່ອສະມາຊິກທຸກຄົນໃນກຸ່ມປະສົບຄວາມສຳເລັດ.

1.2. ການປະຕິສຳພັນແບບຮ່ວມມືກັນເປັນການປຶກສາຫາລືກັນຢ່າງໃກ້ສິດຕິດແທດ ມີການໂອລົມແລກປ່ຽນຄວາມຄິດຄວາມເຫັນເຊິ່ງກັນ ແລະ ກັນ ສະມາຊິກທຸກຄົນຕ້ອງສົນໃຈ, ເອົາໃຈໃສ່ຮັບຟັງແລະສົນທະນາແລກປ່ຽນຄວາມຄິດຄວາມເຫັນຕໍ່ກຸ່ມດ້ວຍການເປີດໂອກາດໃຫ້ສະມາຊິກແລກປ່ຽນຄວາມຄິດຄວາມເຫັນໃໝ່ເພື່ອເລືອກສິ່ງທີ່ດີໃຫ້ຖືກຕ້ອງ ແລະ ເໝາະສົມ.

1.3. ຄວາມຮັບຜິດຊອບຂອງສະມາຊິກແຕ່ລະກຸ່ມ (individual Accountablity) ຈະຊ່ວຍໃຫ້ກຸ່ມມີປະສິດທິຜົນການຮຽນສູງສຸດ, ການປະເມີນຜົນໄດ້ຈາກຜົນການທົດສອບຂອງສະມາຊິກແຕ່ລະຄົນ ຫຼື ການສຸມຕົວຢ່າງສະມາຊິກໃນກຸ່ມເປັນຕົວແທນລາຍງານຂອງກຸ່ມ.

1.4. ການໃຊ້ທັກສະລະຫວ່າງບຸກຄົນ ແລະ ການເຮັດວຽກເປັນກຸ່ມ (Interpersonal and small Group skills) ເປັນທັກສະສຳຄັນທີ່ຈະເຮັດໃຫ້ການເຮັດວຽກຂອງກຸ່ມສຳເລັດ, ນັກສຶກສາຄວນຈະໄດ້ຮັບການເຝິກທັກສະເລົ່ານີ້ໄດ້ແກ່ຄວາມເປັນຜູ້ນຳການຕັດສິນໃຈ, ການສ້າງຄວາມໄວ້ເນື້ອເຊື່ອໃຈການສື່ສານ ແລະ ການແກ້ບັນຫາຄວາມຂັດແຍ່ງຈຸດນີ້ເປັນຫຼັກການໜຶ່ງທີ່ໃຫ້ວິທີສອນໂດຍການຮ່ວມມືແຕກຕ່າງກັນຈາກການສອນໂດຍການຮຽນເປັນແບບເດີມທີ່ເຄີຍໃຊ້ມາດົນນານ. ທັກສະການເຮັດວຽກກຸ່ມນີ້ຈະເຮັດໃຫ້ນັກສຶກສາຊ່ວຍເຫຼືອກັນໃນການຖ່າຍທອດຄວາມຮູ້ທີ່ມີສ່ວນຮ່ວມໃນການເຮັດວຽກກຸ່ມໄດ້ຮັບຄວາມສຳເລັດ.

1.5. ຂະບວນການກຸ່ມ (group process) ໝາຍເຖິງການໃຫ້ນັກຮຽນມີເວລາແລະໄດ້ມີຂະບວນການໃນການວິເຄາະວ່າກຸ່ມເຮັດວຽກໄດ້ພຽງໃດສາມາດໃຊ້ທັກສະທາງສັງຄົມແລະມະນຸດສຳພັນໄດ້ເໝາະສົມ,ຂະບວນການກຸ່ມນີ້ຈະຊ່ວຍໃຫ້ສະມາຊິກເຮັກວຽກໄດ້ຜົນ,ໃນຂະນະທີ່ສຳພັນລະຫວ່າງກຸ່ມກໍ່ຈະເປັນໄປດ້ວຍດີ, ກຸ່ມຈະມີຄວາມເປັນອິດສະຫຼະໂດຍສະມາຊິກໃນກຸ່ມສາມາດຈັດຂະບວນການກຸ່ມ ແລະ ສາມາດແກ້ບັນຫາໄດ້ດ້ວຍຕົວຂອງພວກເຂົາເອງທັງນີ້ຂໍ້ມູນປ້ອນກັບຂອງຄູຫຼືເພື່ອນນັກຮຽນທີ່ເປັນຜູ້ສັງເກດຈະຊ່ວຍໃຫ້ກຸ່ມດຳເນີນການດ້ວຍດີ ແລະ ມີປະສິດທິພາບຫຼາຍຂຶ້ນ.

### 3.2 ຂະບວນການກຸ່ມ (Group Process)

ໝາຍເຖິງການໃຫ້ນັກສຶກສາມີເວລາ ແລະ ໄດ້ມີຂະບວນການໃນການວິເຄາະວ່າກຸ່ມເຮັດວຽກໄດ້ພຽງໃດສາມາດໃຊ້ທັກສະທາງສັງຄົມ ແລະ ມະນຸດພົວພັນກັນໄດ້ຢ່າງເໝາະສົມ, ຂະບວນການກຸ່ມນີ້ຈະຊ່ວຍໃຫ້ສະມາຊິກກຸ່ມເຮັດວຽກໄດ້ຜົນໃນຂະນະທີ່ພົວພັນລະຫ່ວາງກຸ່ມກໍເປັນໄປດ້ວຍດີຄືກຸ່ມຈະເປັນອິດສະຫຼະໂດຍສະມາຊິກກຸ່ມສາມາດຈັດຂະບວນການກຸ່ມ ແລະ ສາມາດ

ແກ້ໄຂບັນຫາໄດ້ດ້ວຍຕົນເອງ ຫຼື ກຸ່ມເຂົາເອງຂໍ້ມູນຍ້ອນກັບຂອງຄູ ຫຼື ໝູ່ເພື່ອນນັກສຶກສາທີ່ເປັນຜູ້ສັງເກດນັ້ນຈະຊ່ວຍໃຫ້ກຸ່ມດຳເນີນໄປໂດຍດີ ແລະ ມີປະສິດທິຜົນຫຼາຍຂຶ້ນ.

Slavin, Robert E (1995:15 ອ້າງຈາກ ກິ່ງແກ້ວ ກິ່ນຈັນ, 2536:17) ໄດ້ກ່າວເຖິງອົງປະກອບສຳຄັນໃນການເຮັດກິດຈະກຳແບບຮ່ວມມືໄດ້ດັ່ງນີ້:

2.1. ເປົ້າໝາຍກຸ່ມ (Group goal) ໃນການດຳເນີນກິດຈະກຳກຸ່ມສະມາຊິກໃນກຸ່ມຈະຕ້ອງມີການຕັ້ງເປົ້າໝາຍຂອງກຸ່ມ ແລະ ຍອມຮັບໃນເປົ້າໝາຍນັ້ນເຊິ່ງເປົ້າໝາຍດັ່ງກ່າວອາດໄດ້ແກ່ການເຮັດວຽກສຳເລັດ ແລະ ການຮັບລາງວັນ ຫຼື ຄະແນນ, ການມີຊື່ສຽງທີ່ຍອມຮັບຂອງກຸ່ມເປັນຕົ້ນ.

2.2. ຄວາມຮັບຜິດຊອບສະມາຊິກກຸ່ມ (Individual Accountability) ສະມາຊິກຕ້ອງມີການຍອມຮັບ ແລະ ຄຳນຶງເຖິງໃນເລື່ອງສຳເລັດຂອງຕົນເຊິ່ງສິ່ງເລົ່ານີ້ຈະມີຜົນແຮງດັນໃຫ້ກຸ່ມໄດ້ພົບກັບຄວາມສຳເລັດຕາມເປົ້າໝາຍຄືສະມາຊິກຕ້ອງຮັບຮູ້ວ່າຄະແນນຄວາມສຳເລັດຂອງກຸ່ມເກີດຈາກການລວບລວມຄະແນນຄວາມສຳເລັດຂອງສະມາຊິກແຕ່ລະຄົນຈະໄດ້ມອບໝາຍໃຫ້ເຮັດເປັນສ່ວນໆ ບົດຄົ້ນຄວ້າທີ່ກ່ຽວຂ້ອງກັບການຮຽນແບບຮ່ວມມືພົບວ່າວຽກທີ່ແບ່ງໃຫ້ຮັບຜິດຊອບນັ້ນຕ້ອງມີຄວາມຍາກ ແລະ ງ່າຍຈິງມີຜົນຕໍ່ຄວາມສຳເລັດຂອງກຸ່ມ.

2.3. ປັດໃຈທີ່ເປັນແຮງຈູງໃຈ (Incentive) ໃນການເຮັດວຽກຮ່ວມກັນອາດມີການສ້າງແຮງຈູງໃຈໂດຍໃຫ້ລາງວັນກຸ່ມເພື່ອຕອບສະໜອງກິດຈະກຳການເຮັດວຽກຮ່ວມກັນ ແລະ ມີການແບ່ງຊັດສ່ວນການໄດ້ຮັບລາງວັນຈະຊ່ວຍໃຫ້ສະມາຊິກກຸ່ມຮຽນຮູ້ທີ່ຈະເຮັດໃຫ້ກຸ່ມໄປເຖິງເປົ້າໝາຍຈາກຫຼັກການດັ່ງກ່າວຜູ້ສຶກສາຄົ້ນຄ້ວາສາມາດສະຫຼຸບໄດ້ວ່າ: ຫຼັກການທີ່ສຳຄັນທີ່ສຸດຄືການຮຽນຮູ້ແບບຮ່ວມມື ໂດຍໃຫ້ຜູ້ຮຽນທີ່ມີຄວາມສາມາດແຕກຕ່າງກັນ ມາຮຽນເປັນກຸ່ມຍ່ອຍຕັ້ງເປົ້າໝາຍຂອງກຸ່ມຄຳນຶງໃນໜ້າທີ່ຕ້ອງຮັບຜິດຊອບຮ່ວມກັນເປັນສ່ວນໆສະໜັບສະໜູນການເຮັດວຽກຂອງກຸ່ມເພື່ອໃຫ້ກຸ່ມເຮັດວຽກໄປເຖິງເປົ້າໝາຍ.

### 3.3 ທິດສະດີການຮຽນຮູ້ແບບຈິກຊໍ່ (Jigsaw Cooperative Learning)

ການຮຽນຮູ້ແບບຮ່ວມມືແບບຈິກຊໍ່ (Jigsaw) ເປັນການຈັດການຮຽນ-ການສອນທີ່ແບ່ງຜູ້ຮຽນອອກເປັນກຸ່ມນ້ອຍໆ ສະມາຊິກໃນກຸ່ມມີຄວາມສາມາດແຕກຕ່າງກັນ, ມີການແລກປ່ຽນຄວາມຄິດຄວາມເຫັນກັນ, ມີການຊ່ວຍເຫຼືອ, ສະໜັບສະໜູນເຊິ່ງກັນ ແລະ ກັນ, ມີຄວາມຮັບຜິດຊອບຮ່ວມກັນທາງໃນສ່ວນຕົວ ແລະ ສ່ວນລວມເພື່ອໃຫ້ກຸ່ມໄດ້ຮັບຄວາມສຳເລັດຕາມເປົ້າໝາຍທີ່ກຳນົດໄວ້.

ທົບວະລົບ ທຽນເຈນຖາ (2548:49) ກ່າວວ່າການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ່ Jigsaw ເປັນການຈັດການຮຽນເປັນກຸ່ມນ້ອຍປະມານ 3–6 ຄົນຈັດຜູ້ຮຽນທີມີຄວາມສາມາດກຸ່ມທີ່ 1 ເອີ້ນວ່າ ກຸ່ມບ້ານ (Home Group) ແລະ ກຸ່ມທີ່ 2 ກຸ່ມມີປະສົບການ ເອີ້ນວ່າ (Expert Group) ສະມາຊິກຂອງແຕ່ລະກຸ່ມສຶກສາຫົວຂໍ້ທີໄດ້ຮັບມອບໝາຍໃນກຸ່ມທີມີປະສົບການ

(Expert Group) ແລ້ວນຳຄວາມຮູ້ໄປອະທິບາຍໃຫ້ໝູ່ເພື່ອນໃນກຸ່ມບ້ານ (Home Group) ຟັງເປັນການທີ່ສົ່ງເສີມຄວາມຮ່ວມມື ແລະ ຖ່າຍທອດຄວາມຮູ້ລະຫ່ວາງໝູ່ເພື່ອນໃນກຸ່ມປະເມີນ ຜົນລວມຄະແນນເປັນຂອງກຸ່ມຄູອາດເສີມແຮງດ້ວຍລາງວັນ ຫຼື ປະກາດຊົມເຊີຍໃຫ້ແກ່ຜູ້ເຮັດໄດ້.

ສຸວິດ ມູນຄຳ ແລະ ອໍລະໄທ ມູນຄຳ (2547:177) ໄດ້ໃຫ້ຄວາມໝາຍໄວ້ວ່າ: ການຈັດການຮຽນຮູ້ທີ່ໃຊ້ແນວຄິດການຕໍ່ພາບໂດຍແບ່ງຜູ້ຮຽນເປັນກຸ່ມ, ທຸກກຸ່ມຈະໄດ້ຮັບການມອບໝາຍໃຫ້ເຮັດກິດຈະກຳດຽວກັນ, ຜູ້ສອນຈະແບ່ງເນື້ອໃນຂອງເລື່ອງທີ່ຈະໃຫ້ຮຽນຮູ້ອອກເປັນຫົວຂໍ້ຍ່ອຍເທົ່າກັບຈຳນວນສະມາຊິກແຕ່ລະກຸ່ມ ແລະ ມອບໝາຍໃຫ້ແຕ່ລະກຸ່ມສຶກສາຄົ້ນຄ້ວາຄົນລະຫົວຂໍ້ເຊິ່ງຜູ້ຮຽນແຕ່ລະຄົນຈະເປັນຜູ້ຊ່ຽວຊານສະເພາະຫົວຂໍ້ທີ່ຕົນໄດ້ຮັບມອບໝາຍໃຫ້ສຶກສາຈາກກຸ່ມສະມາຊິກຕ່າງໆກຸ່ມທີ່ໄດ້ຮັບມອບໝາຍໃນຫົວຂໍ້ດຽວກັນກໍຈະເຮັດການສຶກສາຄົ້ນຄ້ວາຮ່ວມກັນຈາກນັ້ນຜູ້ຮຽນແຕ່ລະຄົນຈະກັບເຂົ້າສູ່ກຸ່ມເດີມຂອງຕົນເພື່ອທຳໜ້າທີ່ເປັນຜູ້ຊ່ຽວຊານແລ້ວອະທິບາຍຄວາມຮູ້ເນື້ອໃນສາລະທີ່ຕົນເອງສຶກສາໃຫ້ໝູ່ເພື່ອນຮ່ວມກຸ່ມຟັງເພື່ອໃຫ້ໝູ່ເພື່ອນສະມາຊິກພາຍໃນກຸ່ມໄດ້ຮັບຮູ້ເນື້ອໃນສາລະຄົບຖ້ວນທຸກໆຫົວຂໍ້ຍ່ອຍ ແລະ ເກີດການຮຽນຮູ້ເນື້ອໃນສາລະໝົດທັງເລື່ອງ.

ສຸວະດົນ ທອງແມ້ນ, (2547:44) ກ່າວວ່າ:ການຮຽນແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ່ (Jigsaw) ເປັນການຈັດກິດຈະກຳເປັນກຸ່ມນ້ອຍປະມານ 3-6 ຄົນ, ຈັດນັກຮຽນທີ່ມີຄວາມສາມາດປະປົນກັນຈັດເປັນ 2 ກຸ່ມເອີ້ນວ່າກຸ່ມບ້ານ ແລະ ກຸ່ມຜູ້ມີປະສົບການເອີ້ນວ່າກຸ່ມຊ່ຽວຊານ. ສະມາຊິກຂອງແຕ່ລະກຸ່ມສຶກສາຫົວຂໍ້ທີ່ໄດ້ຮັບມອບໝາຍໃນກຸ່ມຜູ້ມີປະສົບການແລ້ວນຳຄວາມຮູ້ໄປອະທິບາຍໃຫ້ໝູ່ເພື່ອນໃນກຸ່ມບ້ານຟັງນີ້ເປັນການຮຽນທີ່ສົ່ງເສີມຄວາມຮ່ວມມື ແລະ ຖ່າຍທອດຄວາມຮູ້ໃນລະຫວ່າງໝູ່ເພື່ອນໃນກຸ່ມໄດ້ປະເມີນຜົນລວມຄະແນນເປັນຂອງກຸ່ມ, ຄູສົ່ງເສີມແຮງດ້ວຍລາງວັນປະກາດຊົມເຊີຍ.

ນະລິນ ກະພີ້ແດງ (2542:28) ໄດ້ກ່າວວ່າການຮຽນຮູ້ແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ່ Jigsaw ໝາຍເຖິງການຈັດກິດຈະກຳການຮຽນ-ການສອນທີ່ແບ່ງຜູ້ຮຽນອອກເປັນກຸ່ມໆລະ 5-6 ຄົນ ນັກຮຽນໃນກຸ່ມມີຄວາມສາມາດແຕກຕ່າງກັນຮຽນຮູ້ຮ່ວມກັນ, ຜູ້ສອນກຳນົດໃຫ້ແຕ່ລະຄົນໃນກຸ່ມສຶກສາເນື້ອໃນຍ່ອຍໆແຕກຕ່າງກັນໂດຍໄປສຶກສາຮ່ວມກັບສະມາຊິກຫຼັກອື່ນໆທີ່ໄດ້ຮັບຜິດຊອບໃນຫົວຂໍ້ຍ່ອຍດຽວກັນເຊິ່ງເອີ້ນວ່າກຸ່ມຜູ້ມີປະສົບການແລ້ວນຳຜົນການສຶກສາມາອະທິບາຍໃຫ້ໝູ່ເພື່ອນນັກຮຽນໃນກຸ່ມຫຼັກຂອງຕົນຟັງ, ນັກສຶກສາທຸກຄົນຮັບຜິດຊອບຕໍ່ກຸ່ມຂອງຕົນເອງຮ່ວມກັນ.

ປິຍະສັດ ຂາວແກ້ວ (2542:18) ກ່າວວ່າການຮຽນແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ່ເປັນການຈັດໃຫ້ຜູ້ຮຽນທີ່ມີຄວາມສາມາດແຕກຕ່າງກັນກຸ່ມລະ 3-6 ຄົນ ຮຽນຮູ້ຮ່ວມກັນໂດຍຄູແບ່ງບົດຮຽນອອກເປັນບົດເລື່ອງຍ່ອຍໆເທົ່າກັບຈຳນວນສະມາຊິກໃນກຸ່ມແບ່ງຫົວຂໍ້ໃນການສຶກສາຄົນລະຫົວຂໍ້ແລ້ວໃຫ້ສະມາຊິກທີ່ໄດ້ສຶກສາເລື່ອງດຽວກັນຂອງທຸກກຸ່ມໄປສຶກສາ ແລະ ອະທິບາຍ

ຮ່ວມກັນຈົນເກີດຄວາມເຂົ້າໃຈດີຂຶ້ນແລ້ວຈຶ່ງກັບໄປລາຍງານໃຫ້ສະມາຊິກໃນກຸ່ມຟັງຄົນລະຫົວຂໍ້ຈົນຄົບຖ້ວນເມື່ອຈົບບົດຮຽນແລ້ວຄູຈະເຮັດການທົບສອບຄວາມຮູ້ ແລະ ໃຫ້ລາງວັນເປັນການສົ່ງເສີມແຮງ.

ສຸມົນທາ ພອນຫົມບຸນ ແລະ ຄະນະ (2540:70-71) ໄດ້ໃຫ້ນິຍາມການຈັດການຮຽນຮູ້ໂດຍວິທີການຮຽນຮ່ວມມືແບບຈິກຊໍ່ (Jigsaw) ໄວ້ວ່າເປັນກິດຈະກຳທີ່ຄູມອບໝາຍໃຫ້ມະມາຊິກໃນກຸ່ມຍ່ອຍແຕ່ລະກຸ່ມສຶກສາເນື້ອໃນບົດຮຽນຫຼືເອກະສານທີ່ກຳນົດໃຫ້ສະມາຊິກແຕ່ລະຄົນຈະກຳນົດໃຫ້ສຶກສາເນື້ອໃນຫຼາຍກ່ວາຄົນຮຽນຊ້າອ່ານຊ້າ, ນັກສຶກສາທີ່ທີ່ສຶກສາຫົວຂໍ້ດຽວກັນທຸກໆກຸ່ມຈະຮ່ວມກັນເປັນກຸ່ມຜູ້ມີປະສົບການ, ຫຼັງຈາກທີ່ທຸກຄົນສຶກສາເນື້ອໃນຈົນເຂົ້າໃຈ ແລະ ຮ່ວມກັນຄິດຫາວິທີອະທິບາຍໃຫ້ເພື່ອນນັກສຶກສາໃນກຸ່ມປະຈຳຂອງຕົນຟັງແລ້ວນັກສຶກສາແຕ່ລະຄົນກັບມາຍັງກຸ່ມທີ່ປະຈຳຂອງຕົນ, ສະມາຊິກທີ່ໄດ້ຮັບມອບໝາຍໃຫ້ສຶກສາໜ້າຕົ້ນ ຫຼື ຂໍ້ທຳອິດຈະເປັນຄົນເລົ່າເລື່ອງທີ່ຕົນເອງສຶກສາໃຫ້ສະມາຊິກຄົນອື່ນໆໃນກຸ່ມຟັງເຮັດເຊັ່ນດຽວກັນນີ້ລຽງລຳດັບຈົນໄປເຖິງສຸດທ້າຍຈຶ່ງຂໍສະເໜີໃຫ້ສະມາຊິກຄົນໃດໜຶ່ງສະຫຼຸບເນື້ອໃນຂອງສະມາຊິກທຸກຄົນເຂົ້າກັນ, ຄູຄວນທົດສອບຄວາມເຂົ້າໃຈເນື້ອໃນທີ່ຮຽນໃນຊ່ວງສຸດທ້າຍຂອງການຮຽນ ແລະ ໃຫ້ລາງວັນ.

ກະນິກພອນ ແສງສະວ່າງ (2540:26-27) ໄດ້ກ່າວເຖິງການຮຽນຮູ້ແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ່ວ່າໝາຍເຖິງເປັນການຈັດໃຫ້ຜູ້ຮຽນທີ່ມີຄວາມສາມາດແຕກຕ່າງກັນກຸ່ມລະ 5-6 ຄົນໄດ້ຮຽນຮູ້ຮ່ວມກັນໂດຍຜູ້ສອນແບ່ງບົດຮຽນເປັນເລື່ອງຍ່ອຍໆເມື່ອໄດ້ຮັບມອບໝາຍໃຫ້ຜູ້ຮຽນແບ່ງກິດຈະກຳໄປສຶກສາເລື່ອງຍ່ອຍໆ ແລະ ນ□າຜົນສຶກສາມາສະເໜີຕໍ່ກຸ່ມການຮຽນແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ່, ໝາຍເຖິງການຈັດຂະບວນການຮຽນ-ການສອນຂອງຄູໂດຍແບ່ງເນື້ອໃນອອກເປັນຫົວໜ່ວຍຍ່ອຍໆໃຫ້ຜູ້ຮຽນສຶກສາເປັນກຸ່ມໆປະມານກຸ່ມ 2-5 ຄົນ ເຊິ່ງສະມາຊິກພາຍໃນກຸ່ມຈະມີບົດບາດໜ້າທີ່ທີ່ຈະຕ້ອງຮັບຜິດຊອບແຕກຕ່າງກັນອອກໄປເຊິ່ງສະມາຊິກໃນກຸ່ມຈະຕ້ອງຮັບຜິດຊອບໜ້າທີ່ຂອງຕົນເທົ່າໆກັນກັບຄວາມຮັບຜິດຊອບຕໍ່ກຸ່ມດ້ວຍການແລກປ່ຽນຄວາມຄິດຄວາມເຫັນຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເຊິ່ງຈະເປັນຜົນໃຫ້ການເຮັດວຽກຂອງກຸ່ມບັນລຸເປົ້າໝາຍຮ່ວມກັນ.

3.2. ຂັ້ນຕອນຂອງການຮຽນຮູ້ດ້ວຍກຸ່ມຮ່ວມມືແບບຈິກຊໍ່ (Jigsaw) ການຈັດກິດຈະກຳການຮຽນ-ການສອນດ້ວຍກຸ່ມແບບຮ່ວມມືຈິກຊໍ່ມີຫຼັກການພື້ນຖານຄືກັບການຈັດການຮຽນຮູ້ແບບຮ່ວມມືຮູບແບບອື່ນໆແຕ່ລະກຸ່ມຮ່ວມມືແບບຈິກຊໍ່ຈະມີຂັ້ນຕອນໃນການຈັດກິດຈະກຳການຮຽນ-ການສອນທີ່ແຕກຕ່າງຈາກການຮຽນຮູ້ແບບຮ່ວມມືຮູບແບບອື່ນໆຢູ່ບາງຂັ້ນຕອນການຈັດກິດຈະກຳການຮຽນ-ການສອນດ້ວຍກຸ່ມຮ່ວມມືແບບຈິກຊໍ່.

ເຂມຣັດ ໂຕໄທຍະ (2540:1) ໃຫ້ຄວາມຄິດກ່ຽວກັບແຜນການສອນວ່າແຜນການສອນເປັນສິ່ງສຳຄັນ ແລະ ທີ່ຈຳເປັນທີ່ສຸດສຳລັບຄູຜູ້ສອນໃຊ້ເປັນເຄື່ອງມືໃນການຈັດກິດຈະກຳການຮຽນ-ການສອນໃຫ້ນັກຮຽນມີຄຸນລັກສະນະທີ່ເພິ່ງປະສົງຕາມຈຸດປະສົງ, ຕາມຫຼັກສູດທີ່ກຳນົດໄວ້.

ສະນັ້ນສະຫຼຸບໄດ້ວ່າ: ແຜນການຈັດກິດຈະກຳການຮຽນ-ການສອນໝາຍເຖິງການວາງແຜນການຈັດກິດຈະກຳການຮຽນ-ການສອນໃນແຕ່ລະຄັ້ງເພື່ອໃຫ້ບັນລຸຕາມຈຸດປະສົງຂອງການຮຽນຮູ້ທີ່ຕັ້ງໄວ້, ໂດຍກຳນົດເນື້ອໃນສຳຄັນ ແລະ ຈຸດປະສົງເນື້ອໃນກິດຈະກຳການຮຽນ-ການສອນ, ສື່ອຸປະກອນ ແລະ ວິທີວັດປະເມີນຜົນເພື່ອໃຫ້ນັກຮຽນມີຄຸນລັກສະນະທີ່ເພິງພໍໃຈຕາມຈຸດປະສົງ, ຕາມຄວາມໝາຍຂອງຫຼັກສູດ.

- ຄວາມສຳຄັນຂອງແຜນການຈັດການຮຽນ-ການສອນ.
- ແຜນການສອນມີຄວາມສຳຄັນທີ່ສຸດເພື່ອໃຫ້ການຈັດກິດຈະກຳການຮຽນ-ການສອນ

ບັນລຸຈຸດປະສົງຂອງຫຼັກສູດ, ທີ່ໄດ້ກຳນົດໄວ້ວ່າຈະຕ້ອງເລືອກໃຊ້ກິດຈະກຳ, ຂະບວນການຮຽນ-ການສອນລັກສະນະໃດໜຶ່ງຈຶ່ງສາມາດເຮັດໃຫ້ຜູ້ຮຽນເກີດການຮຽນຮູ້ຕາມຈຸດປະສົງຂອງຫຼັກສູດ, ແຜນການສອນຈາກການຮຽນຮູ້ຈຶ່ງມີຄວາມສຳຄັນ.

ທິບວະລົນ ທຽນເຈນຖາ (2548:49) ກ່າວວ່າ: ແຜນການສອນມີຄວາມສຳຄັນຕໍ່ການຈັດກິດຈະກຳການຮຽນ-ການສອນໃຫ້ບັນລຸຕາມຈຸດປະສົງຂອງຫຼັກສູດແຜນການສອນເປັນການວາງແຜນຈັດກິດຈະກຳທັງໝົດ ແລະ ຕອບສະໜອງຕໍ່ຄວາມຕ້ອງການຄວາມຮູ້, ຄວາມສາມາດຂອງນັກຮຽນການວາງແຜນການຈັດການຮຽນ-ການສອນໄວ້ລ່ວງໜ້າເຮັດໃຫ້ຜູ້ສອນເກີດຄວາມໝັ້ນໃຈ.

## 4. ເທັກນິກການຮຽນຮູ້ແບບຮ່ວມມື

ຈະເຮັດໃຫ້ເກີດການຮຽນຮູ້ໃນກຸ່ມຍ່ອຍ, ການທຳຄວາມເຂົ້າໃຈແນວຄິດລວມຍອດ ຫຼື ຫຼັກການທີ່ສຳຄັນນັ້ນຄູອາດແບ່ງນັກຮຽນເປັນກຸ່ມຍ່ອຍເພື່ອເປີດໂອກາດໃຫ້ນັກຮຽນສົນທະນາ, ອະທິບາຍ ແລະ ສັກຖາມຈົນເກີດຄວາມເຂົ້າໃຈຢ່າງຊັດເຈນ, ຜູ້ຮຽນສາມາດຊ່ວຍເຫຼືອກັນ ແລະ ໃຫ້ໂອກາດແກ່ຜູ້ຮຽນ, ຄູອາດເຮັດວຽກຢ່າງໃກ້ສິດຕິດແທດກັບຜູ້ຮຽນ ຫຼື ກຸ່ມໃນຂະນະທີ່ມອບໝາຍໃຫ້ສະມາຊິກຜູ້ອື່ນ.

ເທັກນິກການຮຽນແບບຮ່ວມມືຊ່ວຍລົດບັນຫາວິໄນໃນຊັ້ນຮຽນທຸກຄົນໃນຫ້ອງຮຽນແບບຮ່ວມມືຈະໃຫ້ກຳລັງໃຈຍອມຮັບຮ່ວມມືກັນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ສະມາຊິກໃນກຸ່ມທຸກຄົນຈະຮັບຜິດຊອບໃນຄວາມສຳເລັດຂອງກຸ່ມຈຶ່ງຈຳເປັນຕ້ອງຮ່ວມມືກັນພັດທະນາສິ່ງເສີມພຶດຕິກຳໃຫ້ເກີດຂຶ້ນໃນກຸ່ມການຮຽນ. ພຶດຕິກຳດັ່ງກ່າວຮຸນແຮງ ແລະ ໂດຍໂຕ້ຖຽງໃນຊັ້ນຮຽນຈຶ່ງປາຖະໜາໃຫ້ເຫັນເທັກນິກການຮຽນແບບຮ່ວມມືຈະຊ່ວຍລະດັບຄະແນນ, ຜົນຄະແນນທາງການຮຽນສະເລ່ຍ, ນັກສຶກສາເກັ່ງຊ່ວຍເຫຼືອນັກສຶກສາອ່ອນ, ນັກສຶກສາຮຽນຮູ້ຄວາມຄິດລວມຍອດຂອງຫົວຂໍ້ກຳລັງຮຽນຢູ່ໄດ້ຊັດເຈນຂຶ້ນໃນຂະນະດຽວກັນນັ້ນ, ນັກສຶກສາອ່ອນຈະຍ່ອມຮັບຕາມແນວຄິດລວມຂອງໝູ່ເພື່ອນ.

ເທັກນິກການຮຽນແບບຮ່ວມມືສົ່ງເສີມໃຫ້ຜູ້ຮຽນໄດ້ພັດທະນາຄວາມຄິດສ້າງສັນໄດ້ສຶກສາຄົ້ນຄ້ວາ ແລະ ແກ້ໄຂບັນຫາດ້ວຍຕົນເອງ ແລະ ຜູ້ຮຽນມີອິດສະຫຼະທີ່ຈະເລືອກຍຸດທະສາດການຮຽນຮູ້ຂອງຕົນເອງເຊິ່ງເຮັດໃຫ້ຜູ້ຮຽນມີອິດສະຫຼະໃນການຕັດສິນໃຈດ້ວຍຕົນເອງ.

ເທັກນິກການຮຽນແບບຮ່ວມມືຊ່ວຍໃຫ້ຜູ້ຮຽນໄດ້ອອກໄປໃຊ້ຊີວິດໃນໂລກຂອງຄວາມເປັນຈິງເຊິ່ງເປັນໂລກຕ້ອງການຄວາມເພິ່ງພາອາໄສຄວາມຮ່ວມແຮງຮ່ວມໃຈຫຼາຍກວ່າການແຂ່ງຂັນແບບປະເຊີນໜ້າຫ້ອງຮຽນແບບຮວ່ມມື, ສະທ້ອນໃຫ້ເຫັນສະພາບຊີວິດຈິງໃນອານາຄົດຂອງຜູ້ຮຽນພາຍຫຼັງສຳເລັດການຮຽນ.

ກະນິກພອນ ແສງສະຫວ່າງ (2540:21) ກ່າວວ່າການຮຽນຮູ້ແບບຮ່ວມມືຊ່ວຍໃຫ້ຜູ້ຮຽນສາມາດພັດທະນາຕົນເອງໃນດ້ານຕ່າງໆຄື:

- ການພັດທະນາດ້ານຂະບວນການຮຽນ.
- ພັດທະນາດ້ານບຸກຄະລິກພາບ.
- ການພັດທະນາດ້ານສັງຄົມ.
- ການພັດທະນາດ້ານອາລົມ, ຄວາມເຊື້ອໝັ້ນ ແລະ ທັດສະນະຄະຕິຕໍ່ຕົນເອງ, ບຸກຄົນອື່ນ ແລະ ສັງຄົມ.

Cooper, C. L (1979 ອ້າງໃນ ວະໄລພອນ ອາມາດ, 2554) ໄດ້ກ່າວວ່າການອ່ານໝາຍເຖິງຂະບວນການປະຕິສຳພັນລະຫວ່າງຜູ້ອ່ານກັບສິ່ງທີ່ອ່ານເພື່ອໃຫ້ໄດ້ຄວາມໝາຍ ແລະ ເປັນໄປຕາມຈຸດປະສົງຂອງຜູ້ຂຽນໂດຍຜູ້ອ່ານຕ້ອງອາໄສຄວາມຮູ້ ຫຼື ປະສົບການເດີມມາຊ່ວຍໃນການສ້າງຄວາມໝາຍ.

Smith, S. C (1978:6) ໄດ້ກ່າວວ່າ: ການອ່ານໝາຍເຖິງຂໍ້ມູນທີ່ເປັນຕົວອັກສອນໃນໜ້າກະດາດທີ່ປະກົດຕໍ່ສາຍຕາ (Visual Information) ແລະ ຂໍ້ມູນທີ່ມາຈາກສະໝອງ ຫຼື ປະສົບການ (Nonvisual Information) ເຊິ່ງຂໍ້ມູນປະເພດນີ້ມີຄວາມສຳຄັນຕໍ່ຄວາມເຂົ້າໃຈໃນການອ່ານຫຼາຍກ່ວາຂໍ້ມູນສະເພາະການວິເຄາະແຍກຄວາມໝາຍໃນລະດັບຄຳຈຶ່ງບໍ່ໃຊ້ສິ່ງຈຳເປັນແຕ່ເນັ້ນຄວາມໝາຍຂອງປະໂຫຍກ ຫຼື ຂໍ້ຄວາມຫຼາຍກ່ວາ.

Widdowson, H. G (1983:174) ໄດ້ກ່າວວ່າການອ່ານໝາຍເຖິງການປະຕິກິລິຍາໂຕ້ຕອບລະຫວ່າງຜູ້ຂຽນ ແລະ ຜູ້ອ່ານ, ເຊິ່ງຜູ້ອ່ານໃຊ້ຄວາມຄິດພິຈາລະນາເລື່ອງຜູ້ຂຽນໄດ້ຂຽນໄວ້ເພື່ອການສື່ສານລະຫວ່າງຜູ້ອ່ານ ແລະ ຜູ້ຂຽນຂໍ້ຄວາມທີ່ອ່ານກໍ່ຄືປະຕິກິລິຍາໂຕ້ຕອບກັນລະຫວ່າງຜູ້ຂຽນ ແລະ ຜູ້ອ່ານ.

Dechant, E. V (1982) ໄດ້ກ່າວວ່າການອ່ານໝາຍເຖິງປະຕິກິລິຍາລະຫວ່າງການເບິ່ງເຫັນອົງປະກອບໃນການແປຄວາມໝາຍໂດຍຜູ້ອ່ານຈະເຄື່ອນສາຍຕາໄປຕາມບັນທັດຂອງຕົວອັກສອນຈາກຊ້າຍໄປຫາຂວາແລ້ວຍຸດປັບຄວາມເຂົ້າໃຈຄຳສັບແລ້ວລວບລວມເຂົ້າກັນເປັນໜ່ວຍຄວາມຄິດ, ຜູ້ອ່ານຈະຕີຄວາມໝາຍສິ່ງທີ່ອ່ານໂດຍອາໄສຄວາມຮູ້ ແລະ ປະສົບການເດີມເພື່ອ

ປະມວນຜົນເປັນຄວາມຄິດ, ການພິຈາລະນາ ແລະ ການສະຫຼຸບຄວາມເຫັນ, ນອກຈາກນີ້ຍັງໄດ້ແບ່ງການອ່ານອອກເປັນ 3 ປະການຄື:

1. ການອ່ານໃນຖານະທີ່ຕີຄວາມໝາຍ ແລະ ປະສົບການ, ການອ່ານປະເພດນີ້ໄດ້ແກ່ການອ່ານພາບ, ການອ່ານສີໜ້າ, ການອ່ານພາວະລົມ, ຟ້າອາກາດ, ການຕີຄວາມໝາຍຂອງສຽງ ແລະ ການອ່ານລັກສະນະລວມໆ.

2. ການອ່ານໃນຖານະທີ່ເປັນການຕີຄວາມໝາຍສັນຍາລັກຕົວອັກສອນທີ່ບັນທຶກໄວ້ຄືຜູ້ຂຽນໃສ່ຄວາມມຸ້ງໝາຍລົງໃນສິ່ງທີ່ຂຽນ, ໃນລັກສະນະພົວພັນກັບປະສົບການສ່ວນຕົວຂອງເຂົາ, ຜູ້ອ່ານມີໜ້າທີ່ອ່ານ ແລະ ລວບລວມຄວາມໝາຍຂອງຄຳຕ່າງໆ ເພື່ອໃຫ້ເກີດຄວາມເຂົ້າໃຈ, ການອ່ານປະເພດນີ້ຜູ້ອ່ານຕ້ອງຮູ້ຈັກຄຳສັບ, ເຂົ້າໃຈຄວາມໝາຍຂອງຄຳ ແລະ ເຂົ້າໃຈຄວາມຄິດຂອງຜູ້ຂຽນ.

3. ການອ່ານໃນຖານະທີ່ເປັນຂະບວນການຕີຄວາມໝາຍ, ປະສົບການຄວບຄູ່ໄປກັບການຕີຄວາມໝາຍສັນຍາລັກຕົວອັກສອນທີ່ບັນທຶກໄວ້ໃນການອ່ານປະເພດນີ້ຄືການອ່ານທີ່ຜູ້ອ່ານຈະຕີຄວາມໝາຍຈາກປະສົບການ ແລະ ຮູ້ຄວາມໝາຍຂອງຂໍ້ຄວາມເພື່ອຮຽບຮຽງໃຫ້ເກີດຄວາມເຂົ້າໃຈໃນທີ່ສຸດ ການຈະນາ ສີລາພັດວິທະຍາ, (2533:14) ໄດ້ກ່າວວ່າການອ່ານໝາຍເຖິງຂະບວນການໂຕ້ຕອບລະຫວ່າງຜູ້ຂຽນ ແລະ ຜູ້ອ່ານເຊິ່ງຜູ້ອ່ານຈະຕ້ອງອາໄສທັກສະຫຼາຍປະການໃນການຖ່າຍທອດຄວາມໝາຍຈາກສັນຍາລັກຕ້ອງອາໄສຄວາມຮູ້ຄວາມສາມາດ ແລະ ປະສົບການເດີມຂອງຜູ້ອ່ານເພື່ອຄວາມເຂົ້າໃຈໃນສິ່ງທີ່ຜູ້ຂຽນຕ້ອງການຈະຖ່າຍທອດເຈດຕະນາ ມະນີລັດ ສຸກໂສຕິລັດ (2537:1) ໄດ້ກ່າວວ່າການອ່ານໝາຍເຖິງຂະບວນການທີ່ຜູ້ອ່ານຮັບຮູ້ສານເຊິ່ງເປັນຄວາມຮູ້, ຄວາມຄິດ, ຄວາມຮູ້ສຶກ ແລະ ຄວາມຄິດເຫັນທີ່ຂຽນຖ່າຍທອດອອກມາເປັນລາຍລັກອັກສອນ, ຜູ້ອ່ານຈະເຂົ້າໃຈໜັງສືໄດ້ຫຼາຍໜ້ອຍພຽງໃດຂຶ້ນຢູ່ກັບປະສົບການ ແລະ ຄວາມສາມາດໃນການໃຊ້ຄວາມຄິດ.

ບັນລື ພຶດສະວັນ (2534:126) ໄດ້ກ່າວວ່າການອ່ານໝາຍເຖິງຄວາມສາມາດທີ່ຈະໃຊ້ປະໂຫຍດຈາກການອ່ານໄດ້ຫຼາຍດ້ານຫຼາຍລັກສະນະເຊັ່ນ: ອ່ານເພື່ອໄດ້ຮັບຄວາມຮູ້ແນວຄິດ ຫຼື ແນວປະຕິບັດໄດ້ຮັບຄວາມເພີດເພີນເປັນເຄື່ອງຊຶດເຊີຍອາລົມຕະຫຼອດຈົນທັດສະນະຄະຕິທີ່ດີ ແລະ ມີນິດໄສຮັກການອ່ານ.

ແມ້ນມາດ ຊີວະລິດ (2534:232) ໄດ້ກ່າວວ່າການອ່ານ ໝາຍເຖິງການໃຊ້ຄຸນນະພາບຂອງສະໝອງເພື່ອຮັບຮູ້ແປຄວາມໝາຍ ແລະ ເຂົ້າໃຈປະກົດການຂໍ້ມູນຂ່າວສານເລື່ອງປະສົບການຄວາມຄິດ, ຄວາມຮູ້ສຶກ ແລະ ຈິນຕະນາການຕະຫຼອດຈົນຮອດສາລະອື່ນໆຊຶ່ງມີຄວາມສະແດງອອກໂດຍສັນຍາລັກທີ່ເປັນລາຍລັກອັກສອນທີ່ມະນຸດປະຕິບັດຂຶ້ນ ເພື່ອສື່ສານການອ່ານເປັນທັກສະພື້ນຖານ ຕ້ອງຮຽນເຊັ່ນດຽວກັບທັກສະພື້ນຖານອື່ນໆການຮຽນຮູ້ເທົ່ານັ້ນບໍ່ພຽງພໍຕ້ອງຝຶກຝົນ ຫຼື ພັດທະນາລະດັບຄວາມສາມາດໃຫ້ເພີ່ມຂຶ້ນຢູ່ສະເໜີ, ເພື່ອສຶກສາ, ສາມາດອ່ານເນື້ອໃນຍາກ, ຊັບຊ້ອນໃຫ້ເຂົ້າໃຈ ແລະ ນຳມາໃຊ້ການໄດ້.

Wainwright, G. R (1972:10) ອະທິບາຍວ່າລັກສະນະຂອງຜູ້ອ່ານທີ່ມີຄວາມເຂົ້າໃຈສິ່ງທີ່ອ່ານມີດັ່ງນີ້:

1. ສາມາດເກັບໃຈຄວາມສຳຄັນ ແລະ ສຳນຶກໄດ້ເມື່ອຕ້ອງການ.
2. ເລືອກອ່ານແຕ່ຫົວຂໍ້ສຳຄັນ.
3. ຕີຄວາມໝາຍໃຈຄວາມ ແລະ ແນວຄິດໄດ້.
4. ສະຫຼຸບເລື່ອງຕ່າງໆຈາກເລື່ອງທີ່ອ່ານໄດ້.
5. ສະຫຼຸບ ແລະ ປະເມີນຄ່າເລື່ອງທີ່ອ່ານໄດ້.
6. ເຊື່ອມໂຍງຄວາມຮູ້ທີ່ໄດ້ມາໃໝ່ ແລະ ປະສົບການເດີມໄດ້.

ທົງໄຊ ພອນໜໍປົກ (2540:40) ອະທິບາຍວ່າຄວາມເຂົ້າໃຈໃນການອ່ານຄືຄວາມສາມາດແປສັນຍາລັກຂອງຕົວໜັງສືມາເປັນຄວາມຄິດໄດ້, ຜູ້ອ່ານຈະທຳຄວາມເຂົ້າໃຈໜັງສືໃນຮູບຂອງຄວາມຄິດຕະຫຼອດເວລາທີ່ອ່ານໃນຄວາມໝາຍຂອງເຂົາເອງ.

ກົມວິຊາການ (2540:1) ອະທິບາຍວ່າຄວາມເຂົ້າໃຈໃນການອ່ານຄືການອ່ານອອກສຽງ, ອ່ານຈັບໃຈຄວາມເພື່ອໃຫ້ເຂົ້າໃຈ, ສາມາດສື່ສານດ້ວຍການຟັງ, ການເວົ້າ ແລະ ການຂຽນໄດ້ຢ່າງຊັດເຈນ.

ພອນເພີນ ພູມສະອາດ (2543:8) ອະທິບາຍວ່າຄວາມເຂົ້າໃຈໃນການອ່ານເປັນຄວາມສາມາດໃນການອ່ານຈັບໃຈຄວາມທີ່ສຳຄັນ ແລະ ລາຍລະອຽດປີກຍ່ອຍໄດ້, ຜູ້ທີ່ມີຄວາມເຂົ້າໃຈໃນການອ່ານສາມາດຫຍໍ້ໃຈຄວາມສຳຄັນຄືສະຫຼຸບເລື່ອງສິ່ງທີ່ຕົນເອງອ່ານຫຼືສາມາດເຂົ້າໃຈຄວາມສຳພັນຕ່າງໆຂອງສິ່ງທີ່ອ່ານໄດ້.

ສະມຸດ ເຊັນເຊົາວະນິດ (2537:74) ໄດ້ກ່າວເຖິງອົງປະກອບສຳຄັນຂອງຄວາມເຂົ້າໃຈໃນການອ່ານສະຫຼຸບໄດ້ດັ່ງນີ້:

1. ສາມາດຈົດຈຳເນື້ອເລື່ອງສ່ວນໃຫ່ຍທີ່ອ່ານມາແລ້ວໄດ້ເມື່ອຈຳເປັນຕ້ອງການຈະໃຊ້ປະໂຫຍດ.

2. ສາມາດຈັບໃຈຄວາມສຳຄັນໄດ້, ສາມາດແຍກ ຫຼື ລະບຸປະເມີນຫຼັກອອກຈາກປະເດັນຍ່ອຍທີ່ບໍ່ຈຳເປັນ ຫຼື ສຳຄັນກ່ຽວຂ້ອງຫຼາຍ, ສາມາດປະເມີນໄດ້ວ່າອັນໃດທີ່ຄວນຈະສົນໃຈເປັນພິເສດກໍ່ສາມາດຕັດຖິ້ມໄດ້ເລີຍ.

3. ສາມາດຕີຄວາມໝາຍຂອງບົດເລື່ອງທີ່ອ່ານນັ້ນໄດ້ ຫຼື ຂໍ້ຄິດເຫັນທີ່ອ່ານມາແລ້ວໄດ້ວ່າມີເນື້ອໃນສຳຄັນ ຫຼື ເລິກເຊິ່ງຫຼາຍໜ້ອຍພຽງໃດ.

4. ສາມາດສະຫຼຸບຄວາມເຫັນຈາກສິ່ງທີໄດ້ອ່ານມາແລ້ວໄດ້ຢ່າງຖືກຕ້ອງ, ມີເຫດຜົນເປັນໜ້າເຊື່ອຖື.

5. ສາມາດວິຈານ ແລະ ພິຈາລະນາໄດ້ກົງກັບຂໍ້ສະຫຼຸບ ຫຼື ການອ້າງອີງຕ່າງໆຂອງຜູ້ຂຽນໄດ້ຢ່າງຖືກຕ້ອງ ແລະ ເປັນລະບົບບໍ່ສັບສົນ.

6. ສາມາດຖ່າຍໂອນ ຫຼື ປະສົມປະສານຄວາມຮູ້ທີ່ໄດ້ຈາກການອ່ານກັບປະສົບການອື່ນໄດ້ຢ່າງເໝາະສົມຕາມກາລະເທສະ.

ປະລິນຍາ ປັ້ນສຸວັນ (2553:88) ກ່າວວ່າການຮຽນຮູ້ພາສາ ແລະ ທັກສະການຄິດພື້ນຖານຂອງນັກສຶກສາທີ່ໄດ້ຮັບການຈັດການຮຽນຮູ້ແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ່ (Jigsaw) ກັບປົກະຕິໂດຍມີຈຸດປະສົງເພື່ອປຽບທຽບຜົນການຮຽນເປັນກຸ່ມ ແລະ ທັກສະການຄິດພື້ນຖານຂອງການຮຽນກ່ອນ ແລະ ຫຼັງທີ່ໄດ້ຮັບການຈັດການຮຽນຮູ້ແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ່ (Jigsaw) ກັບປົກກະຕິ.

## 5. ເທັກນິກຈິກຊໍ່ (Jigsaw)

ເທັກນິກຈິກຊໍ່ (jigsaw) ເປັນເທັກນິກຈັດກິດຈະກໍາການຮຽນ-ການສອນຮູບແບບໜຶ່ງໃນການຮຽນແບບຮ່ວມມື ແລະ ເໝາະສົມສໍາລັບການຮຽນເນື້ອໃນໃໝ່, ຈິກຊໍ່ (Jigsaw) ເປັນເທັກນິກການຈັດການຮຽນຮູ້ຄ້າຍໆກັບການຕໍ່ພາບຈິກຊໍ່ (Jigsaw) ຫຼື ປະທິສະນາຄວາມຄິດ.

### 5.1 ຄວາມໝາຍຂອງເທັກນິກຈິກຊໍ່ (Jigsaw)

ກົມວິຊາການ (2545:119) ໄດ້ໃຫ້ຄວາມໝາຍຂອງເທັກນິດຈິກຊໍ່ Jigsaw ເປັນກິດຈະກໍາທີ່ຄູຜູ້ສອນໄດ້ມອບໝາຍໃຫ້ສະມາຊິກໃນກຸ່ມແຕ່ລະກຸ່ມສຶກສາເນື້ອໃນທີ່ກໍານົດໃຫ້ສະມາຊິກແຕ່ລະຄົນຈະຖືກກໍານົດໂດຍກຸ່ມໃຫ້ສຶກສາເນື້ອໃນຄົນລະຕອນທີ່ແຕກຕ່າງກັນ, ຜູ້ຮຽນຈະໄປເຮັດວຽກຮ່ວມກັບສະມາຊິກກຸ່ມອື່ນໆ ທີ່ໄດ້ຮັບມອບໝາຍໃຫ້ສຶກສາເນື້ອໃນທີ່ຄືກັນຫຼັງຈາກທຸກຄົນສຶກສາເນື້ອໃນນັ້ນຈົນເຂົ້າໃຈແລ້ວຈິ່ງກັບມາເຂົ້າສູ່ກຸ່ມເດີມແລ້ວເລົ່າເລື່ອງທີ່ຕົນສຶກສາໃຫ້ສະມາຊິກຄົນອື່ນໆໃນກຸ່ມຟັງໂດຍລຽງຕາມລໍາດັບເລື່ອງລາວສໍາເລັດແລ້ວໃຫ້ສະມາຊິກໃນກຸ່ມຄົນໃດໜຶ່ງມາສະຫຼຸບເນື້ອໃນຂອງສະມາຊິກທຸກຄົນເຂົ້າໃຈດ້ວຍກັນ, ຄູຜູ້ສອນອາດກຽມຂໍ້ສອບກ່ຽວກັບບົດຮຽນນັ້ນໄວ້ທົດສອບຄວາມເຂົ້າໃຈເນື້ອໃນບົດຮຽນໃນຊ່ວງສຸດທ້າຍຂອງການຮຽນ-ການສອນ.

ຂັ້ນຕອນການຈັດການຮຽນຮູ້ໂດຍໃຊ້ເທັກນິກຈິກຊໍ່ (Jigsaw) ມີນັກສຶກສາຫຼາຍທ່ານໄດ້ສະເໜີຂັ້ນຕອນການຈັດການຮຽນຮູ້ໂດຍໃຊ້ເທັກນິກຈິກຊໍ່ (Jigsaw) ໄວ້ດັ່ງນີ້:

ສົມຄິດ ສະລອຍນໍ້າ (2542:132-133) ໄດ້ນໍາສເໜີຂັ້ນຕອນການຈັດການຮຽນຮູ້ໂດຍໃຊ້ເທັກນິກຈິກຊໍ່ (Jigsaw) ໄວ້ດັ່ງນີ້:

1. ຄູແບ່ງຫົວຂໍ້ທີ່ຈະຮຽນເປັນຫົວຂໍ້ຍ່ອຍໆໃຫ້ເທົ່າກັບສະມາຊິກຂອງແຕ່ລະກຸ່ມຄົນໃຫ້ເໝາະສົມ.

2. ຈັດໃຫ້ນັກຮຽນໂດຍໃຊ້ຕາມຄວາມສາມາດຂອງແຕ່ລະຄົນຢູ່ພາຍໃນກຸ່ມເປັນກຸ່ມບ້ານ (Home Group) ກຸ່ມລະ 3–4 ຄົນ. ສະມາຊິກແຕ່ລະຄົນໃນກຸ່ມອ່ານສະເພາະຫົວຂໍ້ຍ່ອຍທີ່ຕົນເອງໄດ້ຮັບມອບໝາຍເທົ່ານັ້ນ.

3. ນັກສຶກສາທີ່ອ່ານຫົວຂໍ້ຍ່ອຍດຽວກັນມານັ່ງນໍາກັນເພື່ອເຮັດວຽກຮ່ວມກັນ ແລະ ສອບຖາມກັນຕາມຈິດຈະກໍາໃນກຸ່ມຊ່ຽວຊານ (Expert group).

4. ນັກສຶກສາແຕ່ລະຄົນໃນກຸ່ມ (Expert group) ກັບມາຫາກຸ່ມເດີມ(Home group) ຂອງຕົນເອງແລ້ວພາກັນອະທິບາຍໃຫ້ເພື່ອສະມາຊິກໃນກຸ່ມຟັງເລີ່ມຈາກຫົວຂໍ້ຍ່ອຍທີ່1,2,3,4.

5. ການທົດສອບ (Quiz) ຫົວຂໍ້ຍ່ອຍທີ່ 1–4 ໃຫ້ແກ່ນັກຮຽນທຸກຄົນທັງຫ້ອງ (ສອບຫົວຂໍ້ດຽວກັນ)ແລ້ວນໍາຄະແນນຂອງສະມາຊິກແຕ່ລະກຸ່ມມາລວມກັນເປັນຄະແນນກຸ່ມ.

6. ກຸ່ມທີ່ໄດ້ຄະແນນສູງສຸດໃນການສອບຄັ້ງນີ້ຈະຕິດປະກາດໄວ້ໃນປ້າຍນິເທດຂອງຫ້ອງຫຼື ຈຸດໝາຍຂ່າວສານຂອງຫ້ອງ.

ສົນອົງ ອິນລະຄອນ (2544:122) ໄດ້ນໍາສະເໜີຂັ້ນຕອນການຈັດການຮຽນຮູ້ໂດຍໃຊ້ເທັກນິກຈິກຊໍ່ (Jigsaw) ໄວ້ດັ່ງນີ້:

1. ແບ່ງນັກສຶກສາເປັນກຸ່ມຕາມຄວາມສາມາດກຸ່ມລະ 4–6 ຄົນ, ແຕ່ລະກຸ່ມປະກອບດ້ວຍຄົນເກັ່ງ 1 ຄົນ, ປານກາງ 2-4 ຄົນ ແລະ ອ່ອນ 1 ຄົນ ແຕ່ລະກຸ່ມເລືອກປະທານ ແລະເລຂານຸການກຸ່ມເອີ້ນວ່າກຸ່ມບ້ານ (Home groups).

2. ກຸ່ມບ້ານ (Home groups) ແຕ່ລະກຸ່ມມອບໝາຍວຽກໃຫ້ສະມາຊິກຮັບຜິດຊອບດັ່ງນີ້:

ຜູ້ທີ່ 1 ຮັບຜິດຊອບເນື້ອໃນກິດຈະກໍາທີ່ 1
2 ຮັບຜິຮັບຜິດຊອບເນື້ອໃນກິດຈະກໍາທີ່ 2
3 ຮັບຜິຮັບຜິດຊອບເນື້ອໃນກິດຈະກໍາທີ່ 3
4 ຮັບຜິຮັບຜິດຊອບເນື້ອໃນກິດຈະກໍາທີ່ 4
5 ຮັບຜິດຊອບເນື້ອໃນກິດຈະກໍາທີ່ 5
6 ຮັບຜິຮັບຜິດຊອບເນື້ອໃນກິດຈະກໍາທີ່ 6

3. ຈັດກຸ່ມຊ່ຽວຊານ (Expert) ໂດຍໃຫ້ນັກຮຽນກຸ່ມບ້ານຂອງແຕ່ລະກຸ່ມຮັບຜິດຊອບເລື່ອງດຽວກັນໄປຮ່ວມກຸ່ມໃໝ່ແລ້ວສຶກສາເພື່ອຄວາມເຂົາໃຈເນື້ອໃນກິດຈະກໍາຮ່ວມກັນຈົນມີຄວາມເຂົ້າໃຈເລື່ອງນັ້ນ.

1. ກຸ່ມບ້ານ (Home group) ໂດຍໃຫ້ນັກຮຽນແຕ່ລະຄົນກັບກຸ່ມເດີມແລ້ວພາກັນອະທິບາຍໃຫ້ສະມາຊິກໃນກຸ່ມຟັງເລີ່ມຈາກເລື່ອງທີ່ 1, 2, 3 ໄປຈົນຄົບໝົດທຸກຄົນ, ສະມາຊິກໃນກຸ່ມສອບຖາມຈົນເຂົ້າໃຈ.

2. ແຕ່ລະກຸ່ມກຽມຕົວທົດສອບເປັນລາຍບຸກຄົນແລ້ວລວມຄະແນນ ຫຼື ສະເລ່ຍຄະແນນເປັນຄະແນນຂອງກຸ່ມ.

3. ມອບລາງວັນ ຫຼື ປະກາດຜົນງານແກ່ກຸ່ມທີ່ໄດ້ຄະແນນລວມສະເລ່ຍສູງສຸດ

ວັດທະພອນ ລະງັບສຸກ (2545:176) ໄດ້ນໍາສະເໜີຂັ້ນຕອນການຈັດກິດຈະກໍາການຮຽນຮູ້ໂດຍໃຊ້ເທັກນິກຈິກຊໍ່ (Jigsaw) ໄວ້ດັ່ງນີ້:

1. ຄູແບ່ງເນື້ອໃນການຮຽນອອກເປັນຫົວຂໍ້ຍ່ອຍໆ ໃຫ້ເທົ່າກັບຈໍານວນສະມາຊິກກຸ່ມ.

2. ຈັດກຸ່ມຜູ້ຮຽນຕາມຄວາມສາມາດເອີ້ນວ່າກຸ່ມບ້ານ (Home group) ແລ້ວມອບໝາຍໃຫ້ສະມາຊິກກຸ່ມແຕ່ລະຄົນສຶກສາຫົວຂໍ້ທີ່ຕ່າງກັນ.

3. ຜູ້ຮຽນໄດ້ຮັບຫົວຂໍ້ດຽວກັນຈາກແຕ່ລກຸ່ມມານັ່ງນຳກັນເພື່ອເຮັດວຽກ ແລະ ສຶກສານຳກັນໃນຫົວຂໍ້ດັ່ງກ່າວເອີ້ນວ່າ ຜູ້ຊ່ຽວຊານ (Expert group).

4. ສະມາຊິກແຕ່ລະຄົນອອກຈາກກຸ່ມຊ່ຽວຊານກັບໄປສູ່ກຸ່ມເດີມຂອງຕົນ, ພ້ອມກັນອະທິບາຍເພື່ອຖ່າຍທອດຄວາມຮູ້ທີ່ຕົນສຶກສາໃຫ້ໝູ່ເພື່ອນຟັງຈົນຄົບທຸກຫົວຂໍ້.

5. ຄູທົດສອບເນື້ອໃນທີ່ຈະສຶກສາແລ້ວໃຫ້ຄະແນນລາຍບຸກຄົນສະນັ້ນເຮົາຈຶ່ງສາມາດສະຫຼຸບໄດວ່າການຈັດການຮຽນ-ການສອນໂດຍໃຊ້ເທັກນິກຈິກຊໍ່(jigsaw)ໄດ້ຕາມຂັ້ນຕອນດັ່ງນີ້:

- ຄູຜູ້ສອນຕ້ອງໄດ້ກະກຽມບົດຮຽນ ແລະ ຈັດເນື້ອໃນບົດຮຽນໃຫ້ສອດຄ່ອງ ແລະເໝາະສົມກັບຜູ້ຮຽນດ້ວຍການໃຊ້ການແບ່ງເນື້ອໃນບົດຮຽນອອກເປັນຫົວຂໍ້ຍ່ອຍໆໃຫ້ເທົ່າກັບຈຳນວນສະມາຊິກຂອງແຕ່ລະກຸ່ມ.

- ຄູຜູ້ສອນຈັດນັກຮຽນອອກເປັນກຸ່ມຕາມຄວາມສາມາດນັກຂອງນັກຮຽນ ເກງ, ກາງແລະ ອ່ອນຕາມກຸ່ມບ້ານ (Home group) ຈຳນວນສະມາຊິກໃນກຸ່ມອາດຈະມີ 3–6 ຄົນ.

- ຄູໄດ້ຢາຍເອກະສານ ແລະ ອຸປະກອນໃຫ້ແຕ່ລະກຸ່ມ,ກຸ່ມລະ1 ຊຸດ ຫຼື ຈະໃຫ້ຄົບສະມາຊິກຄົນກໍ່ໄດ້, ທຸກກຸ່ມ ຫຼື ທຸກຄົນຈະໄດ້ສຶກສາເນື້ອໃນໃນເລື່ອງດຽວກັນຕາມການມອບໝາຍໃຫ້ສະມະາຊິກໃນກຸ່ມ ແລະ ຂອງແຕ່ລະຄົນຮັບຜິດຊອບສຶກສາຄົ້ນຄ້ວາຕາມກິດຈະກຳທີ່ຄູໃຫ້.

- ສະມາຊິກແຕ່ລະຄົນໃນກຸ່ມຕ້ອງເຮັດໜ້າທີເປັນຜູ້ຊ່ຽວຊານ (Expert group), ແຕ່ ລະຄົນແຈກຢາຍຈາກກຸ່ມບ້ານ (Home group) ໄປເຮັດກຸ່ມໃໝ່ເພື່ອສຶກສາເອກະສານ ຫຼື ຄົ້ນ ຄ້ເພີ່ມເຕີມໃນສ່ວນທີ່ຕົນເອງໄດ້ຮັບມອບໝາຍຈາກສະມາຊິກໃນກຸ່ມໃຫ້ສຶກສາຫົວຂໍ້ຍ່ອຍອັນດຽວກັນຈະໄດ້ໄປນັ່ງເປັນກຸ່ມດຽວກັນກຸ່ມລະ 3–6 ຄົນ ຫຼື ຕາມຈຳນວນຄູໄດ້ຈັດໃຫ້ອ່ານເພື່ອສຶກສາຄົ້ນຄວ້າແລ້ວມາສະຫຼຸບເນື້ອໃນບົດຮຽນໄປຕາມລຳດັບຂັ້ນຕອນການນຳສະເໜີ ແລະ ກຽມໄປອະທິບາຍໃຫ້ບ້ານ (Home group) ຟັງ.

- ຜູ້ຊ່ຽວຊານຂອງແຕ່ລະກຸ່ມກັບໄປເຂົ້າກຸ່ມເດີມຂອງຕົນແລ້ວຜັນປ່ຽນກັນອະທິບາຍເລື່ອງທີ່ຕົນເອງສຶກສາໃຫ້ສະມາຊິກກຸ່ມຟັງໄປຕາມລຳດັບຈົນຄົບແຕ່ຫົວຂໍ້ 1, 2, 3 ໄປຈົນໝົດດ້ວຍການຊັກຖາມກັນເພື່ອທົບທວນຄວາມເຂົ້າໃຈບົດຮຽນໄດ້ຢ່າງຊັດເຈນ.

- ຄູຜູ້ສອນໄດ້ໃຫ້ນັກຮຽນແຕ່ລະຄົນເຮັດການທົດສອບກ່ຽວກັບເນື້ອໃນຄວາມຮູ້ທຸກຫົວຂໍ້ທີ່ຮຽນຮູ້ແລ້ວນຳເອົາຄະແນນຂອງສະມາຊິກແຕ່ລະຄົນໃນກຸ່ມມາລວມກັນມາເປັນຄະແນນຂອງກຸ່ມແລ້ວມອບລາງວັນ ຫຼື ຄຳຊົມເຊີຍໃຫ້ກຸ່ມທີ່ມີຄະແນນສູງສຸດ.

### 5.2 ການສອນແບບຈິກຊໍ່ (Jigsaw) ມີອົງປະກອບທີ່ສຳຄັນ 3 ດ້ານຄື

1) ການກະກຽມສື່ການຮຽນ-ການສອນ (Preparation of Materials) ຄູສ້າງກິດຈະກຳໃຫ້ຜູ້ຊ່ຽວຊານແຕ່ລະຄົນຂອງກຸ່ມ ແລະ ສ້າງແບບທົດສອບຍ່ອຍໃນແຕ່ລະໜ່ວຍການຮຽນ,

ແຕ່ຖ້າມີເອກະສານຮຽນຢູ່ແລ້ວຍິ່ງເຮັດໃຫ້ງ່າຍຂຶ້ນໄດ້ໂດຍແບ່ງເນື້ອໃນແຕ່ລະຫົວຂໍ້ເລື່ອງທີ່ຈະສອນເພື່ອເຮັດກິດຈະກຳໃຫ້ສຳລັບຜູ້ຊ່ຽວຊານໃນກິດຈະກຳຄວນບອກວ່ານັກຮຽນຕ້ອງເຮັດຫຍັງ ເຊັ່ນ: ໃຫ້ອ່ານກິດຈະກຳອັນໃດ, ອ່ານຫົວຂໍ້ໃດ, ຈາກກິດຈະກຳໃດ ແລະ ຮອດໜ້າໃດ ຫຼື ໃຫ້ນັກສຶກສາເບິ່ງວິດີໂອ ຫຼື ໃຫ້ລົງມືປະຕິບັດການທົດລອງພ້ອມກັບມີຄຳຖາມຕອນທ້າຍຂອງກິດຈະກຳ.

2) ການຈັດສະມາຊິກຂອງກຸ່ມ ແລະ ຂອງກຸ່ມຜູ້ຊ່ຽວຊານ (Teams and Expert Groups) ອອກເປັນກຸ່ມ (Home Groups) ແຕ່ລະກຸ່ມຈະມີຜູ້ຊ່ຽວຊານໃນແຕ່ລະເລື່ອງຕາມກິດຈະກຳທີ່ສ້າງຂຶ້ນ, ຄູແຈກກິດຈະກຳໃຫ້ຜູ້ຊ່ຽວຊານແຕ່ລະຄົນໃນກຸ່ມ ແລະ ໃຫ້ຜູ້ຊ່ຽວຊານແຕ່ລະຄົນສຶກສາກິດຈະກຳຂອງຕົນກ່ອນທີ່ຈະແຍກໄປຕາມກຸ່ມຂອງຜູ້ຊ່ຽວຊານ (Expert Groups) ເພື່ອເຮັດຕາມກິດຈະກຳນັ້ນໆ ເມື່ອນັກຮຽນພ້ອມທີ່ຈະເຮັດກິດຈະກຳ, ຄູແຍກກຸ່ມນັກຮຽນໃໝ່ຕາມກິດຈະກຳໃນກຸ່ມຜູ້ຊ່ຽວຊານແຕ່ລະກຸ່ອາດແຕກຕ່າງກັນ, ຄູພະຍາຍາມກະຕຸ້ນໃຫ້ນັກສຶກສາໄດ້ສຶກສາຫົວຂໍ້ຕາມກິດຈະກຳທີ່ແຕກຕ່າງກັນ. ດັ່ງນັ້ນກິດຈະກຳທີ່ຄູສ້າງຂຶ້ນຈຶ່ງມີຄວາມສຳຄັນຫຼາຍເພາະໃນກິດຈະກຳຈະນຳສະເໜີດ້ວຍກິດຈະກຳທີ່ແຕກຕ່າງກັນເຊິ່ງຜູ້ຊ່ຽວຊານໃນແຕ່ລະກຸ່ມອາດຈະລົງມືປະຕິບັດການທົດລອງສຶກສາກ່ຽວກັບສິ່ງໄດ້ຮັບມອບໝາຍ, ພ້ອມກະກຽມນຳສະເໜີສິ່ງນັ້ນຢ່າງສັ້ນໆເພື່ອວ່າເຂົາຈະນຳກັບໄປສອນສະມາຊິກຄົນອື່ນໆໃນກຸ່ມທີ່ໄດ້ສຶກສາໃນຫົວຂໍ້ດັ່ງກ່າວ.

3) ການລາຍງານ ແລະ ການທົດສອບຍ່ອຍ (Reports and Quizzes) ເມື່ອກຸ່ມຜູ້ຊ່ຽວຊານແຕ່ລະກຸ່ມເຮັດວຽກສຳເລັດແລ້ວ, ຜູ້ຊ່ຽວຊານແຕ່ລະຄົນກໍ່ກັບໄປສູ່ກຸ່ມເດີມຂອງຕົນເອງ (Home Groups) ແລ້ວສອນເລື່ອງທີ່ຕົນເອງເຮັດໃຫ້ກັບສະມາຊິກຄົນອື່ນໆໃນກຸ່ມ, ຄູກະຕຸ້ນໃຫ້ນັກຮຽນໃຊ້ວິທີການຕ່າງໆໃນການນຳສະເໜີສິ່ງທີ່ຈະສອນນັກຮຽນອາດຈະໃຊ້ວິທີການສາທິດ, ອ່ານລາຍງານ, ໃຊ້ຄອມພິວເຕີ, ຮູບຖ່າຍໃນການນຳສະເໜີຄວາມຄິດເຫັນ, ຄູກະຕຸ້ນໃຫ້ສະມາຊິກໃນກຸ່ມໄດ້ມີການອະທິບາຍ ແລະ ຊັກຖາມບັນຫາຕ່າງໆ ໂດຍສະມາຊິກແຕ່ລະຄົນຕ້ອງມີຄວາມຮັບຜິດຊອບໃນການຮຽນຮູ້ແຕ່ລະເລື່ອງ ທີ່ຜູ້ຊ່ຽວຊານແຕ່ລະຄົນນຳສະເໜີ.

4) ວິທີສອນແມ່ນໃຊ້ແບບຈິກຊໍ່ (Jigsaw) ເປັນຮູບແບບການຮຽນ-ການສອນທີ່ສົ່ງເສີມການຮຽນຮູ້ແບບຮ່ວມມືຮູບແບບໜຶ່ງ, ວິທີຫຼັກໆແມ່ນການຈັດການຮຽນ-ການສອນເປັນກຸ່ມເພື່ອສຶກສາເນື້ອໃນ, ການທົດສອບ, ການຄິດໄລ່ ແລະ ລະບົບການໃຫ້ລາງວັນເພື່ອສະໜອງຈຸດປະສົງສະເພາະແມ່ນໃຊ້ຫຼັກການຮຽນຮູ້ແບບຮ່ວມມື 5 ປະການ ແລະ ມີຈຸດປະສົງໄປຕາມຮູບແບບດຽວກັນເພື່ອຊ່ວຍໃຫ້ນັກຮຽນເກີດມີການຮຽນຮູ້ໃນເລື່ອງທີ່ສຶກສາຫຼາຍທີ່ສຸດໂດຍອາໄສການຮ່ວມມືກັນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ແລກປ່ຽນຄວາມຮູ້ກັນລະຫວ່າງກຸ່ມຜູ້ຮຽນດ້ວຍກັນ. ວິທີການເສີມແຮງ ແລະ ການໃຫ້ລາງວັນເປັນປັດໃຈທີ່ສຳຄັນທີ່ສຸດ.

ຂະບວນການຮຽນ-ການສອນຮູບແບບຈິກຊໍ່ແມ່ນອີງຕາມທິດສະດີຂອງ ທິດສະໜາ ແຂມມະນີ (2551) ວິທີຈັດກຸ່ມແມ່ນອີງຕາມຄວາມເໝາະສົມຂອງນັກສຶກສາ ແລະ ສະຖານທີ່ຮຽນຄື:

1. ຈັດຜູ້ຮຽນເຂົ້າກຸ່ມໂດຍປະກອບມີນັກຮຽນ ເກັ່ງ, ກາງ ແລະ ອ່ອນ, ກຸ່ມລະ 4 ຄົນ.

2. ສະມາຊິກໃນກຸ່ມສຶກສາເນື້ອໃນບົດຮຽນ ແລະ ຫາຄຳຕອບໃນປະເດັນບັນຫາທີ່ຜູ້ສອນມອບໝາຍໃຫ້.

3. ສະມະຊິກໃນກຸ່ມແຕ່ລະກຸ່ມແຈກຍາຍກັນໄປຮ່ວມກັບສະມະຊິກກຸ່ມອື່ນເຊິ່ງໄດ້ຮັບເນື້ອໃນດຽວກັນແລ້ວຕັ້ງເປັນກຸ່ມໃໝ່ ແລະ ຮ່ວມກັນທຳຄວາມເຂົ້າໃຈເນື້ອໃນບົດຮຽນຢ່າງລະອຽດ ແລະ ຮ່ວມກັນອະທິບາຍຄຳຕອບປະເດັນບັນຫາທີ່ຜູ້ສອນມອບໝາຍໃຫ້.

4. ສະມະຊິກກຸ່ມໃໝ່ກັບໄປສູ່ກຸ່ມເດີມແຕ່ລະກຸ່ມຊ່ວຍສອນໝູ່ຄູ່ພາຍໃນກຸ່ມເດີມໃຫ້ເຂົ້າໃຈເນື້ອໃນບົດຮຽນທີ່ຕົນເອງໄປສຶກສາຮ່ວມກັບກຸ່ມໃໝ່, ນັກສຶກສາທຸກຄົນເຮັດແບບທົດສອບ, ແຕ່ລະຄົນຈະໄດ້ຄະແນນເປັນຂອງບຸກຄົນ ແລະ ນຳເອົາຄະແນນບຸກຄົນໃນກຸ່ມເກົ່າມາລວມກັນແລ້ວມາຫາຄ່າສະເລ່ຍເປັນຄະແນນກຸ່ມ .

3. ວິທີສອນແບບຈິກຊໍ່ (Jigsaw)

ເປັນຮູບແບບການຈັດການຮຽນ-ການສອນທີ່ສົ່ງເສີມການຮຽນຮູ້ແບບການຮ່ວມມືແບບໜຶ່ງ, ວິທີການຫຼັກໆໄດ້ແກ່ການຈັດກຸ່ມການສຶກສາເນື້ອໃນການທົດສອບ, ການຄິດໄລຄະແນນ ແລະ ລະບົບການໃຫ້ລາງວັນເພື່ອສະໜອງຈຸດປະສົງສະເພາະເຊິ່ງໃຊ້ຫຼັກການການຮຽນຮູ້ແບບຮ່ວມມື 5 ປະການ ແລະ ມີຈຸດປະສົງກົງກັບທິດທາງດຽວກັນເພື່ອຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ກັບເລື່ອງທີ່ສຶກສາຫຼາຍທີ່ສຸດໂດຍອາໄສການຮ່ວມມືກັນ ແລະ ຊ່ວຍເຫຼືອກັນ, ແລກປ່ຽນຄວາມຮູ້ກັນໃນກຸ່ມຜູ້ຮຽນນຳກັນ, ຄວາມແຕກຕ່າງຂອງຮູບແບບຈະຢູ່ກັບເທັກນິກໃນການສຶກສາເນື້ອໃນ, ວິທີການສົ່ງເສີມແຮງ ແລະ ການໃຫ້ລາງວັນເປັນສິ່ງສຳຄັນທີ່ສຸດ, ຂະບວນການຮຽນ-ການສອນຂອງຮູບແບບຈິກຊໍ່ (Jigsaw) ມີດັ່ງນີ້:

1. ຈັດຜູ້ຮຽນເຂົ້າກຸ່ມຕາມຄວາມສາມາດ (ເກັ່ງ, ກາງ ແລະ ອ່ອນ) ກຸ່ມລະ 4 ຄົນ ແລະ ເອີ້ນກຸ່ມນີ້ວ່າກຸ່ມບ້ານ (Home group).

2. ສະມາຊິກກຸ່ມບ້ານໄດ້ສຶກສາເນື້ອໃນຄົນລະໜຶ່ງສ່ວນ ປ່ຽນກັນໄປນຳສະເໜີ ແລະ ຫາຄຳຕອບໃນປະເດັນບັນຫາທີ່ຜູ້ສອນມອບໝາຍໃຫ້.

3. ສະມາຊິກກຸ່ມບ້ານແຈກຍາຍກັນໄປຮ່ວມກັບສະມາຊິກກຸ່ມອື່ນ ເຊິ່ງໄດ້ຮັບເນື້ອໃນດຽວກັນ, ຕັ້ງເປັນກຸ່ມຜູ້ຊ່ຽວຊານ (Expert group) ຂຶ້ນມາ ແລະ ຮ່ວມກັນສຶກສາໃຫ້ເຂົ້າໃຈເນື້ອໃນບົດຮຽນນັ້ນຢ່າງລະອຽດ ແລະ ຮ່ວມອະທິບາຍຄຳຕອບຕາມປະເດັນຜູ້ສອນມອບໝາຍໃຫ້.

4. ສະມາຊິກຜູ້ຊ່ຽວຊານກັບໄປສູ່ກຸ່ມບ້ານແລ້ວແຕ່ລະກຸ່ມຊ່ວຍສອນໝູ່ເພື່ອນໃນກຸ່ມໃຫ້ເຂົ້າໃຈເນື້ອໃນທີ່ຕົນໄດ້ສຶກສາຮ່ວມກັບກຸ່ມຜູ້ຊ່ຽວຊານເຊັ່ນວ່າ: ສະມາຊິກທຸກຄົນກໍ່ຈະໄດ້ຮຽນຮູ້ເນື້ອໃນບົດຮຽນທັງໝົດ.

5. ຜູ້ຮຽນທຸກຄົນເຮັດແບບທົດສອບ, ແຕ່ລະຄົນຈະໄດ້ຄະແນນເປັນລາຍບຸກຄົນ ແລະ ນຳຄະແນນຂອງທຸກຄົນໃນກຸ່ມບ້ານມາລວມກັນ ຫຼື ຫາຄ່າສະເລ່ຍເປັນຄະແນນກຸ່ມ, ກຸ່ມທີ່ໄດ້ຄະແນນສູງສຸດໄດ້ຮັບລາງວັນ (ທິດສະໜາ ແຂມມະນີ, 2551).

ນິ່ງໄທ ວາມຕາ (2549) ໄດ້ສະແດງທັດສະນະໄວ້ວ່າໃນຊ່ວງທຳອິດຂອງການສອນອ່ານພາສາອັງກິດ ຫຼື ຊ່ວງການຖງມການສອນນັ້ນຜູ້ຮຽນຈະຕ້ອງໄດ້ຮັບການທົບທວນ ແລະ ຝຶກໃຊ້ວິທີການອ່ານເພື່ອເຮັດໃຫ້ຄວາມເຂົ້າໃຈ, ເພື່ອໃຫ້ເກີດມີຄວາມສະມັກ ແລະ ມີຄວາມຊຳນານໃນການໃຊ້ວິທີການອ່ານທີ່ເປັນປະໂຫຍດ ແລະ ເປັນພື້ນຖານໃນການສອນອ່ານທັງ 6 ວິທີອັນປະກອບໄປດ້ວຍ.

1.1.ການຄາດເດົາບົດອ່ານເປັນກົດວິທີການອ່ານທີ່ເຮັດໃຫ້ຜູ້ຮຽນສາມາດສຶກສາອົງປະກອບຕ່າງໆຂອງບົດອ່ານ, ອະທິບາຍຮູບພາບ, ຊື່ເລື່ອງ ແລະ ຂໍ້ຄວາມລວມທັງຄວາມຮູ້ ແລະ ປະສົບການສ່ວນຕົວກ່ຽວກັບເລື່ອງທີ່ຈະອ່ານຄາດເດົາກ່ຽວກັບເນື້ອໃນ ແລະ ຄຳສັບກ່ອນທີ່ຈະເລີ່ມຕົ້ນໃນການອ່ານ ໂດຍການຄາດເດົາກ່ອນການເລີ້ມຕົ້ນອ່ານຈະຊ່ວຍໃຫ້ຜູ້ຮຽນສາມາດສ້າງການເຊື່ອມຕໍ່ລະຫວ່າງຂໍ້ມູນໃໝ່ ແລະ ຄວາມຮູ້ເດີມທີ່ມີເພື່ອສ້າງຄວາມເຂົ້າໃຈຄວາມໝາຍໃນແຕ່ລະຕົວອັກສອນ ຫຼື ແຕ່ລະຄຳສັບ, ປະໂຫຍກ ແລະ ດ້ານເນື້ອໃນ, ສ່ວນປະກອບອື່ນໆຂອງການອ່ານ.

1.2.ການຕັ້ງຄຳຖາມກ່ຽວກັບບົດອ່ານຫຼືອີກຢ່າງໜຶ່ງຄືການຕັ້ງຄຳຖາມຜູ້ຂຽນ (Questioning the Author) ເປັນເທັກນິກການອ່ານທີ່ເນັ້ນການສ້າງຄວາມເຂົ້າໃຈເນື້ອໃນຂອງບົດອ່ານດ້ວຍການອະທິບາຍກຸ່ມ ຫຼື ໃຊ້ຂະບວນການທາງສັງຄົມຂອງຜູ້ຮຽນເພື່ອສ້າງຄວາມເຂົ້າໃຈ ແລະ ກວດສອບຄວາມເຂົ້າໃຈໃນສິ່ງທີ່ອ່ານໂດຍການອະທິບາຍກຸ່ມເພື່ອແລກປ່ຽນຄວາມຄິດຄວາມເຫັນ (Interchange of Ideas) ເຊິ່ງກັນ ແລະ ກັນ, ຜູ້ຮຽນໄດ້ທ້ອນຄວາມຄິດຂອງຕົນເອງ ແລະ ໝູ່ເພື່ອນອອກມາໃນຮູບແບບການອະທິບາຍ ຫຼື ຄວາມຄິດເຫັນທີ່ຈະເຮັດໃຫ້ເກີດມີຄວາມເຂົ້າໃຈໃນສິ່ງຕ່າງໆຂອງສິ່ງທີ່ອ່ານ ແລະ ສາມາດສ້າງຄວາມໝາຍ (Constructing Meaning) ຈາກສິ່ງທີ່ອ່ານແມ່ນຊ່ວຍໃຫ້ການຕັ້ງຄຳຖາມຈາກບົດອ່ານໄດ້ຈິ່ງເປັນສ່ວນໜຶ່ງຂອງຂະບວນການຮຽນຮູ້ທີ່ຊ່ວຍໃຫ້ຜູ້ຮຽນສ້າງຄວາມຮູ້, ຄວາມເຂົ້າໃຈ ແລະ ພັດທະນາຄວາມຄິດໃໝ່ໆເນື່ອງຈາກຂະບວນການຖາມຈະຊ່ວຍຂະຫຍາຍທັກສະການຄິດ, ທຳຄວາມເຂົ້າໃຈໃຫ້ກະຈ່າງແຈ້ງ, ໄດ້ຂໍ້ມູນປ້ອນກັບທາງດ້ານການຮຽນ-ການສອນກໍ່ເຮັດໃຫ້ເກີດການທົບທວນການເຊື່ອມໂຍງລະຫວ່າງຄວາມຄິດຕ່າງໆສົ່ງເສີມຄວາມຢາກຮູ້ຢາກເຫັນ ແລະ ເກີດຄວາມທ້າທາຍ.

1.3.ການເດົາຄວາມໝາຍຂອງຄຳສັບຈາກບໍລິບົດເປັນການທຳຄວາມເຂົ້າໃຈເນື້ອໃນຂອງຄຳສັບທີ່ຍາກປະກົດມີຢູ່ໃນບົດອ່ານເພື່ອໃຫ້ຜູ້ຮຽນທຳຄວາມເຂົ້າໃຈເນື້ອໃນຂອງບົດເລື່ອງຄຽງຄູ່ໄປກັບການເຮັດໃຫ້ມີຄວາມເຂົ້າໃຈສັບ ຫຼື ບໍລິບົດທີ່ຢາກແກ່ການເຂົ້າໃຈດ້ວຍວິທີທາງຕ່າງໆ, ການອ່ານປະໂຫຍກຊ້ຳ, ການອ່ານປະໂຫຍກກ່ອນ ແລະ ຫຼັງທີ່ຢູ່ໃນບໍລິບົດດຽວກັນເພື່ອຫາຕົວບົ່ງຊີ້ຄວາມໝາຍ, ການສັງເກດຄຳອຸທານ ແລະ ປັດໃຈການແຍກສ່ວນປະກອບຫຍໍ້ຂອງຄຳເພື່ອຫາຄວາມໝາຍເຊິ່ງຈະເຮັດໃຫ້ຜູ້ຮຽນສາມາດທຳຄວາມເຂົ້າໃຈສິ່ງທີ່ອ່ານໄດ້ຢ່າງຖືກຕ້ອງ ແລະ ສາມາດຈົດຈຳເນື້ອໃນທີ່ອ່ານໄດ້ດີຂຶ້ນ.

1.4. ການເຊື່ອມໂຍງຄວາມຮູ້ເດີມກັບບົດອ່ານເປັນວິທີການອ່ານທີ່ເນັ້ນໃຫ້ຜູ້ຮຽນໃຊ້ຂະບວນການຮຽນຮູ້ດ້ວຍຕົນເອງໃນລະຫວ່າງການອ່ານ, ໃນການແຍກໄລຍະລະຫວ່າງທີ່ຕົນມີຄວາມຮູ້ຢູ່ກ່ອນແລ້ວ ແລະ ທີ່ຕົນຍັງບໍ່ທັນຮູ້ ຫຼື ຕ້ອງການທີ່ຈະຮູ້ເພື່ອທຳຄວາມເຂົ້າໃຈເນື້ອໃນບົດຮຽນ ແລະ ເຊື່ອມໂຍງຄວາມຮູ້ໃໝ່ທາງພາສາທີ່ໄດ້ຮັບກັບຄວາມຮູ້ເດີມກ່ຽວກັບເນື້ອໃນບົດຮຽນຈົນສາມາດສ້າງອົງຄວາມຮູ້ໃໝ່ຈາກການຄິດ, ວິເຄາະຂອງຕົນເອງໄດ້ຢ່າງສ້າງສັນ.

1.5. ການສະຫຼຸບໃຈຄວາມສຳຄັນຄືການເລືອກເອົາສະເພາະສິ່ງທີ່ເປັນປະເດັນສຳຄັນຂອງເນື້ອເລື່ອງ ແລະ ການສະໜັບສະໜູນປະເດັນນັ້ນສັ້ນໆ ດ້ວຍຖ້ອຍຄຳພາສາຂອງຜູ້ຮຽນເຊິ່ງຜູ້ອ່ານໄດ້ອ່ານເນື້ອໃນບົດເລື່ອງນັ້ນຢ່າງເຂົ້າໃຈເພື່ອຈະສະຫຼຸບປະເດັນທີ່ສຳຄັນຂອງເລື່ອງນັ້ນທັງໝົດໄດ້ຢ່າງຄົບຖ້ວນຊັດເຈນ ແລະ ສ້າງຄວາມຄິດຂອງຕົນເອງໃນຂະນະທີ່ສະຫຼຸບນັ້ນ, ການສະຫຼຸບຄວາມຈິງເປັນປະໂຫຍດຢ່າງຫຼວງຫຼາຍໃນການອ່ານເນື່ອງຈາກຈະຊ່ວຍໃຫ້ຜູ້ຮຽນມີສະມາຊິກໃນການອ່ານຫຼາຍຂຶ້ນເຮັດໃຫ້ການຈັດລະບຽບຂໍ້ມູນທີ່ໄດ້ຈາກການອ່ານເປັນໄປຢ່າງມີລະບົບສາມາດລວບລວມຂໍ້ມູນຂ່າວສານຕ່າງໆຈາກການອ່ານໄປໃຊ້ໃຫ້ເປັນປະໂຫຍດໄດ້ຢ່າງຖືກຕ້ອງຄົບຖ້ວນທັງຊ່ວຍໃຫ້ຜູ້ອ່ານເຂົ້າໃຈ ແລະ ຈົດຈຳຂໍ້ມູນເຫຼົ່ານັ້ນໄດ້ງ່າຍ, ການທົບທວນເນື້ອໃນເປັນວິທີທີ່ໃຊ້ເມື່ອສຳເລັດການອ່ານໂດຍໃຫ້ຜູ້ຮຽນໄດ້ທົບທວນປະເດັນສຳຄັນ ຫຼື ພິຈາລະນາເນື້ອໃນຂອງສິ່ງທີ່ໄດ້ອ່ານອີກຄັ້ງໜຶ່ງເພື່ອກວດສອບຄວາມຖືກຕ້ອງກ່ຽວກັບຄວາມຮູ້ຄວາມເຂົ້າໃຈຂອງຕົນເອງຕໍ່ໃນຂັ້ນຕອນນີ້ຄູສາມາດໃຫ້ຂໍ້ມູນເດີມໃຫ້ແກ່ຜູ້ຮຽນ, ຂໍ້ມູນນັ້ນເປັນຂໍ້ມູນທີ່ສຳຄັນທີ່ຈະເຮັດໃຫ້ເກີດມີຄວາມເຂົ້າໃຈບົດເລື່ອງນັ້ນໂດຍສະເພາະສານຜູ້ຮຽນຕ້ອງການສິ່ງຜ່ານມາຍັງຜູ້ອ່ານດ້ວຍວິທີນີ້ຜູ້ຮຽນຈິ່ງບໍ່ພຽງແຕ່ຈົດຈຳຄວາມຮູ້ທີ່ແທ້ຈິງໄດ້ຢ່າງດຽວ, ແຕ່ຊ່ວຍໃຫ້ຜູ້ຮຽນຄິດວິເຄາະໄດ້ຢ່າງເລິກເຊິ່ງເພື່ອໃຫ້ເກີດຄວາມເຂົ້າໃຈສະຫຼະທີ່ສຳຄັນຂອງເລື່ອງທີ່ອ່ານໄດ້ຢ່າງຖືກຕ້ອງໂດຍຫຼັງຈາກທີ່ຜູ້ຮຽນມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບການໃຊ້ກົດວິທີອ່ານດັ່ງກ່າວໄດ້ແລ້ວຈະເຂົ້າສູ່ກິດຈະກຳການອ່ານພາຍໃນແນວຄິດການຮຽນແບບຮ່ວມມື.

Barkley, E. F (2004:4-5) ກ່າວວ່າການຮຽນແບບຮ່ວມມືໝາຍເຖິງຂະບວນການຮຽນທີ່ເນັ້ນການຈັດກຸ່ມ ຫຼື ການມີສ່ວນຮ່ວມລະຫວ່າງຄະນະ ແລະ ໝູ່ເພື່ອນເຊິ່ງອາດຈະຈັດເປັນຄູ່ ຫຼື ເປັນກຸ່ມຍ່ອຍເພື່ອເຮັດວຽກຕາມຈຸດມຸ້ງໝາຍຮ່ວມກັນໂດຍເນັ້ນການມີສ່ວນຮ່ວມຂອງຜູ້ຮຽນເປັນຜູ້ກະທຳ ແລະ ປະຕິສຳພັນຕໍ່ກັນໃນສ່ວນຜູ້ຮຽນ ແລະ ຜູ້ສອນເນື່ອງຈາກການຮຽນແບບຮ່ວມມືເປັນການຮຽນທີ່ເນັ້ນຜູ້ຮຽນເປັນສູນກາງຫຼາຍກວ່າຄູເປັນສູນກາງການຮຽນຮູ້ດັ່ງນັ້ນການຈັດການຮຽນ-ການສອນຕ້ອງຄຳນຶງເຖິງພື້ນຖານທີ່ສຳຄັນ 3 ປະການຄື:

1. ການຈັດການຮຽນ-ການສອນທີ່ເໝາະສົມໂດຍຜູ້ສອນຈຳເປັນຕ້ອງຈັດກິດຈະກຳການຮຽນ-ການສອນໃຫ້ສອດຄ່ອງກັບລັກສະນະຂອງກຸ່ມການຮຽນຮູ້.

2. ການຮ່ວມມືກັນພາຍໃນກຸ່ມເຊິ່ງຜູ້ຮຽນແຕ່ລະຄົນໃນກຸ່ມຕ້ອງເຮັດວຽກຮ່ວມກັນເພື່ອໃຫ້ບັນລຸຕາມເປົ້າໝາຍ ແລະ ຈຸດປະສົງຂອງບົດຮຽນທີ່ໄດ້ກຳນົດໄວ້ໂດຍທີ່ທຸກຄົນຕ້ອງມີສ່ວນຮ່ວມໃຫ້ເທົ່າທຽມກັນ.

3. ເນື້ອໃນການຮຽນ-ການສອນຕ້ອງເໝາະສົມກັບຈຸດປະສົງຂອງບົດຮຽນ, ລະດັບຄວາມສາມາດຂອງຜູ້ຮຽນຕໍ່ຂະບວນການກຸ່ມໂດຍຜູ້ຮຽນສາມາດຮ່ວມມືກັນເພື່ອເຮັດວຽກໃຫ້ສຳເລັດໄດ້.

**5.4 ຂັ້ນຕອນການສອນແບບຈິກຊໍ່ (Jigsaw) ມີດັ່ງນີ້:**

ຂັ້ນຕອນທີ 1 ຄູແບ່ງຫົວຂໍ້ທີ່ຈະຮຽນອອກເປັນຫົວຂໍ້ຍ່ອຍໆເທົ່າກັບຈຳນວນສະມາຊິກຂອງແຕ່ລະກຸ່ມໃຫ້ແບ່ງເນື້ອໃນອອກເປັນສ່ວນໆເທົ່າກັນ.

ຂັ້ນຕອນທີ 2 ຈັດກຸ່ມນັກສຶກສາໃຫ້ມີສະມາຊິກທີ່ມີຄວາມສາມາດແຕກຕ່າງກັນເປັນກຸ່ມພື້ນຖານ ຫຼື (Home Groups) ຈຳນວນສະມາຊິກໃນກຸ່ມອາດມີ 3 – 4 ຄົນກໍ່ໄດ້ຈາກນັ້ນແຍກເອກະສານ ຫຼື ອຸປະກອນການສອນໃຫ້ກຸ່ມລະໜຶ່ງຊຸດ ຫຼື ໃຫ້ຄົນລະຊຸດກໍ່ໄດ້, ກຳນົດໃຫ້ສະມາຊິກແຕ່ລະຄົນຮັບຜິດຊອບອ່ານເອກະສານພຽງ 1 ສ່ວນທີ່ໄດ້ຮັບມອບໝາຍເທົ່ານັ້ນ, ຖ້າຫາກແຕ່ລະກຸ່ມໄດ້ຮັບເອກະສານພຽງຊຸດດຽວໃຫ້ນັກສຶກສາແຍກເອກະສານອອກເປັນສ່ວນໆຕາມຫົວຂໍ້ຍ່ອຍໃນແຕ່ລະກຸ່ມດັ່ງນີ້:

| | | | |
|---|---|---|---|
| ຜູ້ທີ່ | 1 | ຮັບຜິດຊອບເນື້ອໃນກິດຈະກຳທີ່ | 1 |
| | 2 | ຮັບຜິຮັບຜິດຊອບເນື້ອໃນກິດຈະກຳທີ່ | 2 |
| | 3 | ຮັບຜິຮັບຜິດຊອບເນື້ອໃນກິດຈະກຳທີ່ | 3 |
| | 4 | ຮັບຜິຮັບຜິດຊອບເນື້ອໃນກິດຈະກຳທີ່ | 4 |
| | 5 | ຮັບຜິດຊອບເນື້ອໃນກິດຈະກຳທີ່ | 5 |
| | 6 | ຮັບຜິຮັບຜິດຊອບເນື້ອໃນກິດຈະກຳທີ່ | 6 |

ຂັ້ນຕອນທີ 3 ເປັນການສຶກສາໃນກຸ່ມຜູ້ຊ່ຽວຊານ (Expert Groups) ນັກຮຽນຈະແຈກຢາຍຈາກກຸ່ມພື້ນຖານ (Home Groups) ໄປຈັບກຸ່ມໃໝ່ເພື່ອສຶກສາເອກະສານສ່ວນທີ່ໄດ້ຮັບມອບໝາຍໂດຍຄົນທີ່ໄດ້ຮັບມອບໝາຍໃຫ້ສຶກສາເອກະສານຫົວຂໍ້ດຽວກັນຈະໄປນັ່ງເປັນກຸ່ມດຽວກັນກຸ່ມລະ 3 ຫຼື 4 ຄົນແລ້ວແຕ່ຈຳນວນສະມາຊິກຂອງກຸ່ມທີ່ຄູກຳນົດ. ໃນກຸ່ມຜູ້ຊ່ຽວຊານສະມາຊິກຈະອ່ານເອກະສານ, ສະຫຼຸບເນື້ອໃນ, ຈັດລະດັບຂັ້ນຕອນການນຳສະເໜີເພື່ອກຽມທຸກຄົນໃຫ້ມີຄວາມພ້ອມທີຈະໄປສອນຫົວຂໍ້ນັ້ນໃຫ້ກຸ່ມເດີມຂອງຕົນເອງ.

ຂັ້ນຕອນທີ 4 ນັກສຶກສາແຕ່ລະຄົນໃນກຸ່ມຜູ້ຊ່ຽວຊານກັບສູ່ກຸ່ມເດີມຂອງຕົນເອງແລ້ວຜັນປ່ຽນໝູນວຽນກັນອະທິບາຍໃຫ້ໝູ່ເພື່ອນໃນກຸ່ມຟັງແຕ່ລະຫົວຂໍ້ ແລະ ມີການຊັກຖາມຂໍ້ສົງໄສຕອບບັນຫາ, ທົບທວນບົດຮຽນໃຫ້ເຂົ້າໃຈຊັດເຈນ.

ຂັ້ນຕອນທີ 5 ນັກສຶກສາແຕ່ລະຄົນເຮັດແບບທົດສອບກ່ຽວກັບເນື້ອໃນທັງໝົດທຸກຫົວແລ້ວນຳເອົາຄະແນນຂອງສະມາຊິກແຕ່ລະຄົນໃນກຸ່ມມາລວມກັນເປັນຄະແນນກຸ່ມ.

ຂັ້ນຕອນທີ 6 ກຸ່ມທີ່ໄດ້ຄະແນນສູງສຸດຈະໄດ້ຮັບລາງວັນ ຫຼື ການຊົມເຊີຍ, ການສອນແບບຈິກຊໍ່ (Jigsaw) ເປັນການສອນທີ່ອາດນຳໄປໃຊ້ໃນການທົບທວນເນື້ອໃນທີ່ມີຫຼາຍໆຫົວຂໍ້

ຫຼື ໃຊ້ກັບບົດຮຽນທີ່ເນື້ອໃນແບ່ງແຍກເປັນສ່ວນໆໄດ້ ແລະ ເປັນເນື້ອໃນທີ່ນັກຮຽນສຶກສາຈາກເອກະສານ ແລະ ສື່ການສອນ ສະວິດ ມູນຄຳ ແລະ ອໍລະໄທ ມູນຄຳ (2545:178-180).

## 6. ຄວາມໝາຍການຮຽນຮູ້ແບບຮ່ວມມື

ການຈັດການຮຽນຮູ້ແບບຮ່ວມມືໝາຍເຖິງຂະບວນການຮຽນຮູ້ທີ່ຈັດໃຫ້ຜູ້ຮຽນໄດ້ຮ່ວມມື ແລະ ຊ່ວຍເຫຼືອກັນໃນການຮຽນຮູ້ໂດຍແບ່ງກຸ່ມຜູ້ຮຽນທີ່ມີຄວາມສາມາດແຕກຕ່າງກັນອອກເປັນກຸ່ມນ້ອຍໆເຊິ່ງເປັນລັກສະນະກິດຈະກຳກຸ່ມຢ່າງມີໂຄງສ້າງທີ່ຊັດເຈນ, ມີການເຮັດວຽກຮ່ວມກັນ, ມີການແລກປ່ຽນຄວາມຄິດຄວາມເຫັນ, ມີການຊ່ວຍເຫຼືອເພິ່ງພາອາໄສກັນ, ມີຄວາມຮັບຜິດຊອບລວມທາງໃນ ແລະ ທາງນອກສ່ວນຕົວ ແລະ ສ່ວນລວມ, ເພື່ອໃຫ້ຕົນເອງ ແລະ ສະມາຊິກກຸ່ມທຸກຄົນໄດ້ປະສົບຄວາມສຳເລັດຕາມເປົ້າໝາຍທີ່ກຳນົດໄວ້.

ການຮຽນຮູ້ແບບຮ່ວມມື (Cooperative Learning) ໝາຍເຖິງເປັນການຈັດກິດຈະກຳການຮຽນ-ການສອນເຊິ່ງແບ່ງນັກສຶກສາເປັນກຸ່ມນ້ອຍປະມານ 2-5 ຄົນ, ສະມາຊິກແຕ່ລະຄົນມີຄວາມສາມາດແຕກຕ່າງກັທຸກຄົນມີສ່ວນຮ່ວມໃນການຮຽນຮູ້ເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ມີເປົ້າໝາຍຮ່ວມກັນຄືຄວາມສຳເລັດຂອງກຸ່ມ.

ການຮຽນຮູ້ແບບຮ່ວມມືເປັນການຈັດກິດຈະກຳການຮຽນ-ການສອນທີ່ເນັ້ນການຈັດສະພາບແວດລ້ອມທາງການຮຽນໃຫ້ແກ່ຜູ້ຮຽນໄດ້ຮຽນຮູ້ຮ່ວມກັນເປັນກຸ່ມນ້ອຍໆແຕ່ລະກຸ່ມປະກອບດ້ວຍສະມາຊິກທີ່ມີຄວາມຮູ້, ຄວາມສາມາດແຕກຕ່າງກັນໂດຍແຕ່ລະຄົນມີສ່ວນຮ່ວມຢ່າງແທ້ຈິງໃນການຮຽນຮູ້ ແລະ ໃນຄວາມສຳເລັດຂອງກຸ່ມດ້ວຍການແລກປ່ຽນຄວາມຄິດຄວາມເຫັນ, ການແບ່ງປັນຊັບພະຍາກອນການຮຽນຮູ້ເຊິ່ງຜູ້ຮຽນເກັ່ງຈະຊ່ວຍເຫຼືອຜູ້ຮຽນອ່ອນທີ່ຢູ່ໃນກຸ່ມ, ບໍ່ພຽງແຕ່ຮັບຜິດຊອບຕໍ່ຕົນເອງເທົ່ານັ້ນຫາກຈະຕ້ອງຮ່ວມຮັບຜິດຊອບຕໍ່ການຮຽນຮູ້ຂອງໝູ່ເພື່ອນສະມາຊິກທຸກຄົນໃນກຸ່ມ, ຄວາມສຳເລັດຂອງບຸກຄົນໃນກຸ່ມ, ການກຳນົດຂະໜາດກຸ່ມປົກກະຕິມີປະມານ 3-4 ຄົນ ແລະ ລັກຊະນະຂອງກຸ່ມຄວນເປັນກຸ່ມອີງຕາມຄວາມສາມາດຜູ້ຮຽນເກັ່ງ, ປານກາງ ແລະ ອ່ອນຮ່ວມກັນເຮັດກິດຈະກຳ ຫຼື ສຶກສາຄົ້ນຄ້ວາຫາອີງຄວາມຮູ້ຮ່ວມກັນ.

ການຈັດການຮຽນ-ການສອນແບບຮ່ວມມືໝາຍເຖິງຂະບວນການຮຽນຮູ້ທີ່ຈັດໃຫ້ຜູ້ຮຽນໄດ້ຮ່ວມມື ແລະ ຊ່ວຍເຫຼືອກັນໃນການຮຽນຮູ້ໂດຍແບ່ງກຸ່ມຜູ້ຮຽນທີ່ມີຄວາມສາມາດແຕກຕ່າງກັນອອກເປັນກຸ່ມນ້ອຍໆເຊິ່ງເປັນລັກຊະນະການລວມກຸ່ມຢ່າງມີໂຄງການ, ມີຄວາມຮັບຜິດຊອບຮ່ວມກັນທັງຂອງຕົນເອງ ແລະ ສ່ວນລວມເພື່ອໃຫ້ຕົນເອງ ແລະ ສະມາຊິກທຸກຄົນພາຍໃນກຸ່ມປະສົບຄວາມສຳເລັດຕາມເປົ້າໝາຍທີ່ກຳນົດໄວ້. ສຸວິດ ມູນຄຳ (2545:134).

ນະລິນ ກະພີ້ແດງ (2542:11) ໄດ້ໃຫ້ຄວາມໝາຍການຮຽນຮູ້ແບບຮ່ວມມືວ່າ: ໝາຍເຖິງວິທີການຈັດການຮຽນຮູ້ທີ່ຈັດໃຫ້ນັກສຶກສາຮຽນນຳກັນເປັນກຸ່ມຍ່ອຍໆກຸ່ມລະປະມານ 2-6 ຄົນສະມາຊິກໃນກຸ່ມມີຄວາມສາມາດ, ມີບົດບາດໜ້າທີ່ຮັບຜິດຊອບແຕກຕ່າງກັນເຮັດກິດຈະກຳຮ່ວມກັນໂດຍອາໄສທັກສະຂະບວນການກຸ່ມທີ່ມີເປົ້າໝາຍຮ່ວມກັນຄືຄວາມສຳເລັດຂອງກຸ່ມ.

ປິຍະສັດ ຂາວແກ້ວ (2542:10) ໃຫ້ຄວາມໝາຍວ່າ: ການຮຽນຮູ້ແບບຮ່ວມມືໝາຍເຖິງການຈັດສະພາບແວດລ້ອມທາງການຮຽນໃຫ້ນັກສຶກສາຮຽນຮູ້ຮ່ວມກັນເປັນກຸ່ມນ້ອຍສະມາຊິກຂອງກຸ່ມມີຄວາມແຕກຕ່າງກັນ, ມີສ່ວນຮ່ວມໃນການຮຽນຮູ້ ແລະ ຄວາມສຳເລັດຂອງກຸ່ມດ້ວຍການແລກປ່ຽນຄຳຄິດຄຳເຫັນຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ຄວາມສຳເລັດຂອງສະມາຊິກແຕ່ລະຄົນຄືຄວາມສຳເລັດຂອງກຸ່ມ.

ວິນລະທິພາ ຮອດແຮງກ້າ (2540:98) ໄດ້ໃຫ້ຄວາມໝາຍວ່າ: ການຮຽນຮູ້ແບບຮ່ວມມືຄືການຮຽນຂອງນັກສຶກສາມີປະຕິສຳພັນຮ່ວມກັນໃນການເຮັດວຽກຊ່ວຍເຫຼືອ ແລະ ສະໜັບສະໜູນຄວາມສຳເລັດໂດຍນັກສຶກສາແຕ່ລະຄົນຄຳນຶງເຖິງການເຮັດວຽກດ້ວຍຕົນເອງ.

Millis, E. M (1998) ໄດ້ໃຫ້ຄວາມໝາຍການຮຽນຮ່ວມມືວ່າມີລັກສະນະທາງຈິດຕະວິທະຍາຮ່ວມກັນດັ່ງນີ້:

- ເຂົ້າຄວາມຮູ້ເດີມຂອງຜູ້ຮຽນ.
- ເຊື່ອວ່າຜູ້ຮຽນທຸກຄົນສາມາດປະສົບຄວາມສຳເລັດໃນການຮຽນຮູ້ດ້ານວິຊາການ.
- ເຫັນວ່າ ການຮຽນຮູ້ຄືຂະບວນການທາງສັງຄົມ.
- ເຊື່ອວ່າ ການຮຽນຮູ້ເປັນຂະບວນການສ້າງ ແລະ ລົງມືປະຕິບັດ.

Johnson, D. W and Johnson, R. T (1991:3) ໄດ້ກ່າວວ່າ: ການຮຽນແບບຮ່ວມມືເປັນກຸ່ມໝາຍເຖິງການຮຽນທີ່ມີປະຕິສຳພັນພາຍໃນກຸ່ມນັກສຶກສາເຊັ່ນ: ມີການອະທິບາຍ, ການຊ່ວຍເຫຼືອ, ການແລກປ່ຽນຄວາມຄິດຄວາມເຫັນເຊິ່ງກັນ ແລະ ກັນ, ຈາກຄວາມໝາຍດັ່ງກ່າວຜູ້ສຶກສາຄົ້ນຄ້ວາໄດ້ສະຫຼຸບວ່າການຮຽນຮູ້ແບບຮ່ວມມືເປັນການຮຽນຮູ້ຮ່ວມກັນຂອງນັກຮຽນເປັນກຸ່ມນ້ອຍໆປະມານ 2-5 ຄົນ, ສະມາຊິກໃນກຸ່ມມີຄວາມຮູ້ຄວາມສາມາດແຕກຕ່າງກັນ ແລະ ມີຄວາມຮັບຜິດຊອບຕ່າງກັນແຕ່ລະຄົນຕ້ອງມີການເພິ່ງພາອາໄສກັນເພື່ອໃຫ້ການຮຽນຮູ້ຂອງກຸ່ມປະສົບຜົນສຳເລັດໃນການຈັດກຸ່ມການຮຽນຮູ້.

ທິດສະໜາ ແຂມມະນີ (2552) ໄດ້ກ່າວວ່າການຮຽນຮູ້ແບບຮ່ວມມືຄືການຮຽນທີ່ມີຈຸດປະສົງໃຫ້ຜູ້ຮຽນເກີດການຮຽນຮູ້ໃນເລື່ອງທີ່ສຶກສາຢ່າງຫຼາຍທີ່ສຸດໂດຍອາໄສການຮ່ວມມືກັນຊ່ວຍເຫຼືອກັນ ແລະ ແລກປ່ຽນຄວາມຄິດຄວາມເຫັນກັນລະຫວ່າງກຸ່ມຜູ້ຮຽນດ້ວຍກັນ, ຄວາມແຕກຕ່າງຂອງຮູບແບບແຕ່ລະຮູບແບບຢູ່ທີ່ເທັກນິກໃນການສຶກສາເນື້ອໃນສາລະ, ວິທີການເສີມແຮງ ແລະ ການໃຫ້ລາງວັນເປັນປະເດັນສຳຄັນ.

ສະຫຼຸບການຮຽນຮູ້ແບບຮ່ວມມື (Cooperative Learning) ເປັນວິທີການຈັດການຮຽນ-ການສອນຮູບແບບໜຶ່ງທີ່ເນັ້ນໃຫ້ຜູ້ຮຽນລົງມືປະຕິບັດວຽກເປັນກຸ່ມຍ່ອຍໆໂດຍມີສະມາຊິກກຸ່ມມີຄວາມສາມາດທີ່ແຕກຕ່າງກັນເພື່ອເສີມສ້າງສະມັດຕະພາບໃນການຮຽນຮູ້ຂອງແຕ່ລະຄົນສະໜັບສະໜູນໃຫ້ມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນຈົນບັນລຸຕາມເປົ້າໝາຍທີ່ວາງໄວ້ໃນການວິໄຈນີ້ (Cooperative Learning) ວ່າການຮຽນແບບຮ່ວມມື.

ການຈັດການຮຽນຮູ້ແບບຮ່ວມມືເປັນການຮຽນ-ການສອນທີ່ສະໜັບສະໜູນໃຫ້ຜູ້ຮຽນໄດ້ເຮັດວຽກຮ່ວມກັນ, ມີການປະຕິບັດວຽກງານໃນການສຶກສາໂດຍມີພື້ນຖານຄວາມຄິດການຮຽນທີ່ເປັນກິດຈະກຳຕາມທຳມະດາທາງສັງຄົມ, ມີການປະຕິສຳພັນກັບການເວົ້າລະຫວ່າງຜູ້ຮຽນ, ການສົນທະນາກັນໃຫ້ເກີດການຮຽນຮູ້ດັ່ງນັ້ນການຈັດກຸ່ມການຮຽນຮູ້ຂອງຜູ້ຮຽນຈຶ່ງນັບໄດ້ວ່າມີຄວາມສຳຄັນເປັນອັນດັບຕົ້ນໆເຊິ່ງການຈັດກຸ່ມການຮຽນແບບຮ່ວມມືສາມາດເຮັດໄດ້ຫຼາກຫຼາຍຮູບແບບຂຶ້ນຢູ່ກັບເປົ້າໝາຍຂອງການຮຽນຮູ້, ກິດຈະກຳ ແລະ ໄລຍະເວລາໃນການເຮັດວຽກຮ່ວມກັນໂດຍຄຳນຶງເຖິງຫຼັກການໃນການຈັດກຸ່ມດັ່ງນີ້:

1. ການຈັດກຸ່ມແບບທາງການ (Formal Group) ເປັນການຈັດກຸ່ມຂ້ອນຂ້າງຖາວອນໃຊ້ເວລາຫຼາຍເພື່ອເຮັດວຽກຮ່ວມກັນພາຍໃຕ້ພາວະຂ້ອນຂ້າງຍາກ ແລະ ຊັບຊ້ອນເຊັ່ນ: ການຂຽນລາຍງານ ຫຼື ການນຳສະເໜີຜົນງານເປັນຕົ້ນ.

2. ການຈັດກຸ່ມແບບບໍ່ເປັນທາງການ (Informal Group) ເປັນການຈັດກຸ່ມໃນໄລຍະສັ້ນເພື່ອເຮັດກິດຈະກຳໃນຊັ້ນຮຽນທີ່ບໍ່ຕ້ອງໃຊ້ເວລາຫຼາຍ.

ຂະໜາດຂອງກຸ່ມການຮຽນຮູ້ຂຶ້ນຢູ່ກັບອົງປະກອບຫຼາຍປະການ, ຫຼາຍຮູບແບບຂອງກຸ່ມລັກສະນະພາວະວຽກ, ເວລາໃນການປະກອບກິດຈະກຳ ແລະ ປັດໃຈລວມອື່ນໆໂດຍທົ່ວໄປການຈັດກຸ່ມມັກໃຫ້ມີຈຳນວນສະມາຊິກ 6 ຄົນເຊິ່ງອາດຈັດໃຫ້ເປັນກຸ່ມຍ່ອຍພາຍໃນກຸ່ມໃຫຍ່ໄດ້ອີກເພື່ອໃຫ້ເກີດປະສິດທິພາບໃນການເຮັດວຽກຫຼາຍຂຶ້ນ.

## 7. ຄວາມໝາຍຂອງການອ່ານຈັບໃຈຄວາມ

ບັນລື ພຶດສະວັນ (2532:29-30) ໃຫ້ຄຳຈຳກັດຄວາມການອ່ານຈັບໃຈຄວາມວ່າເປັນການອ່ານເພື່ອທຳຄວາມເຂົ້າໃຈເນື້ອໃນບົດເລື່ອງ, ເປັນການອ່ານເພື່ອຕ້ອງການຮູ້ວ່າເລື່ອງນັ້ນເປັນເລື່ອງກ່ຽວກັບຫຍັງ, ມີຄວາມສຳຄັນແນວໃດ ແລະ ໝາຍຄວາມວ່າແນວໃດຈະເຫັນໄດ້ວ່າການອ່ານຈັບໃຈຄວາມສ່ວນໃຫ່ຍຈະເນັ້ນເລື່ອງຄວາມເຂົ້າໃຈສິ່ງທີ່ອ່ານ, ຄົ້ນຫາເນື້ອໃນ ຫຼື ປະເດັນທີ່ສຳຄັນຂອງເລື່ອງທີ່ອ່ານໄດ້.

ສຸປະນີ ພັດທອງ (2545:65) ໄດ້ໃຫ້ຄວາມໝາຍການອ່ານຈັບໃຈຄວາມໄວ້ວ່າເປັນຄວາມຄິດສຳຄັນອັນເປັນແກນ ຫຼື ຫົວໃຈຂອງເລື່ອງທີ່ຜູ້ຂຽນມີຈຸດປະສົງມາໃຫ້ຜູ້ອ່ານໄດ້ຮັບຮູ້ເຊິ່ງເປັນຂໍ້ແທ້ຈິງ ແລະ ຄວາມຄິດເຫັນ ຫຼື ຢ່າງໃດຢ່າງໜຶ່ງກໍ່ໄດ້.

ແວວມະຍຸລາ ເໜືອນນິດ (2545:12) ໃຫ້ຄຳຈຳກັດຄວາມໝາຍການອ່ານຈັບໃຈຄວາມວ່າເປັນການອ່ານທີ່ມີຈຸດປະສົງຄົ້ນຫາເນື້ອໃນຂອງເລື່ອງຫຼື ຂອງໜັງສືວ່າແຕ່ລະເຫຼັ້ມມີຄືແນວໃດ.

ສະຫຼຸບໄດ້ວ່າ: ການອ່ານຈັບໃຈຄວາມໝາຍເຖິງການທຳຄວາມເຂົ້າໃຈເນື້ອໃນເລື່ອງທີ່ອ່ານແລ້ວເຂົ້າໃຈເນື້ອໃນທີ່ສຳຄັນຂອງເລື່ອງທີ່ອ່ານ ແລະ ສະຫຼຸບຄວາມຈາກເລື່ອງທີ່ອ່ານໄດ້.

## 8. ທິດສະດີກ່ຽວກັບຄວາມເພິ່ງພໍໃຈ

### 8.1 ທິດສະດີຄວາມເພິ່ງພໍໃຈ

ຄວາມເພິ່ງພໍໃຈເປັນຄວາມຮູ້ສຶກຂອງບຸກຄົນຕໍ່ກັບສິ່ງຕ່າງໆທີ່ໄດ້ມາຈາກປະສົບການ ແລະ ສະແດງອອກ ຫຼື ມີພຶດຕິກຳຕອບສະໜອງໃນລັກສະນະແຕກຕ່າງກັນຕາມຄວາມເພິ່ງພໍໃຈຕໍ່ກັບສິ່ງຕ່າງໆນັ້ນຈະມີຫຼາຍ ຫຼື ໜ້ອຍຂຶ້ນກັບແຮງຈູງໃຈ, ການສ້າງແຮງຈູງໃຈ ຫຼື ກະຕຸ້ນໃຫ້ເກີດແຮງຈູງໃຈກັບຜູ້ປະຕິບັດວຽກຕົວຈິງເປັນສິ່ງຈຳເປັນເພື່ອໃຫ້ວຽກ ຫຼື ສິ່ງທີ່ເຮັດມານັ້ນໃຫ້ປະສົບຜົນສຳເລັດ, ການສຶກສາກ່ຽວກັບຄວາມເພິ່ງພໍໃຈເປັນການສຶກສາທິດສະດີທາງພຶດຕິກຳທີ່ກ່ຽວຂ້ອງກັບຄວາມຕ້ອງການຂອງມະນຸດຕໍ່ກັບສິ່ງຕ່າງໆ.

Scott, M. M (1970) ສະເໜີແນວຄິດໃນການສ້າງແຮງຈູງໃຈໃຫ້ເກີດຄວາມເພິ່ງພໍໃຈຕໍ່ໃນການເຮັດວຽກທີ່ຈະໃຫ້ຜົນເຊິ່ງປະຕິບັດມີລັກສະນະດັ່ງນີ້:

1.1. ວຽກຄວນມີສ່ວນພົວພັນກັບຄວາມປາຖະໜາຂອງສ່ວນຕົວ, ວຽກຈະມີຄວາມໝາຍຄວາມຕໍ່ຜູ້ເຮັດ.

1.2. ວຽກນັ້ນຕ້ອງມີການວາງແຜນ ແລະ ວັດຄວາມສຳເລັດໄດ້ໂດຍໃຊ້ລະບົບການເຮັດວຽກ ແລະ ການຄວບຄຸມຢ່າງມີປະສິດທິພາບ.

1.3. ເພື່ອໃຫ້ໄດ້ຜົນໃນການສ້າງແຮງຈູງໃຈພາຍໃນເປົ້າໝາຍຂອງວຽກຕ້ອງມີລັກສະນະດັ່ງນີ້:

1.3.1. ຄົນເຮັດວຽກມີສ່ວນຮ່ວມໃນການຕັ້ງເປົ້າໝາຍ.

1.3.2. ຜູ້ປະຕິບັດໃຫ້ຮັບຊາບຜົນສຳເລັດໃນການເຮັດວຽກໂດຍກົງ.

1.3.3. ວຽກນັ້ນສາມາດເຮັດໃຫ້ສຳເລັດໄດ້.

### 8.2 ຄວາມໝາຍຂອງຄວາມເພິ່ງພໍໃຈ (Satisfaction)

ທິນວະລົນ ທຽນເຈນຖາ (2548:59) ກ່າວວ່າຄວາມເພິ່ງພໍໃຈຄືຄວາມຮູ້ສຶກຂອງບຸກຄົນຕໍ່ສິ່ງຕ່າງໆໃນທາງບວກ ແລະ ເປັນຄວາມຮູ້ສຶກທີ່ສາມາດປ່ຽນແປງໄດ້ລວມປະຕິບັດການຮຽນ-ການສອນບັນລຸຕາມເປົ້າໝາຍໃນການຮຽນຮູ້.

Good, C. V (1973:161) ໄດ້ໃຫ້ຄວາມໝາຍວ່າຄວາມເພິ່ງພໍໃຈໝາຍເຖິງສະພາບຄວາມເປັນຈິງ ຫຼື ລະດັບຄວາມເພິ່ງພໍໃຈເປັນຜົນມາຈາກຄວາມສົນໃຈເຈດຄະຕິຂອງບຸກຄົນທີ່ມີຕໍ່ວຽກງານ Applewhite, P. B (1965:6) ກ່າວວ່າຄວາມເພິ່ງພໍໃຈເປັນຄວາມຮູ້ສຶກສ່ວນຕົວຂອງບຸກຄົນໃນການປະຕິບັດວຽກງານເຊິ່ງມີຄວາມໝາຍກ້ວາງລວມໄປເຖິງຄວາມເພິ່ງພໍໃຈໃນສະພາບແວດລ້ອມຂອງຄົນເຮົາສະຫຼຸບໄດ້ວ່າຄວາມເພິ່ງພໍໃຈວ່າໝາຍເຖິງຄວາມຮູ້ສຶກທາງບວກຂອງຄົນຕໍ່ສິ່ງຕ່າງໆທາງວຽກງານ ແລະ ສິ່ງສະພາບແວດລ້ອມເພື່ອເກີດຄວາມເພິ່ງພໍໃຈຈະສະແດງອອກທາງສິ່ງທີ່ດີ ແລະ ມີຄວາມສຸກກັບສິ່ງນັ້ນໆ.

# 9. ການຫາປະສິດທິພາບ

## 9.1 ການຫາປະສິດທິພາບຂອງນະວັດຕະກຳ

ໄຊຍົງ ພົນຫຼວງ (2523) ການຫາປະສິດທິພາບຂອງນະວັດຕະກຳຖ້າເຮົາເປີດປຶດວິທະຍານິພົນສາຂາຫຼັກສູດ ແລະ ການສອນ ສາຂາວິຊາເຕັກໂນໂລຊີການສຶກສາ ຫຼື ສາຂາອື່ນໆທີ່ເນັ້ນເຮັດການຄົ້ນຄວ້າວິທະຍານິພົນກ່ຽວກັບການສ້າງສື່ນະວັດຕະກຳມາໃຊ້ ຫຼື ແມ້ກະທັ້ງການສົ່ງຜົນງານເພື່ອການປະເມີນເລື່ອນວິທະຍານິພົນຂອງຄູເຮົາກໍ່ມັກຈະພົບເຫັນຕົວເລກທີ່ສະແດງປະສິດທິພາບຂອງສື່ ຫຼື ນະວັດຕະກຳນັ້ນເຊັ່ນ 70/70, 75/75, 80/80, 90/90 ຫຼາຍໆຄົນຄົງຈະຍັງບໍ່ເຂົ້າໃຈ ແລະ ມັກຈະຖາມວ່າ ມັນຄືຕົວເລກຫຍັງ, ເປັນຫຍັງຕົວເລກຈຶ່ງເທົ່າກັນ, ເປັນຕົວເລກອື່ນໆໄດ້ບໍ່, ຫາໄດ້ແນວໃດ ຫຼື ບໍ່ມີໄດ້ບໍ່ ຫຼື ວ່າຈະໃຊ້ວິທີການອື່ນໆແທນໄດ້ບໍ່, ມາເບິ່ງວ່າຕົວເລກດັ່ງກ່າວນັ້ນຄື:

1). ຕົວເລກທີ່ກຳນົດນັ້ນໝາຍເຖິງ E1/E2 ຕົວເລກນັ້ນການກຳນົດຂຶ້ນຢູ່ກັບຜູ້ຄົ້ນຄ້ວາເປັນຄົນກຳນົດໂດຍຈະຕ້ອງຄຳນຶງເຖິງອີງປະກອບດັ່ງນີ້:

1.1 ທຳມະຊາດຂອງລາຍວິຊາ ແລະ ເນື້ອໃນ, ຄວາມຍາກງ່າຍຂອງລາຍວິຊາ ຫຼື ເນື້ອໃນນັ້ນຖ້າງ່າຍກໍຕັ້ງສູງເພາະຜູ້ຮຽນອາດຈະສາມາດຜ່ານໄດ້ງ່າຍ, ຖ້າເນື້ອໃນຍາກກໍຕັ້ງຕໍ່າໆ ເຊັ່ນ ຄະນິດສາດຕັ້ງປະມານ 70/70, 75/75 ເພາະທຳມະຊາດຂອງວິຊານັ້ນເອງ.

1.2 ສະມັດຖະພາບຂອງຜູ້ຮຽນວ່າ ຜູ້ຮຽນມີຄົນເກັ່ງຈັກຄົນ, ກາງຈັກຄົນ ແລະ ອ່ອນຈັກຄົນ, ປະເມີນໂດຍພາບລວມວ່າ ຢູ່ລະດັບໃດ, ອັນນີ້ຖ້າໃນຫ້ອງຮຽນນັ້ນມີນັກຮຽນໆເກັ່ງຢູ່ຫຼາຍປະສິດທິພາບຂອງສື່ຂອງເຮົາກໍຕ້ອງສາມາດຊ່ວຍຍົກລະດັບຄວາມຮູ້ໃຫ້ເຂົ້າໃກ້ 100 ໃຫ້ຫຼາຍທີ່ສຸດຕາມໄປນຳນັ້ນເອງ.

2). ຄວາມໝາຍຂອງ E1/E2

E1 ຄືປະສິດທິພາບຂອງຂະບວນການ (ຂະບວນການໃນນີ້ຄືຂະບວນການການຈັດການຮຽນ-ການສອນລະຫວ່າງຮຽນທັງໝົດ, ໂດຍຄິດຈາກຄະແນນຫຼັງຮຽນຂອງແຕ່ລະໜ່ວຍ, ບົດຂອງແຕ່ລະເລື່ອງ) ເຊັ່ນ ຕົວເລກ 80 ໝາຍເຖິງ ຜູ້ຮຽນທັງໝົດໄດ້ເຮັດແບບເຝິກຫັດ ຫຼື ແບບທົດສອບຍ່ອຍໄດ້ຄະແນນສະເລ່ຍ 80 ເປີເຊັນ ເຊິ່ງຫາໄດ້ຈາກສູດ ຜົນລວມຂອງຄະແນນຫານດ້ວຍ ຈຳນວນຜູ້ຮຽນທັງໝົດ ຄູນດ້ວຍ 100 ແລ້ວ ຫານດ້ວຍ ຜົນລວມຂອງຄະແນນເຕັມຂອງແບບທົດສອບທຸກຊຸດ ກໍ່ຈະໄດ້ E1.

E2 ຄືປະສິດທິພາບຂອງຜົນສຳເລັດ (ຜົນສຳເລັດໃນນີ້ໝາຍເຖິງ ຫຼັງຈາກຜູ້ຮຽນຮຽນຈົບຂະບວນການ ໂດຍຄິດຄະແນນຈາກຫຼັງຮຽນເຊິ່ງໄດ້ມາຈາກແບບທົດສອບວັດຜົນສຳເລັດນັ້ນເອງ) ເຊັ່ນ ຕົວເລກ 80 ໝາຍເຖິງ ຜູ້ຮຽນທັງໝົດໄດ້ເຮັດແບບສອບຖາມຫຼັງຮຽນໄດ້ຄະແນນສະເລ່ຍ 80 ເປີເຊັນ ຫາໄດ້ຈາກສູດຜົນລວມຂອງຄະແນນ ຫານດ້ວຍ ຈຳນວນຜູ້ຮຽນທັງໝົດ ຄູນດ້ວຍ 100 ແລ້ວ ຫານດ້ວຍຜົນລວມຂອງຄະແນນເຕັມແບບທົດສອບຫຼັງຮຽນ ກໍ່ຈະໄດ້ E2ເມື່ອ

ທົດສອບນະວັດຕະກຳແລ້ວໃຫ້ທຽບກັບຄ່າເພື່ອເບິ່ງວ່າເຮົາຍອມຮັບປະສິດທິພາບຫຼືບໍ່ ເຊິ່ງການຍອມຮັບປະສິດທິພາບຂອງນະວັດຕະກຳມີ 3 ລະດັບຄື:

1). ສູງກ່ວາເກນ ເມື່ອນະວັດຕະກຳຂອງປະສິດທິພາບສູງກ່ວາເກນທີ່ຕັ້ງໄວ້ມີຄ່າເກີນ 2.5%.

2). ເທົ່າກັບເກນ ເມື່ອປະສິດທິພາບຂອງນະວັດຕະກຳເທົ່າກັບ ຫຼື ສູງກ່ວາເກນທີ່ຕັ້ງໄວ້ມີຄ່າບໍ່ເກີນ 2.5%.

3). ຕ່ຳກ່ວາເກນ ແຕ່ຍອມຮັບວ່າມີປະສິດທິພາບ ເມື່ອປະສິດທິພາບຂອງນະວັດຕະກຳຕ່ຳກ່ວາເກນທີ່ຕັ້ງໄວ້ມີຄ່າບໍ່ເກີນ 2.5%.

### 9.2 ການຫາປະສິດຜົນການຮຽນຮູ້

ຜະເຊີນ ກິດຈະການ (2542:1-3) ເວົ້າວ່າ ປະສິດທິຜົນຄືຄ່າຂອງຄະແນນທົດສອບກ່ອນຮຽນ ແລະ ຄະແນນການທົດສອບຫຼັງຮຽນ ຫຼື ເປັນການທົດສອບຄວາມແຕກຕ່າງກ່ຽວກັບຜົນສຳເລັດທາງການຮຽນລະຫວ່າງກຸ່ມທົດລອງກັບກຸ່ມຄວບຄຸມ, ດັດສະນີປະສິດທິຜົນຄຳນວນໄດ້ຈາກການຫາຄວາມແຕກຕ່າງຂອງການທົດສອບກ່ອນການທົດລອງ ແລະ ການທົດສອບຫຼັງການທົດລອງດ້ວຍຄະແນນພື້ນຖານ (ຄະແນນທົດສອບກ່ອນຮຽນ) ແລະ ຄະແນນທີ່ສາມາດເຮັດໄດ້ສູງສຸດ, ດັດສະນີປະສິດທິຜົນຈະເປັນຕົວບົ່ງບອກເຖິງຂອບເຂດ ແລະ ປະສິດທິພາບສູງສຸດຂອງສື່ການຮຽນ-ການສອນ.

ຜະເຊີນ ກິດຈະການ (2542) ດັດສະນີປະສິດທິຜົນ (The Effectiveeness) ໝາຍເຖິງຕົວເລກທີ່ສະແດງເຖິງຄວາມກ້າວໜ້າໃນການຮຽນຂອງຜູ້ຮຽນ, ໂດຍປຽບທຽບຄະແນນທີ່ເພີ້ມຂຶ້ນຈາກການທົດສອບກ່ອນຮຽນກັບຄະແນນທີ່ໄດ້ຮັບຈາກການທົດລອງຫຼັງຮຽນ, ເມື່ອມີການປະເມີນສື່ການສອນທີ່ຜະລິດຂຶ້ນຈະເບິ່ງມີປະສິດທິພາບທາງການສອນ ແລະ ການວັດປະເມີນຜົນສື່ການສອນນັ້ນ, ຕາມປົກກະຕິການປະເມີນຄວາມແຕກຕ່າງຂອງຄ່າຄະແນນໃນ 2 ລັກສະນະຄື ຄວາມແຕກຕ່າງຂອງຄະແນນທົດສອບກ່ອນຮຽນ ແລະ ຄະແນນທົດສອບຫຼັງຮຽນ ຫຼື ເປັນການທົດສອບຜົນສຳເລັດທາງການຮຽນລະຫວ່າງ ກຸ່ມທົດລອງກັບກຸ່ມຄອມຄຸມ.
ການປະເມີນປະສິດທິພາບຂອງສື່ ແລະ ເຕັກໂນໂລຊີພິຈາລະນາຂະບວນການ (E1) ກັບຜົນສຳເລັດ.

ຂອງສື່ (E2) ທີ່ໃຊ້ຖ້າຫາກຜູ້ວິໄຈຕ້ອງການພິຈາລະນາຕໍ່ໄປວ່າ ແຜນການຈັດການຮຽນຮູ້ ຫຼື ສິ່ງທີ່ສ້າງຂຶ້ນຍັງມີຄຸນນະພາບໃນແງ່ມູມອື່ນອີກຫຼືບໍ່ກໍສາມາດພິຈາລະນາໄດ້ໂດຍດູພັດທະນາການຂອງນັກຮຽນຄື ພິຈາລະນາວ່າກ່ອນ ແລະ ຫຼັງຮຽນເລື່ອງໃດໆນັກຮຽນໄດ້ພັດທະນາ ຫຼື ມີຄວາມຮູ້ຄວາມສາມາດເພີ້ມຂຶ້ນຢ່າງເຊື່ອຖືໄດ້ຫຼືບໍ່ ຫຼື ເພີ້ມຂຶ້ນເທົ່າໃດ ເຊິ່ງອາດຈະພິຈາລະນາໄດ້ຈາກການຄຳນວນຫາຄ່າ t-test (ແບບ Dependent samples) ແລະ ການພິຈາລະນາພັດທະນາການຮຽນຮູ້ໃນຄາວນັ້ນເມື່ອທຽບກັບການບັນລຸຈຸດປະສົງແລ້ວນັກຮຽນໄດ້ຮຽນຮູ້ເພີ້ມມາຢູ່ຈຸດ

ໃດ ເຊິ່ງໄດ້ຈາກການວິເຄາະຫາຄ່າດັດສະນີປະສິດທິຜົນ (Effectiveeness Index: E.I) ມີລາຍລະອຽດດັ່ງນີ້:

1). ການພັດທະນາທີ່ເພີ່ມຂຶ້ນຂອງຜູ້ຮຽນໂດຍອາໄສການຫາຄ່າ t-test (ແບບ Dependent samples) ເປັນການພິຈາລະນາເບິ່ງວ່າ ນັກຮຽນມີພັດທະນາການເພີ່ມຂຶ້ນຢ່າງເຊື່ອຖືໄດ້ຫຼືບໍ່ ໂດຍເຮັດການທົດສອບກັບນັກຮຽນທຸກຄົນກ່ອນຮຽນ (Pretest) ແລະ ຫຼັງຮຽນ (Posttest) ແລ້ວນຳມາຫາຄ່າ t-test (ແບບ Dependent samples) ຫາກມີຄວາມສຳຄັນທາງສະຖິຕິຖືໄດ້ວ່າ ນັກຮຽນກຸ່ມທີ່ຜູ້ວິໄຈກຳລັງສຶກສາມີພັດທະນາການເພີ່ມຂຶ້ນຢ່າງເຊື່ອຖືໄດ້

2). ການຫາພັດທະນາການທີ່ເພີ່ມຂຶ້ນຂອງຜູ້ຮຽນ ໂດຍອາໄສການຫາຄ່າດັດສະນີປະສິດທິຜົນ (Effectiveeness Index: E.I) ມີສູດດັ່ງນີ້:

$$\text{ຄ່າດັດສະນີປະສິດທິຜົນ} = \frac{\text{ຜົນລວມຂອງຄະແນນທົດສອບຫຼັງຮຽນ} - \text{ຜົນລວມຂອງຄະແນນທົດສອບກ່ອນຮຽນ}}{(\text{ຈຳນວນນັກຮຽນ})(\text{ຄະແນນເຕັມ}) - \text{ຜົນລວມຂອງຄະແນນທົດສອບກ່ອນຮຽນ}}$$

ຫຼື $$\text{E.I.} = \frac{P_2 - P_1}{Total - P_1}$$

E.I. ແທນ ດັດສະນີປະສິດທິຜົນ.

$P_1$ ແທນ ຜົນລວມຂອງຄະແນນກ່ອນຮຽນທຸກຄົນ.

$P_2$ ແທນ ຜົນລວມຂອງຄະແນນຫຼັງຮຽນທຸກຄົນ.

$Total$ ແທນ ຜົນຄູນຂອງຈຳນວນນັກຮຽນກັບຄະແນນເຕັມ.

ການຫາຄ່າ E.I ເປັນການພິຈາລະນາພັດທະນາການໃນລັກສະນະທີ່ເພີ່ມຂຶ້ນເທົ່າໃດບໍ່ໄດ້ທົດສອບວ່າ: ເພີ່ມຂຶ້ນເຊື່ອຖືໄດ້ຫຼືບໍ່ ເຊິ່ງຄ່າທີ່ສະແດງເພີ່ມຂຶ້ນນັ້ນເອີ້ນວ່າ: ຫາຄ່າດັດສະນີປະສິດທິຜົນ ແລະ ເພື່ອສື່ຄວາມໝາຍກັນໄດ້ງ່າຍຈຶ່ງແປງຄະແນນໃຫ້ຢູ່ໃນຮູບຂອງເປີເຊັນເຊັ່ນ: ຄ່າດັດສະນີປະສິດທິຜົນ (E.I) 0.62 ຄິດເປັນ 62 ເປີເຊັນ.

### 9.3 ການວິເຄາະຄ່າ ແລະ ການຕີຄວາມໝາຍ

1). ຖ້າດັດສະນີປະສິດທິຜົນເປັນຄ່າລົບເກີດຂຶ້ນເມື່ອໃດ, ມີຄວາມໝາຍວ່າແນວໃດ?

ດັດສະນີປະສິດທິຜົນເປັນຄ່າລົບ ຈະເກີດຂຶ້ນໄດ້ໃນກໍລະນີທີ່ຜົນລວມຂອງຄະແນນຫຼັງຮຽນທຸກຄົນເຊິ່ງເປັນຕົວຕັ້ງຂອງເສດໃນສູດມີຄ່ານ້ອຍກ່ວາຜົນລວມຂອງຄະແນນກ່ອນຮຽນທຸກຄົນ ໝາຍຄວາມວ່າ ກ່ອນຮຽນຜູ້ຮຽນມີຄວາມຮູ້ພື້ນຖານຕິດຕົວມາໃນລະດັບໜຶ່ງຕາມຄະແນນທີ່ເຮັດໄດ້ໃນການສອບກ່ອນຮຽນ ແລະ ຫຼັງຈາກຮຽນຕາມແຜນການຈັດການຮຽນ-ການສອນຂອງເຮົາແລ້ວ ແລະ ສອບຫຼັງປະກົດວ່າ ຄະແນນສອບຍິ່ງໄດ້ໜ້ອຍລົງກ່ວາການສອບກ່ອນຮຽນ ຈຶ່ງສະຫຼຸບໄດ້ວ່າ ແຜນການຈັດການຮຽນ-ການສອນຂອງເຮົາບໍ່ມີປະສິດທິພາບເພາະເຮັດໃຫ້ຜູ້ຮຽນສັບສົນ ແລະ ຍັງໄປທຳລາຍຄວາມຮູ້ເດີມຂອງຜູ້ຮຽນອີກດ້ວຍ, ບໍ່ມີຄວາມກ້າວໜ້າທາງການຮຽນເຊິ່ງໃນຄວາມຈິງແລ້ວຄົງເປັນໄປໄດ້ຍາກທີ່ຄະແນນສອບຫຼັງຮຽນຈະມີຄ່ານ້ອຍກ່ວາຄະແນນສອບກ່ອນຮຽນ, ແຕ່ຖ້າວິເຄາະຕາມທິດສະດີກໍຈະເປັນດັ່ງທີ່ກ່າວມາ.

2). ຖ້າດັດສະນີປະສິດທິຜົນເປັນ 0 ເກີດຂຶ້ນເມື່ອໃດ/ມີຄວາມໝາຍວ່າແນວໃດ ?

ດັດສະນີປະສິດທິຜົນເປັນ 0 ຈະເກີດຂຶ້ນໄດ້ໃນກໍລະນີທີ່ຜົນລວມຂອງຄະແນນຫຼັງຮຽນທຸກຄົນ ເຊິ່ງເປັນຕົວຕັ້ງຂອງເກນໃນສູດ ມີຄ່າເທົ່າກັນກັບຜົນລວມຂອງຄະແນນກ່ອນຮຽນທຸກຄົນ ໝາຍຄວາມວ່າ ກ່ອນຮຽນຜູ້ຮຽນມີຄວາມຮູ້ພື້ນຖານຕິດຕົວມາຢູ່ໃນລະດັບໜຶ່ງຕາມຄະແນນທີ່ເຮັດໄດ້ໃນການສອບກ່ອນຮຽນ, ຫຼັງຈາກຮຽນຈາກແຜນການຈັດການຮຽນ-ການສອນຂອງເຮົາແລ້ວ ແລະ ສອບຫຼັງປະກົດວ່າ ຜົນລວມຂອງຄະແນນສອບຫຼັງຮຽນທຸກຄົນເທົ່າກັບຜົນລວມຂອງຄະແນນສອບກ່ອນທຸກຄົນ ສະຫຼຸບໄດ້ວ່າ ແຜນການຈັດການຮຽນ-ການສອນຂອງເຮົາບໍ່ມີປະສິດທິພາບ ເພາະຄວາມຮູ້ຂອງຜູ້ຮຽນບໍ່ມີຄວາມກ້າວໜ້າຂຶ້ນເລີຍ ເຖິງແມ່ນວ່າຈະໄປທຳລາຍຄວາມຮູ້ເດີມຂອງຜູ້ຮຽນຄືກໍລະນີທີ່ໜຶ່ງກໍຕາມ.

3). ດັດສະນີປະສິດທິຜົນມີຄ່າເປັນບວກ ເກີດຂຶ້ນເມື່ອໃດ? ມີຄວາມໝາຍວ່າແນວໃດ? ດັດສະປະສິດທິຜົນມີຄ່າເປັນບວກ ຈະເກີດຂຶ້ນໄດ້ໃນກໍລະນີຜົນລວມຂອງຄະແນນຫຼັງຮຽນ ເຊິ່ງເປັນຕົວຕັ້ງຂອງເກນໃນສູດເພາະສະຫຼຸບໄດ້ວ່າ ແຜນການຈັດການຮຽນ-ການສອນຂອງເຮົາມີສິດທິພາບຄື ຜົນການສອບຫຼັງຮຽນສູງກ່ວາຜົນການສອບກ່ອນຮຽນ, ສະແດງວ່າ ຫຼັງຈາກຮຽນຕາມແຜນການຈັດການຮຽນ-ການສອນທີ່ເຮົາຈັດເຮັດໃຫ້ຜູ້ຮຽນມີຄວາມກ້າວໜ້າໃນການຮຽນຕາມຕົວເລກບວກຂອງດັດສະນີປະສິດທິຜົນທີ່ອອກມາ ສະແດງວ່າ ຄ່າດັດສະນີປະສິດທິຜົນໃນຮູບທົດສະນິຍົມ 4 ຕຳແໜ່ງ ແລະ ສະແດງເປັນເປີເຊັນດ້ວຍເຊັ່ນ “ ດັດສະນີປະສິດທິຜົນໃນການຮຽນຮູ້ຂອງຜູ້ຮຽນຕາມແຜນການຈັດການຮຽນ-ການສອນ ”.

4). ດັດສະນີປະສິດທິຜົນຄ່າສູງສຸດເທົ່າໃດ ແລະ ເກີດຂຶ້ນເມື່ອໃດດັດສະນີປະສິດທິຜົນຈະມີຄ່າສູງສຸດເມື່ອ ຄະແນນສອບຫຼັງຮຽນຂອງຜູ້ຮຽນໄດ້ເຕັມທຸກຄົນ, ບໍ່ວ່າຄະແນນທົດສອບກ່ອນຮຽນຂອງຜູ້ຮຽນແຕ່ລະຄົນຈະໄດ້ເທົ່າໃດກໍຕາມກໍລະນີນີ້ເມື່ອແທນຄ່າໃນສູດເພື່ອຫາດັດສະນີປະສິດທິຜົນມີຄ່າເທົ່າກັນ ເຊິ່ງຈະເຮັດໃຫ້ຄ່າດັດສະນີປະສິດທິຜົນມີຄ່າເທົ່າກັບ 1.00 ຫຼື ຄິດເປັນ 100 ເປີເຊັນ.

## 9.4 ຂັ້ນຕອນການນຳຄ່າດັດສະນີປະສິດທິຜົນໄປໃຊ້ໃນການຮຽນ-ການສອນ

1) ສ້າງເຄື່ອງມືຫຼັກຄື ແບບທົດສອບວັດຜົນສຳເລັດທາງການຮຽນທີ່ມີປະສິດທິຜົນຄອບຄຸມເນື້ອໃນທັງໝົດທີ່ເຮົາຈະທົດລອງສອດຄ່ອງກັບຈຸດປະສົງການຮຽນຮູ້ ຫຼື ຜົນການຮຽນຮູ້ທີ່ຄາດຫວັງ, ມີອຳນາດຈຳແນກຄວາມຍາກງ່າຍພໍເໝາະ ແລະ ມີຄວາມເຊື່ອໝັ້ນຕາມເກນ.

2) ນຳແບບທົດສອບໄປສອບນັກຮຽນກ່ອນຮຽນແລ້ວບັນທຶກຜົນການສອບໄວ້.

3) ສອນນັກຮຽນຕາມແຜນການຈັດການຮຽນ-ການສອນທີ່ກຽມໄວ້ຈົນຄົບເນື້ອໃນທັງໝົດ.

4) ນຳແບບທົດສອບຊຸດເດີມໄປສອບນັກຮຽນອີກຄັ້ງຫຼັງຮຽນ.

5) ນຳຜົນການສອບກ່ອນຮຽນ ແລະ ຜົນການສອບຫຼັງຮຽນໄປຄຳນວນຄ່າດັດສະນີປະສິດທິຜົນ ແລ້ວວິເຄາະລາຍງານຜົນ.

### 9.5 ການຫາປະສິດທິພາບການສອນ

ໄຊຍົງ ພົມຫຼວງ (2523) ກ່າວວ່າ ການຫາປະສິດທິພາບຂອງສື່ເຮັດໄດ້ 2 ວິທີຄື

1). ປະເມີນໂດຍອາໄສເກນການປະເມີນແບບເຝິກທັກສະນັ້ນເປັນການກວດສອບ ຫຼື ປະເມີນປະສິດທິພາບຂອງແບບເຝິກທັກສະທີ່ນິຍົມປະເມີນ ຈະເປັນຊຸດແບບເຝິກທັກສະສຳລັບກຸ່ມກິດຈະກຳ ຫຼື ແບບເຝິກທັກສະທີ່ໃຊ້ສູນການຮຽນໂດຍໃຊ້ເກນມາດຕະຖານ 90/90 ເປັນເກນການປະເມີນສຳລັບເນື້ອໃນປະເພດຄວາມຮູ້, ຄວາມຈຳ ແລະ ໃຊ້ເກນມາດຕະຖານ 80/80 ສຳລັບເນື້ອໃນທີ່ເປັນທັກສະຄວາມໝາຍຂອງໂຕເລກ, ເກນມາດຕະຖານດັ່ງກ່າວມີຄວາມໝາຍດັ່ງນີ້:

80 ໂຕທຳອິດ ($E_1$) ໝາຍເຖິງ ເປີເຊັນຂອງຄະແນນສະເລ່ຍຂອງຜູ້ຮຽນທຸກຄົນທີ່ໄດ້ຈາກການປະຕິບັດວຽກງານພາລະກິດຕ່າງໆເຊັ່ນ ແບບເຝິກທັກສະ ໂດຍນ□າຄະແນນທີ່ໄດ້ຈາກການວັດຜົນພາລະກິດທັງຫຼາຍ, ທັງລາຍບຸກຄົນ ແລະ ລາຍກຸ່ມຍ່ອມມາລວມກັນ ແລ້ວຄຳນວນຫາເປີເຊັນຂອງຄະແນນສະເລ່ຍ ເຊິ່ງຕ້ອງໄດ້ຄະແນນສະເລ່ຍ 80 ເປີເຊັນຂຶ້ນໄປ.

80 ໂຕຫຼັງ ($E_2$) ໝາຍເຖິງ ເປີເຊັນຂອງຄະແນນສະເລ່ຍຂອງຜູ້ຮຽນທຸກຄົນທີ່ໄດ້ຈາກການທົດສອບຫຼັງຮຽນ (post - test), ເຊິ່ງຕ້ອງໄດ້ຫາຄ່າສະເລ່ຍ 80 ເປີເຊັນຂຶ້ນໄປກໍຈະໄດ້ຄ່າທັງສອງເພື່ອນຳໄປປຽບທຽບກັບເກນມາດຕະຖານຕໍ່ໄປ.

2). ປະເມີນໂດຍບໍ່ຕັ້ງເກນໄວ້ລ່ວງໜ້າ ເປັນການປະເມີນປະສິດທິພາບຂອງສື່ດ້ວຍການປຽບທຽບຜົນສອບຂອງຜູ້ຮຽນພາຍຫຼັງຈາກທີ່ຮຽນຈາກສື່ນັ້ນແລ້ວ (Post-test) ຢ່າງມີຄວາມສຳຄັນຫຼືບໍ່ຫາກຜົນການປຽບທຽບພົບວ່າຜູ້ຮຽນໄດ້ຄະແນນຫຼັງຮຽນສູງກວ່າຄະແນນສອບກ່ອນຮຽນຢ່າງມີຄວາມສຳຄັນກໍ່ສະແດງວ່າສື່ນັ້ນມີປະສິດທິພາບ.

## 10. ການສ້າງແບບທົດສອບ

### 10.1 ແບບທົດສອບ (Test)

ບຸນຊົມ ສີສະອາດ (2553:68) ຂຽນວ່າ ແບບທົດສອບຄືຊຸດຂອງຄຳຖາມທີ່ສ້າງຂຶ້ນເພື່ອນຳໄປຊັກນຳໃຫ້ກຸ່ມຕົວຢ່າງຕອບສະໜອງອອກມາ, ການຕອບອາດຈະຢູ່ໃນຮູບແບບຂອງການຂຽນຕອບ, ການເວົ້າ, ການປະຕິບັດທີ່ສາມາດສັງເກດໄດ້ວັດໃຫ້ເປັນປະລິມານໄດ້.

ຈຸດມຸ່ງໝາຍຂອງການວັດຜົນສຳເລັດ ເປັນການກວດສອບຄວາມສາມາດຂອງສະມັດທະພາບທາງສະໝອງຂອງບຸກຄົນວ່າ ຮຽນແລ້ວຮູ້ຫຍັງແດ່ ແລະ ມີຄວາມສາມາດດ້ານໃດ, ຫຼາຍໜ້ອຍຊ່ຳໃດເຊັ່ນ: ພຶດຕິກຳດ້ານຄວາມຈຳ, ຄວາມເຂົ້າໃຈ, ການນຳໄປໃຊ້, ການວິເຄາະ, ການສັງເຄາະ ແລະ ການປະເມີນ ຫຼາຍໜ້ອຍຢູ່ໃນລະດັບໃດນັ້ນຄືການວັດຜົນສຳເລັດເປັນການກວດສອບພຶດຕິກຳຂອງຜູ້ຮຽນໃນດ້ານພຸດທິພິໄສ ເຊິ່ງເປັນການວັດສອງອີງປະກອບຕາມຈຸດມຸ່ງໝາຍ ແລະ ລັກສະນະຂອງວິຊາທີ່ຮຽນ.

1.1 ແບບທົດສອບວັດຜົນສຳເລັດທາງການຮຽນ (Achievement Test) ໝາຍເຖິງແບບທົດສອບທີ່ໃຊ້ວັດຄວາມຮູ້ຄວາມສາມາດຂອງບຸກຄົນໃນດ້ານວິຊາການ ເຊິ່ງເປັນຜົນຈາກ

ການຮຽນຮູ້ໃນເນື້ອໃນ ແລະ ຕາມຈຸດປະສົງຂອງວິຊາ ຫຼື ເນື້ອໃນທີ່ສອບນັ້ນໂດຍທົ່ວໄປຈະວັດຜົນສຳເລັດໃນວິຊາຕ່າງໆທີ່ຮຽນໃນໂຮງຮຽນວິທະຍາໄລ, ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຕ່າງໆປະກອບມີ 2 ປະເພດຄື:

ກ. ແບບທົດສອບອີງເກນ (Criterion Refereneed Test) ໝາຍເຖິງແບບທົດສອບທີ່ສ້າງຂຶ້ນຕາມຈຸດປະສົງດ້ານພຶດຕິກຳ, ມີຄະແນນຈຸດຕັດ ຫຼື ຄະແນນເກນສຳລັບໃຊ້ຕັດສິນວ່າຜູ້ສອບມີຄວາມຮູ້ຕາມເກນທີ່ກຳນົດໄວ້ຫຼືບໍ່, ການວັດກົງກັບຈຸດປະສົງເປັນຫົວໃຈສຳຄັນຂອງຂໍ້ສອບໃນແບບທົດສອບປະເພດນີ້ ແລະ ມີຂັ້ນຕອນການສ້າງແບບທົດສອບວັດຜົນສຳເລັດແບບອີງເກນປະກອບມີຂັ້ນຕອນດັ່ງນີ້:

1) ວິເຄາະຈຸດປະສົງ, ເນື້ອໃນວິຊາ.
2) ກຳນົດພຶດຕິກຳຍ່ອຍທີຈະອອກຂໍ້ສອບ.
3) ກຳນົດຮູບແບບຂອງຂໍ້ຄຳຖາມ ແລະ ສຶກສາວິທີຂຽນຂໍ້ສອບ.
4) ດຳເນີນການຂຽນຂໍ້ສອບ.
5) ກວດກາຂໍ້ສອບ.
6) ໃຫ້ຜູ້ຊ່ຽວຊານພິຈາລະນາຄວາມທ່ຽງກົງຕາມເນື້ອໃນ.
7) ພິມແບບທົດສອບສະບັບທົດລອງ.
8) ທົດລອງໃຊ້, ວິເຄາະຫາຄຸນນະພາບ ແລະ ປັບປຸງ.
9) ພິມແບບທົດສອບສະບັບສົມບູນ.

## 10.2 ຫຼັກການສ້າງແບບວັດຜົນສຳປະສິດທາງການຮຽນ

ສົມນຶກ ພັດທິຍະທະນີ (2537:82-96) ໄດ້ກ່າວເຖິງຫຼັກໃນການສ້າງແບບທົດສອບວັດຜົນສຳເລັດທາງການຮຽນແບບເລືອກຕອບໄວ້ດັ່ງນີ້:

1) ຂຽນຕອນນຳໃຫ້ເປັນປະໂຫຍກທີ່ສົມບູນແລ້ວໃສ່ເຄື່ອງໝາຍດັດສະນີ, ບໍ່ຄວນສ້າງຕອນນຳໃຫ້ເປັນແບບອ່ານຕໍ່ຄວາມ, ເພາະເຮັດໃຫ້ຄຳຖາມບໍ່ຊັດເຈນ, ເກີດບັນຫາສອງແງ່ ຫຼື ຂໍ້ຄວາມບໍ່ຕໍ່ກັນ, ຫຼື ເກີດຄວາມສັບສົນໃນການຊອກຫາຄຳຕອບ.

2) ເນັ້ນເລື່ອງຈະຖາມໃຫ້ຊັດເຈນ ແລະ ກົງຈຸດ, ບໍ່ຄຸມເຄືອເພື່ອວ່າຜູ້ອ່ານຈະບໍ່ເຂົ້າໃຈ, ສາມາດນຳຄວາມຄິດໃນຄຳຕອບໄປຖືກທິດຖືກທາງ.

3) ຄວນຖາມໃນເລື່ອງທີ່ມີຄຸນຄ່າຕໍ່ການວັດ, ຫຼື ຖາມໃນສິ່ງທີ່ດີງາມທີ່ມີປະໂຫຍດ, ຄຳຖາມແບບເລືອກຕອບສາມາດຖາມພຶດຕິກຳທີສະໝອງໄດ້ຫຼາຍໆດ້ານ, ບໍ່ແມ່ນຖາມສະເພາະແຕ່ຄວາມຈຳ ຫຼື ຄວາມຈິງຕາມຕຳລາ, ແຕ່ຕ້ອງຖາມໃຫ້ຄິດ ຫຼື ນ□າຄວາມຮູ້ທີ່ຮຽນໄປໃຊ້ໃນສະຖານະການໃໝ່.

4) ຫຼີກລ້ຽງຄຳຖາມປະຕິເສດ, ຖ້າຈຳເປັນຕ້ອງໃຊ້ກໍ່ຄວນຂີດກ້ອງຄຳປະຕິເສດໄວ້, ແຕ່ຄຳປະຕິເສດຊ້ອນບໍ່ຄວນໃຊ້ຍິ່ງເປັນການດີ, ເພາະປົກກະຕິຜູ້ຮຽນຈະຫຍຸ້ງຍາກຕໍ່ການແປຄວາມ

ໝາຍຂອງຄຳຖາມ ແລະ ຕອບຄຳຖາມທີ່ຖາມກັບ ຫຼື ປະຕິເສດຊ້ອນຜິດຫຼາຍກວ່າໝູ່.

5) ຢ່າໃຊ້ຄຳຟູມເຟືອຍ, ຄວນຖາມບັນຫາໂດຍກົງສິ່ງໃດບໍ່ກ່ຽວຂ້ອງ ຫຼື ບໍ່ໄດ້ໃຊ້ ເປັນເງື່ອນໄຂໃນການຄິດກໍ່ບໍ່ຕ້ອງນຳມາຂຽນໄວ້ໃນຄຳຖາມ, ຈະຊ່ວຍໃຫ້ຄຳຖາມຮັດກຸມຊັດເຈນຂຶ້ນ.

6) ຂຽນຄຳຖາມໃຫ້ເປັນເອກະພັນ ໝາຍເຖິງການຂຽນຕົວເລືອກທຸກຕົວໃຫ້ເປັນລັກສະນະໃດລັກສະນະໜຶ່ງ, ຫຼື ມີທິດທາງແບບດຽວກັນ, ຫຼື ມີໂຄງສ້າງສອດຄ່ອງເປັນທຳນອງດຽວກັນ.

7) ຄວນລຽງລຳດັບໂຕເລກໃນຕົວເລືອກຕ່າງໆໄດ້ແກ່ຄຳຕອບທີ່ເປັນໂຕເລກ, ນິຍົມລຽງຈາກໜ້ອຍໄປຫາຫຼາຍ, ເພື່ອຊ່ວຍໃຫ້ຜູ້ຕອບພິຈາລະນາຫາຄຳຕອບໄດ້ສະດວກ ແລະ ປ້ອງກັນການເດົາຕົວເລືອກທີ່ມີຄ່າຫຼາຍ.

8) ໃຊ້ຕົວເລືອກປາຍເປີດໃຫ້ເໝາະສົມຕົວເລືອກປາຍເປີດໄດ້ແກ່ ຕົວເລືອກສຸດທ້າຍໃຊ້ຄຳວ່າບໍ່ມີຄຳຕອບຖືກທີ່ກ່າວມາຜິດໝົດ, ຜິດໝົດທຸກຂໍ້ ຫຼື ສະຫຼຸບແນ່ນອນບໍ່ໄດ້.

9) ຂໍ້ດຽວຕ້ອງມີຄຳຕອບດຽວແຕ່ບາງຄັ້ງຜູ້ອອກຂໍ້ສອບຄາດບໍ່ເຖິງວ່າຈະມີບັນຫາ ຫຼື ອາດຈະເກີດການແຕ່ງຕັ້ງຕົວລວງບໍ່ຮັດກຸມຈິ່ງເບິ່ງຕົວລວງເລົ່ານັ້ນໄດ້ອີກແງ່ໜຶ່ງເຮັດໃຫ້ເກີດບັນຫາສອງແງ່ສອງມຸມໄດ້.

10) ຂຽນທັງຕົວຖືກ ແລະ ຕົວຜິດຕາມຫຼັກວິຊາຄືຈະກຳນົດຕົວຖືກ ຫຼື ຜິດເພາະສອດຄ່ອງກັບ.

ຄວາມເຊື່ອຂອງສັງຄົມ ຫຼື ກັບຄຳພັງເພີຍທົ່ວໆໄປບໍ່ໄດ້, ທັ້ງນີ້ເນື່ອງຈາກການຮຽນ-ການສອນແນໃສໃຫ້ຜູ້ຮູ້ຄວາມຈິງຕາມຫຼັກວິຊາສຳຄັນຈະນຳຄວາມເຊື່ອໂຊກລາງ ຫຼື ຄະນົບທຳນຽມປະເພນີສະເພາະທ້ອງຖິ່ນມາອ້າງບໍ່ໄດ້.

11) ຂຽນຕົວເລືອກໃຫ້ອິດສະຫຼະຂາດຈາກກັນພະຍາຍາມຢ່າໃຫ້ຕົວເລືອກຕົວໃດຕົວໜຶ່ງເປັນສ່ວນໜຶ່ງ ຫຼື ສ່ວນປະກອບຂອງຕົວເລືອກອື່ນຕ້ອງໃຫ້ແຕ່ລະຕົວເປັນອິດສະຫຼະຈາກກັນຢ່າງແທ້ຈິງ.

12) ຄວນມີຕົວເລືອກ 4-5 ຕົວຂໍ້ສອບແບບເລືອກຕອບນີ້ຖ້າຂຽນຕົວເລືອກພຽງ 2 ຕົວກໍ່ກາຍເປັນຂໍ້ສອບແບບຖືກ-ຜິດ ແລະ ເພື່ອປ້ອງກັນບໍ່ໃຫ້ເດົາໄດ້ງ່າຍໆຈິ່ງຄວນມີຕົວເລືອກຫຼາຍໆຕົວທີ່ນິຍົມໃຊ້ຫາກເປັນຂໍ້ສອບລະດັບປະຖົມສຶກສາຂຶ້ນໄປຄວນໃຊ້ 5 ຕົວເລືອກ.

13) ຢ່າແນະຄຳຕອບເຊິ່ງການແນະຄຳຕອບມີຫຼາຍກໍລະນີດັ່ງນີ້:

- ຄຳຖາມຂໍ້ຫຼັງໆແນະຄຳຕອບຂໍ້ທຳອິດ.
- ຖາມເລື່ອງທີ່ຜູ້ຮຽນຄ່ອງປາກຢູ່ແລ້ວໂດຍສະເພາະຄຳຖາມປະເພດພັງເພີຍ, ສຸພາສິດ, ຄະຕິ ຫຼື ຄຳເຕືອນໃຈ.
- ໃຊ້ຂໍ້ຄວາມຂອງຄຳຕອບຖືກຊ້ຳກັບຄຳຖາມ ຫຼື ກ່ຽວຂ້ອງກັນຢ່າງເຫັນໄດ້ຊັດເພາະນັກຮຽນທີ່ບໍ່ມີຄວາມຮູ້ກໍ່ອາດຈະເດົາໄດ້ຖືກ.
- ຂໍ້ຄວາມຂອງຕົວຖືກບາງສ່ວນເປັນສ່ວນໜຶ່ງຂອງທຸກຕົວເລືອກ.

- ຊຽນຕົວຖືກ ຫຼື ຕົວລວງຖືກ-ຜິດເດັ່ນຊັດເກີນໄປ.
- ຄຳຕອບບໍ່ກະຈາຍ.

ຈາກແນວຄິດ ແລະ ທິດສະດີດັ່ງກ່າວມານັ້ນສະລຸບໄດ້ວ່າ ແບບທົດສອບວັດຜົນສຳເລັດທາງການຮຽນມີຄວາມສຳຄັນຕໍ່ການວັດ ແລະ ປະເມີນຜົນຜູ້ຮຽນເພາະຈະເຮັດໃຫ້ຮູ້ເຖິງຄວາມຮູ້ຄວາມເຂົ້າໃຈທັກສະ ແລະ ທັດສະນະຄະຕິອັນເກີດຈາກການຮຽນຮູ້ຂອງຜູ້ຮຽນ, ເຊິ່ງວັດໄດ້ຈາກການທົດສອບລະຫວ່າງຮຽນ ຫຼື ຫຼັງຈາກການຈັດກິດຈະກ□າການຮຽນ-ການສອນແລ້ວດ້ວຍການທົດສອບ ຫຼື ວິທີອື່ນໆ, ນອກຈາກຜົນສຳເລັດທາງການຮຽນຈະສາມາດບອກຄຸນນະພາບຂອງຜູ້ຮຽນແລ້ວຍັງສະແດງໃຫ້ເຫັນຄຸນຄ່າຫຼັກສູດ, ຄຸນນະພາບຂອງການຈັດກິດຈະກຳການຮຽນ-ການສອນຕະຫຼອດຈົນຄວາມຮູ້-ຄວາມສາມາດຂອງຄູຜູ້ສອນ ແລະ ຜູ້ບໍລິຫານອີກດ້ວຍ.

### 10.3 ການຫາຄຸນນະພາບຂອງຂໍ້ສອບ

#### 1. ຄວາມທ່ຽງຕົງ (Validity)

ຄຳເຜີຍ ພິພັກຂະວົງ (2012:130-134) ຂຽນວ່າ ຄວາມທ່ຽງຕົງໝາຍເຖິງລັກສະນະຂອງແບບທົດສອບທັງສະບັບທີ່ສາມາດວັດໄດ້ກົງກັບຈຸດມຸ່ງໝາຍທີ່ຕ້ອງການ ຫຼື ວັດໃນສິ່ງທີ່ຕ້ອງການວັດຢ່າງຖືກຕ້ອງແມ່ນຍຳ, ຄວາມທ່ຽງຕົງຈຶ່ງປຽບເໝືອນຫົວໃຈຂອງການທົດສອບເຊັ່ນຕ້ອງການວັດນັກຮຽນມີຄວາມສາມາດໃນການຄຳນວນ ຫຼື ບໍ່ກໍຕາມໃຫ້ຄຳນວນຄະແນນທີ່ໄດ້ຈະຫຼາຍ ຫຼື ໜ້ອຍຂຶ້ນຢູ່ກັບຄວາມສາມາດດ້ານການຄຳນວນຄວາມທ່ຽງຕົງຂອງແບບທົດສອບປະກອບມີ 4 ແບບຄື:

1). ຄວາມທ່ຽງຕົງຕາມເນື້ອໃນ (Content Validity) ໝາຍເຖິງ ຄວາມສາມາດຂອງແບບທົດສອບທີ່ວັດໄດ້ກົງເນື້ອໃນທີ່ໄດ້ທຳການສອນ ຫຼື ກົງກັບເນື້ອໃນທີ່ກຳນົດໄວ້ໃນຫຼັກສູດ ຫຼື ກົງກັບເນື້ອໃນໃນຕາຕະລາງວິເຄາະຫຼັກສູດກໍຄືເມື່ອສິດສອນເນື້ອໃນໃດກໍອອກຂໍ້ສອບວັດໃຫ້ຕົງກັບເນື້ອໃນນັ້ນ.

2). ຄວາມທ່ຽງຕົງຕາມໂຄງສ້າງ (Conatruction Validity) ໝາຍເຖິງຄວາມສາມາດຂອງແບບທົດສອບທີ່ວັດໄດ້ກົງກັບຈຸດມຸ່ງໝາຍທີ່ກຳນົດໄວ້ໃນຫຼັກສູດ ຫຼື ວັດໄດ້ກົງກັບພຶດຕິກຳທີ່ຕ້ອງການໃຫ້ເກີດກັບນັກຮຽນ ຫຼື ຖືກກັບພຶດຕິກຳທີ່ຢູ່ໃນຕາຕະລາງວິເຄາະຫຼັກສູດກໍຄືເມື່ອຈະສອນເນື້ອໃນໃດຄູຕ້ອງກຳນົດຈຸດມຸ່ງໝາຍໄວ້ລ່ວງໜ້າວ່າ ຈະໃຫ້ນັກຮຽນເກີດສະມັດຖະພາບສະໝອງທາງດ້ານໃດແລ້ວຈຶ່ງເລີ່ມສອນ ແລະ ຂຽນຂໍ້ສອບໃຫ້ກົງກັບພຶດຕິກຳທີ່ຕ້ອງການ.

3). ຄວາມທ່ຽງຕົງຕາມສະພາບການ (Concurrent Validity) ໝາຍເຖິງ ຄວາມສາມາດຂອງແບບທົດສອບທີ່ວັດໄດ້ກົງກັບສະພາບຄວາມເປັນຈິງໃນຊີວິດປະຈຳວັນ ຫຼື ປະຈຸບັນຂອງນັກຮຽນ ຫຼື ເວົ້າໄດ້ວ່າເປັນຄວາມສາມາດຂອງແບບທົດສອບທີ່ຊ່ວຍໃຫ້ຄູປະເມີນສະຖານະພາບທີ່ແທ້ຈິງຂອງນັກຮຽນໃນປະຈຸບັນໄດ້ຖືກຕ້ອງ.

4). ຄວາມທ່ຽງຕົງຕາມການພະຍາກອນ (Predictive Validity) ໝາຍເຖິງ ຄວາມສາມາດຂອງແບບທົດສອບທີ່ວັດໄດ້ກົງກັບສະພາບຄວາມເປັນຈິງຂອງນັກຮຽນທີ່ຈະເກີດຂຶ້ນໃນອານາຄົດກໍຄື ຄະແນນຜົນການສອບທີ່ເກີດຈາກແບບທົດສອບຊຸດນັ້ນສອດຄ່ອງກັບຜົນການຮຽນ ຫຼື ຄວາມສໍາເລັດໃນອານາຄົດຂອງນັກຮຽນເຊັ່ນ ແບບທົດສອບຄັດເລືອກເພື່ອເຂົ້າຮຽນສາມາດທໍານາຍໄດ້ວ່າຄົນທີ່ສອບຄັດເລືອກຜ່ານມານັ້ນໜ້າຈະຮຽນໄດ້ສໍາເລັດ.

**2. ຄວາມເຊື່ອໝັ້ນ (Reliability)**

ຄວາມເຊື່ອໝັ້ນ ໝາຍເຖິງ ລັກສະນະຂອງແບບທົດສອບທັງສະບັບທີ່ສາມາດວັດໄດ້ຢ່າງສອດຄ່ອງກັນໂດຍບໍ່ມີການປ່ຽນແປງບໍ່ວ່າຈະທົດສອບໃໝ່ຫຼາຍຄັ້ງກໍ່ຕາມເຊັ່ນ ສ້າງແບບທົດສອບຊຸດໜຶ່ງແລ້ວນໍາໄປທົດສອບກັບນັກຮຽນກຸ່ມໜຶ່ງ 2 ຄັ້ງ ໂດຍໃຫ້ມີເວລາຫວ່າງຫ່າງກັນພໍປະມານ (1-8 ອາທິດ) ຖ້າພົບວ່ານັກຮຽນແຕ່ລະຄົນໄດ້ຄະແນນເທົ່າໆເກົ່າທັງ 2 ຄັ້ງສະແດງວ່າແບບທົດສອບຊຸດນີ້ມີຄວາມເຊື່ອໝັ້ນສູງ.

**3. ອໍານາດຈໍາແນກ (Disrimination)**

ອໍານາດຈໍາແນກ ໝາຍເຖິງ ຄວາມສາມາດໃນການຈໍາແນກຜູ້ສອບ ຂໍ້ສອບທີ່ດີຈະຕ້ອງມີຄ່າອໍານາດຈໍາແນກສູງ ຕາມທິດສະດີການວັດຜົນແບບອີງກຸ່ມ (Norm Refereneed Measurement) ອໍານາດຈໍາແນກຂອງຂໍ້ສອບໝາຍເຖິງ ຄວາມສາມາດຂອງຂໍ້ສອບນັ້ນໃນການຈໍາແນກຜູ້ສອບອອກເປັນ 2 ກຸ່ມຄື ກຸ່ມເກັ່ງກັບກຸ່ມອ່ອນຖ້າຂໍ້ສອບມີອໍານາດຈໍາແນກສູງສະແດງວ່າ ຄົນກຸ່ມເກັ່ງຕອບຂໍ້ສອບຂໍ້ນັ້ນຖືກແຕ່ຄົນກຸ່ມອ່ອນຕອບບໍ່ຖືກ, ສ່ວນການວັດຜົນແບບອີງເກນ (Criterion Refereneed Measurement) ໝາຍເຖິງ ຄວາມສາມາດຂອງຂໍ້ສອບນັ້ນໃນການຈໍາແນກຜູ້ສອບອອກເປັນ 2 ກຸ່ມຄື ກຸ່ມຮອບຮູ້ກັບກຸ່ມບໍ່ຮອບຮູ້, ຖ້າຂໍ້ສອບມີອໍານາດຈໍາແນກສູງແປວ່າ ຄົນກຸ່ມຮອບຮູ້ຕອບຂໍ້ສອບນັ້ນຖືກແຕ່ຄົນກຸ່ມບໍ່ຮອບຮູ້ຕອບບໍ່ຖືກ

**4. ຄວາມຍາກ (Difficulty)**

ກ່ຽວກັບຄວາມຍາກຂອງຂໍ້ສອບນັ້ນຂຶ້ນຢູ່ກັບທິດສະດີເປັນຫຼັກເຊັ່ນດຽວກັບທິດສະດີຂອງອໍານາດຈໍາແນກ, ຕາມທິດສະດີການວັດແບບອີງກຸ່ມຂໍ້ສອບທີ່ດີຄືຂໍ້ສອບທີ່ບໍ່ຍາກ ຫຼື ງ່າຍເກີນໄປ ຫຼື ມີຄວາມຍາກ-ງ່າຍພໍເໝາະເພາະຂໍ້ສອບດັ່ງກ່າວຈະສາມາດຈໍາແນກຜູ້ສອບໄດ້ວ່າໃຜເກັ່ງໃຜອ່ອນ, ຂໍ້ສອບທີ່ບໍ່ມີໃຜຕອບຖືກເລີຍ ແລະ ຂໍ້ສອບທີ່ທຸກຄົນຕອບຖືກຕ່າງກໍບໍ່ສາມາດຈໍາແນກຜູ້ຕອບໄດ້ວ່າ ໃຜເກັ່ງໃຜອ່ອນຈຶ່ງບໍ່ມີຄຸນຄ່າໃນການຈໍາແນກ, ສ່ວນທິດສະດີການວັດຜົນແບບອີງເກນນັ້ນຖືວ່າການສ້າງຂໍ້ສອບກໍເພື່ອທີ່ຈະວັດວ່າຜູ້ຮຽນໄດ້ບັນລຸຈຸດປະສົງຫຼືບໍ່, ການທີ່ທຸກຄົນຕອບຂໍ້ສອບຖືກສະແດງວ່າບັນລຸຈຸດປະສົງຕາມທີ່ຕ້ອງການຈະວ່າຂໍ້ສອບບໍ່ດີກໍບໍ່ໄດ້, ດັ່ງນັ້ນເລື່ອງຄວາມຍາກ-ງ່າຍຈຶ່ງບໍ່ແມ່ນສິ່ງສໍາຄັນ, ສິ່ງສໍາຄັນຢູ່ທີ່ຂໍ້ສອບນັ້ນໄດ້ວັດໃນຈຸດປະສົງທີ່ຕ້ອງການວັດໄດ້ແທ້ຈິງຫຼືບໍ່, ຖ້າວັດໄດ້ແທ້ຈິງກໍນັບວ່າເປັນຂໍ້ສອບທີ່ດີໄດ້ເຖິງແມ່ນວ່າຈະເປັນຂໍ້ສອບທີ່ງ່າຍກໍຕາມ.

**5. ຄວາມຈຳເພາະເຈາະຈົງ (Definition)**

ໝາຍເຖິງຂໍ້ສອບທີ່ມີແນວທາງ ຫຼື ທິດທາງການຖາມ-ການຕອບຊັດເຈນບໍ່ຄຸມເຄືອ,ບໍ່ເຮັດໃຫ້ນັກຮຽນງົງ, ນັກຮຽນບໍ່ໄດ້ຄະແນນເນື່ອງຈາກການຕອບບໍ່ຖືກດີກວ່າບໍ່ໄດ້ຄະແນນເນື່ອງຈາກວ່າບໍ່ເຂົ້າໃຈຄຳຖາມ ແລະ ຄວາມບໍ່ຈຳເພາະເຈາະຈົງຂອງຂໍ້ສອບນີ້ອາດຈະເກີດຂຶ້ນໄດ້ກັບຂໍ້ສອບທຸກຊະນິດທັງນີ້ຂຶ້ນຢູ່ກັບຜູ້ຂຽນຂໍ້ສອບວ່າສາມາດອອກຂໍ້ສອບໄດ້ຮັດກຸມ ແລະ ຊັດເຈນພຽງໃດ.

**6. ປະສິດທິພາບ (Efficiency)**

ໝາຍເຖິງ ແບບທົດສອບທີ່ມີຈຳນວນຂໍ້ຫຼາຍພໍປະມານ, ໃຊ້ເວລາສອບພໍເໝາະ, ປະຢັດຄ່າໃຊ້ຈ່າຍ, ເຮັດແບບທົດສອບດ້ວຍຄວາມປານີດ, ກວດໃຫ້ຄະແນນໄດ້ວ່ອງໄວລວມທັງສິ່ງແວດລ້ອມໃນການສອບທີ່ດີໄດ້ແກ່ ສະພາບຫ້ອງສອບຮຽບຮ້ອຍບໍ່ມີສິ່ງລົບກວນຜູ້ເຂົ້າສອບ, ກຳມະການຄວບຄຸມຮັດກຸມ ນອກຈາກ ນີ້ຫາກສ້າງຂໍ້ສອບໄວ້ຢ່າງດີແລ້ວ ແລະ ສາມາດນຳໄປໃຊ້ໄດ້ຫຼາຍໆຄັ້ງຢ່າງເໝາະສົມໂດຍບໍ່ເກີດຄວາມເສຍຫາຍໃດໆເຊັ່ນ: ຂໍ້ສອບແບບເລືອກຕອບກໍຄວນຈັດທຳເພາະເປັນການປະຢັດຄ່າໃຊ້ຈ່າຍ ແລະ ແຮງງານ.

## 11. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ປະລິນຍາ ປັ້ນສຸວັນ (2553) ການປຽບທຽບຜົນການຮຽນວິຊາວັນນະຄະດີຂອງນັກສຶກສາປີທີ່ 2 ທີ່ຈັດການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ່2 (jigsaw II) ກັບປົກກະຕິ ເຊິ່ງຜົນການວິໄຈ ພົບວ່າ ຜົນສະຖິຕິທາງການຮຽນວັນນະຄະດີໄທຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ່2 ທີ່ຈັດການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ່ (Jigsaw) ມີຄ່າສະເລ່ຍເທົ່າກັບ 30.30, ຄ່າຜັນປ່ຽນມາດຕະຖານເທົ່າກັບ 3.30 ສູງກ່ວາຜົນສຳເລັດການຮຽນວັນນະຄະດີໄທຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ່2 ທີ່ຈັດການຮຽນຮູ້ແບບປົກກະຕິທີ່ມີຄ່າສະເລ່ຍເທົ່າກັບ26.55, ຄ່າຜັນປ່ຽນມາດຕະຖານເທົ່າກັບ 3.25 ໂດຍຄະແນນແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິມີລະດັບ .05, ຜົນສຳເລັດການຮຽນວັນນະຄະດີໄທຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ່2 ທີ່ຈັດການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ່(Jigsaw)2 ຫຼັງຮຽນມີຄ່າສະເລ່ຍເທົ່າກັບ 30.30, ຄ່າຜັນປ່ຽນມາດຕະຖານ 3.30 ສູງກ່ວາກ່ອນຮຽນເຊິ່ງມີຄ່າສະເລ່ຍເທົ່າກັບ 22.49, ຄ່າຜັນປ່ຽນມາດຕະຖານເທົ່າກັບ 3.62 ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະທຖິຕິລະດັບ.05, ຄວາມຄິດເຫັນຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ່2 ທີ່ມີຕໍ່ການຈັດການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ່ (Jigsaw II) ໂດຍພາບລວມຢູ່ໃນລະດັບເຫັນດີຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ 4.39, ຄ່າຜັນປ່ຽນມາດຖານເທົ່າກັບ 0.46 ແລະ ນັກຮຽນມີຄວາມຄິດເຫັນລະດັບດີຫຼາຍຕໍ່ກິດຈະກຳການຮຽນຮູ້ເຊິ່ງມີຄ່າສະເລ່ຍເທົ່າກັບ 4.42, ຄ່າຜັນປ່ຽນມາດຖານເທົ່າກັບ 0.49 ຜົນປະໂຫຍດທີ່ໄດ້ຮັບຈາກການຮຽນເຊິ່ງມີຄ່າສະເລ່ຍເທົ່າກັບ 4.39, ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.51 ແລະ ບັນຍາກາດໃນການຮຽນມີຄ່າສະເລ່ຍເທົ່າກັບ 4.34, ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.60.

ສຸວະດົນ ທອງແມ້ນ (2547) ການພັດທະນາການອ່ານຈັບໃຈຄວາມດ້ວຍເທັກນິກຈິກຊໍ່ (Jigsaw) ກຸ່ມສະລະການຮຽນຮູ້ພາສາໄທ ຊັ້ນມັດທະຍົມປີທີ່1ເຊິ່ງຜົນການສຶກສາຄົ້ນຄ້ວາພົບວ່າ ຜົນການພັດທະນາທັກສະການອ່ານຈັບໃຈຄວາມຂອງນັກສຶກສາດ້ວຍເທັກນິກຈິກຊໍ່ (Jigsaw) ໄດ້ພັດທະນາການເພີ່ມຂຶ້ນຄິດເປັນສ່ວນຮ້ອຍລະ 33.88 ແຜນການຈັດການຮຽນຮູ້ເລື່ອງການອ່ານຈັບໃຈຄວາມດ້ວຍເທັກນິກຈິກຊໍ່ (Jigsaw) ກຸ່ມສະການຮຽນພາສາໄທຊັ້ນມັດທະຍົມສຶກສາປີທີ 1 ທີ່ສ້າງຂຶ້ນມີປະສິດທິພາບເທົ່າກັບ 83.36/83.44 ແລະ ມີຄ່າດັດສະນີປະສິດທິຜົນເທົ່າກັບ 0.6716 ນັ້ນຄືຜູ້ຮຽນມີຄວາມຮູ້ເພີ່ມຂຶ້ນຮ້ອຍລະ 67.16 ຫຼັງຈາກຮຽນຕາມແຜນການຈັດການຮຽນຮູ້ດ້ວຍເທັກນິກຈິກຊໍ່ (Jigsaw) ແລະ ນັກສຶກສາມີຄວາມເພິງພໍໃຈຕໍ່ກັບການຮຽນຕາມແຜນການຈັດການຮຽນຮູ້ດ້ວຍເທັກນິກຈິກຊໍ່ (Jigsaw) ຢູ່ໃນລະດັບຫຼາຍ.

ໂດຍສະຫຼຸບ: ແຜນການຈັດການຮຽນຮູ້ ເລື່ອງການອ່ານຈັບໃຈຄວາມດ້ວຍເທັກນິກຈິກຊໍ່ (Jigsaw) ກຸ່ມສະການຮຽນພາສາໄທຊັ້ນມັດທະຍົມສຶກສາປີທີ 1 ມີປະສິດທິພາບ ແລະ ມີປະສິດທິຜົນສາມາດນຳເອົາແຜນການຈັດການຮຽນຮູ້ນີ້ໄປໃຊ້ຈັດກິດຈະກຳການຮຽນຮູ້ໄດ້ຢ່າງມີປະສິດທິພາບຈະຊ່ວຍໃຫ້ນັກສຶກສາມີຜົນສະຖິຕິທາງການຮຽນສູງຂຶ້ນ ແລະ ມີຄວາມເພິງພໍໃຈຕໍ່ກິດຈະກຳການຮຽນຮູ້ດ້ວຍເທັກນິກຈິກຊໍ່ (Jigsaw) ເປັນຢ່າງດີ.

ວັດຊະຣາ ເວດບັນພົດ (2550) ໄດ້ເຮັດການວິໄຈເລື່ອງຜົນການຈັດກິດຈະກຳການຮຽນຮູ້ເລື່ອງການອ່ານຈັບໃຈຄວາມນິທານພື້ນບ້ານໂດຍໃຊ້ການຮຽນຮູ້ແບບຮ່ວມມືດ້ວຍເທັກນິກ Jigsaw ຂອງນັກຮຽນຊັ້ນປະຖົມສຶກສາປີ 2 ຜົນການຄົ້ນຄ້ວາພົບວ່າ ແຜນການຈັດກິດຈະກຳການຮຽນຮູ້ເລື່ອງການອ່ານຈັບໃຈຄວາມນິທານພື້ນບ້ານໂດຍໃຊ້ການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ່ທີ່ສ້າງຂຶ້ນມີປະສິດທິພາຍເທົ່າກັບ 86.91/85.05 ແລະມີດັດສະນີປະສິດທິຜົນເທົ່າກັບ 0.59, ສະແດງວ່ານັກຮຽນມີຄວາມກ້າວໜ້າທາງການຮຽນຮ້ອຍລະ 59.

ປັດທະມາວະດີ ຄະນາດີ (2552) ໄດ້ຄົ້ນຄ້ວາເລື່ອງການປຽບທຽບຄວາມສາມາດໃນການອ່ານຈັບໃຈຄວາມພາສາອັງກິດຂອງນັກຮຍນຊັ້ນມັດທະຍົມສຶກສາ ປີທີ 1 ລະຫວ່າງການຈັດກິດຈະກຳດ້ວຍກຸ່ມແບບ Jigsaw ແລະ ກຸ່ມແບບ TAI, ເຊິ່ງຜົນການຄົ້ນຄ້ວາພົບວ່າແຜນການຈັດກິດຈະກຳການອ່ານຈັບໃຈຄວາມພາສາອັງກິດຂອງນັກຮຽນດ້ວຍການຈັດກິດຈະກຳກຸ່ມແບບ Jigsaw ແລະ ກຸ່ມແບບ TAI ມີປະສິດທິພາບເທົ່າກັບ 88.15/79.15 ແລະ 82.94/81.22 ຕາມລຳດັບ ສະແດງວ່າແຜນການອ່ານຈັບໃຈຄວາມແບບກຸ່ມJigsaw ແລະ TAI ທີ່ຜູ້ຄົ້ນຄ້ວາພັດທະນາຂຶ້ນມາມີປະສິດທິພາບສູງກວ່າເກນ 75/75 ທີ່ຕັ້ງໄວ້.

# ບົດທີ 3

# ວິທີການດຳເນີນການຄົ້ນຄວ້າ

ການຄົ້ນຄວ້າໃນຄັ້ງນີ້ເປັນການຄົ້ນຄວ້າການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (jigsaw) ສຳລັບນັກສຶກສາປີທີ 3 ລະບົບ 12+4 ສາຍຄູພາສາອັງກິດທີ່ວິທະຍາໄລຄູຫລວງພະບາງ. ສະນັ້ນ, ຜູ້ຄົ້ນຄວ້າຈິ່ງໄດ້ດຳເນີນການສຶກສາຕາມຂັ້ນຕອນດັ່ງນີ້:

1. ປະຊາກອນ ແລະ ກຸ່ມຕົວຢ່າງ.
2. ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາ.
   2.1. ການສ້າງບົດສອນວິຊາ ພາສາອັງກິດ ພາກອ່ານໂດຍການນຳໃຊ້ວິທີສອນແບບຈິກຊໍ່ (Jigsaw).
   2.2. ການສ້າງ ແລະ ການຫາຄຸນນະພາບແບບທົດສອບວັດຜົນການຮຽນຂອງນັກສຶກສາ.
   2.3. ການຫາປະສິດທິພາບຂອງບົດສອນການນຳໃຊ້ວິທີສອນແບບຈິກຊໍ່ (Jigsaw).
3. ການເກັບກຳ ແລະ ລວບລວມຂໍ້ມູນ.
4. ການວິເຄາະຂໍ້ມູນ.
5. ສະຖິຕິທີໃຊ້ໃນການວິເຄາະຂໍ້ມູນ.

## 1. ປະຊາກອນ ແລະ ກຸ່ມຕົວຢ່າງ

### 1.1 ປະຊາກອນ

ປະຊາກອນຄືນັກສຶກສາຊັ້ນປີທີ 3 ລະບົບ 12+4 ສາຍຄູພາສາອັງກິດໃນພາກຮຽນທີ II ສົກຮຽນ 2013-14 ທີ່ວິທະຍາໄລຄູຫລວງພະບາງມີຈຳນວນ 1 ຫ້ອງມີນັກສຶກສາທັງໝົດ 45 ຄົນ, ຍິງ 18 ຄົນ.

### 1.2 ກຸ່ມຕົວຢ່າງ

ຄືນັກສຶກສາຊັ້ນປີທີ 3 ລະບົບ 12+4 ສາຍຄູພາສາອັງກິດໃນພາກຮຽນທີ່ II ສົກຮຽນ 2013-14 ທີ່ວິທະຍາໄລຄູຫລວງພະບາງມີຈຳນວນ1ຫ້ອງມີຈຳນວນ 30 ຄົນຍິງ 11 ຄົນໂດຍໃຊ້ການເລືອກແບບເຈາະຈົງ (Purposive Sampling).

## 2. ຂັ້ນຕອນໃນການຄົ້ນຄວ້າ




**ພາບປະກອບທີ 2:** ຂັ້ນຕອນໃນການຄົ້ນຄວ້າ

## 3. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ການສຶກສາຄົ້ນຄວ້າໃນຄັ້ງນີ້ຜູ້ຄົ້ນຄ້ວາໄດ້ນຳໃຊ້ເຄື່ອງມືເຂົ້າໃນການເກັບກຳຂໍ້ມູນປະກອບມີດັ່ງນີ້:

- ບົດສອນ, ການສອນອ່ານຈັບໃຈຄວາມດ້ວຍວິທີສອນແບບຈິກຊໍ່ (Jigsaw), ມີຈຳນວນ 5 ບົດ, ຂຶ້ນສອນຄັ້ງໜຶ່ງຈະໃຊ້ເວລາສອນບົດລະ 2 ຊົ່ວໂມງ ຫຼື 100 ນາທີລວມທັງໝົດ 10 ຊົ່ວໂມງ.

- ແບບທົດສອບຍ່ອຍທ້າຍບົດສອນການສອນອ່ານຈັບໃຈຄວາມດ້ວຍວິທີແບບຈິກຊໍ່ (Jigsaw) ເປັນລັກສະນະທົດສອບແບບປາລາໄນທີ່ປະກອບມີ 4 ຕົວເລືອກຄື A, B, C, D ມີຈຳນວນ 5 ຊຸດ, ຊຸດລະ 5 ຂໍ້.

- ແບບທົດສອບລວມເປັນແບບປາລາໄນທີ່ປະກອບມີ 4 ຕົວເລືອກຄື A, B, C, D ມີຈຳນວນ 1 ຊຸດມີຈຳນວນ 25 ຂໍ້ເພື່ອໃຊ້ທົດສອບກ່ອນສອນ ແລະ ທົດສອບຫຼັງເມື່ອສິ້ນສຸດການຮຽນ-ການສອນໝົດທັງ 5 ບົດສອນ.

- ແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນອ່ານຈັບໃຈຄວາມດ້ວຍວິທີສອນແບບຈິກຊໍ່ (Jigsaw) ເຊິ່ງປະກອບມີ 6 ດ້ານມີຈຳນວນ 27 ຂໍ້.

### 3.1 ການສ້າງ ແລະ ການຫາຄຸນນະພາບຂອງເຄື່ອງມື

1 ການສ້າງບົດສອນ ແລະ ຫາຄຸຄຸນນະພາບຂອງບົດສອນ

ການສ້າງບົດສອນວິຊາພາສາອັງກິດໂດຍການສອນອ່ານຈັບໃຈຄວາມພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ສຳຫລັບນັກສຶກສາປີທີ 3 ລະບົບ 12+4 ສາຍຄູພາສາອັງກິດວິທະຍາໄລຄູຫລວງພະບາງ ຜູ້ຄົ້ນຄວ້າໄດ້ດຳເນີນການດັ່ງນີ້:

1.1. ສຶກສາຄົ້ນຄ້ວາທິດສະດີ, ເອກະສານ, ຕຳລາ ແລະ ບົດວິໄຈທີ່ກ່ຽວຂ້ອງກັບການl ສ້າງບົດສອນອ່ານຈັບໃຈຄວາມດ້ວຍວິທີສອນແບບຈິກຊໍ່ (Jigsaw) ເພື່ອເປັນແນວທາງໃນການສ້າງແຜນການສອນ

1.2. ສຶກສາຄົ້ນຄ້ວາເນື້ອໃນຫຼັກສູດການສ້າງຄູມັດທະຍົມຕົ້ນ ແລະ ບົດຮຽນໃຫ້ລະອຽດແລ້ວຈິ່ງນຳເອົາຂໍ້ມູນ ແລະ ແນວທາງທີ່ໄດ້ທັງໝົດຈາກການສຶກສາຄົ້ນຄ້ວາມາສ້າງເປັນບົດສອນດ້ວຍວິທີສອນແບບເທັກນິກຈິກຊໍ່ (Jigsaw) ຕາມຂັ້ນຕອນດັ່ງນີ້:

1) ນຳເອົາບົດສອນທີ່ສ້າງຂຶ້ນໄປສະເໜີຕໍ່ອາຈານທີປຶກສາເພື່ອພິຈາລະນາຄວາມຖືກຕ້ອງຂອງຈຸດປະສົງ, ເໝາະສົມຂອງອົງປະກອບຂອງບົດສອນກັບເນື້ອໃນບົດຮຽນ, ກິດຈະກຳ ແລະ ທາງດ້ານວັດປະເມີນຜົນ.

2). ນໍເອົາບົດສອນໄປປັບປຸງແກ້ໄຂຕາມຄຳແນະນຳຂອງອາຈານທີ່ປຶກສາ,ຈາກນັ້ນນຳເອົາບົດສອນໄປສະເໜີຜ່ານຜູ້ຊ່ຽວຊານທັງ 3 ທ່ານເພື່ອກວດສອບຄວາມຖືກຕ້ອງ, ຄວາມສອດຄ່ອງການໃຊ້ພາສາຕາມຂັ້ນຕອນຕ່າງໆຂອງແຜນການສອນອ່ານຈັບໃຈຄວາມດ້ວຍວິທີສອນແບບຈິກຊໍ່ (Jigsaw) ໂດຍໃຊ້ຄ່າ Index of Objective Congruence: IOC ກຳນົດຄະແນນຄວາມສອດ ຄ່ອງ ຫຼື ຄວາມຄິດເຫັນດັ່ງນີ້: (ຄຳເຜີຍ ພິພັກຂະວົງ 2012:128)

ໃຫ້ຄະແນນ +1 ມີຄວາມຄິດເຫັນວ່າສອດຄ່ອງ

ໃຫ້ຄະແນນ 0 ມີຄວາມຄິດເຫັນວ່າບໍ່ແນ່ໃຈ

ໃຫ້ຄະແນນ -1 ມີຄວາມຄິດເຫັນວ່າບໍ່ສອດຄ່ອງ

3) ນຳເອົາຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານໄປແທນໃສ່ສູດເພື່ອຫາຄ່າດັດສະນີຄວາມສອດຄ່ອງຂອງບົດສອນມີຄ່າເທົ່າ 0.67-1.00 ສະແດງວ່າແຜນການສອນນັ້ນມີຄວາມເໝາະສົມ, ໂດຍໃຊ້ສູດລຸ່ມນີ້.

$$IOC = \frac{\sum R}{N}$$

$IOC$ ແມ່ນ ດັດສະນີຄວາມສອດຄ່ອງ.

$\sum R$ ແມ່ນ ຜົນລວມຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານ.

$N$ ແມ່ນ ຈຳນວນຜູ້ຊ່ຽວຊານ.

4) ນຳເອົາບົດສອນໄປປັບປຸງ ແລະ ແກ້ໄຂຕາມຄຳແນະນຳຂອງອາຈານທີ່ປຶກສາ ແລະ ຜູ້ຊ່ຽວຊານເພື່ອກວດສອບຄວາມຖືກຕ້ອງອີກເທື່ອໜຶ່ງແລ້ວນຳເອົາບົດສອນທີ່ສົມບູນທົດລອງສອນຕົວຈິງກັບກຸ່ມຕົວຢ່າງທີ່ໄດ້ກະກຽມໄວ້ເພື່ອເກັບກຳຂໍ້ມູນທີ່ຈະນຳມາວິເຄາະຫາຄ່າຕ່າງໆ

**3.2 ການສ້າງ ແລະ ການຫາຄຸນນະພາບແບບທົດສອບວັດຜົນການຮຽນຂອງນັກສຶກສາ**

ສ້າງແບບທົດສອບວັດຜົນສຳເລັດທາງການຮຽນວິຊາ ພາສາອັງກິດ ສຳລັບນັກສຶກສາປີທີ3 ລະບົບ 12+4 ສາຍຄູພາສາອັງກິດ ທີ່ວິທະຍາໄລຄູຫລວງພະບາງ ຜູ້ຄົ້ນຄວ້າດຳເນີນການສ້າງ ແລະ ຫາຄຸນນະພາບແບບທົດສອບຕາມຂັ້ນຕອນດັ່ງນີ້.

1. ສຶກສາເອກະສານກ່ຽວກັບວິທີສ້າງແບບທົດສອບວັດຜົນສຳເລັດທາງການຮຽນ.

2. ສຶກສາເນື້ອໃນ ແລະ ຈຸດປະສົງຂອງການຮຽນວິຊາພາສາອັງກິດສຳລັບນັກສຶກສາສາຍຄູພາສາອັງກິດ ທີ່ວິທະຍາໄລຄູຫລວງພະບາງຈາກຫລັກສູດ, ຕຳລາ ແລະ ຄູ່ມື ເພື່ອສ້າງແບບທົດສອບໃຫ້ສອດຄ່ອງກັບຈຸດປະສົງການຮຽນຮູ້ ແລະ ເນື້ອໃນທີ່ກຳນົດໄວ້.

3. ສຶກສາວິທີການສ້າງແບບທົດສອບ, ແບບປາລະໄນຊະນິດເລືອກຕອບທີ່ປະກອບມີ 4 ຕົວເລືອກ ແລະ ສຶກສາວິທີການວິເຄາະຂໍ້ສອບເພື່ອສາມາດອອກຂໍ້ສອບໃຫ້ຄວບຄຸມເນື້ອໃນ ແລະ ສິ່ງທີ່ຕ້ອງການວັດ.

4. ດຳເນີນການສ້າງແບບທົດສອບໃຫ້ຄວບຄຸມເນື້ອໃນ ແລະ ຈຸດປະສົງການຮຽນຮູ້ທີ່ຕັ້ງໄວ້ຈຳນວນ 35 ຂໍ້ໂດຍຈາກການວິເຄາະຫຼັກສູດແລ້ວນຳສະເໜີຕໍ່ອາຈານທີ່ປຶກສາເພື່ອກວດສອບຄວາມຖືກຕ້ອງ ແລະ ເໝາະສົມຂອງຂໍ້ສອບແລ້ວຄັດເລືອກເອົາຂໍ້ສອບທີ່ໄດ້ມາດຖານຈຳນວນ25 ຂໍ້

5. ນຳເອົາບົດທົດສອບທີ່ສ້າງຂຶ້ນໄປສະເໜີຕໍ່ອາຈານທີ່ປຶກສາ ແລະ ຜູ້ຊ່ຽວຊານ.

6. ນຳແບບທົດສອບມາປັບປຸງຕາມຄຳແນະນຳຂອງຜູ້ຊ່ຽວຊານທັງ 3 ທ່ານເພື່ອກວດສອບລັກສະນະການໃຊ້ຄຳຖາມ, ຕົວເລືອກ, ຄວາມສອດຄ່ອງລະຫວ່າງຈຸດປະສົງ ແລະ ພຶດຕິກຳທີ່ຕ້ອງການວັດໂດຍໃຫ້ຜູ້ຊ່ຽວຊານປະເມີນຄ່າດັດສະນີຄວາມສອດຄ່ອງລະຫວ່າງແບບທົດສອບກັບຈຸດປະສົງໂດຍກຳນົດຄະແນນຄວາມສອດຄ່ອງໄວ້ດັ່ງນີ້:

+1 ໝາຍເຖິງຄຳຖາມນັ້ນ ໝັ້ນໃຈວ່າ ມີຄວາມສອດຄ່ອງ.

0 ໝາຍເຖິງຄຳຖາມນັ້ນ ບໍ່ໝັ້ນໃຈວ່າ ມີຄວາມສອດຄ່ອງ.

- 1 ໝາຍເຖິງຄຳຖາມນັ້ນ ໝັ້ນໃຈວ່າ ບໍ່ມີຄວາມສອດຄ່ອງ.

7. ນຳເອົາຂໍ້ມູນຈາກຄວາມຄິດເຫັນຂອງຜູ້ຊ່ຽວຊານຈຳນວນ 3 ທ່ານ ໂດຍນຳມາສັງລວມແຕ່ລະຂໍ້ເພື່ອວິເຄາະຫາຄ່າດັດສະນີຄວາມສອດຄ່ອງຢູ່ໃນລະຫວ່າງ 0.67-1.00 ໂດຍໃຊ້ສູດລຸ່ມນີ້.

$$IOC = \frac{\sum R}{N}$$

$IOC$ ແມ່ນ ດັດສະນີຄວາມສອດຄ່ອງ

$\sum R$ ແມ່ນ ຜົນລວມຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານ.

$N$ ແມ່ນ ຈຳນວນຜູ້ຊ່ຽວຊານ

8. ເລືອກເອົາຂໍ້ສອບທີ່ມີຄ່າດັດສະນີຄວາມສອດຄ່ອງຕັ້ງແຕ່ 0.20-0.80 ຫລັງຈາກນັ້ນໄປທົດສອບກັບນັກສຶກສາປີທີ 5 ສາຍຄູພາສາອັງກິດທີ່ບໍ່ແມ່ນກຸ່ມຕົວຢ່າງເພື່ອນຳເອົາຜົນການທົດສອບມາຫາຄ່າຄວາມຍາກງ່າຍ P=0.20–0.80 ແລະ ຄ່າອຳນາດຈຳແນກ r=0.20–0.80 ໂດຍມີສູດຄິດໄລ່ດັ່ງນີ້ (ສົມລວຍ ສຸຕິຍະໄທ, 2011: 26)

$$P = \frac{H + L}{2N} \qquad r = \frac{H - L}{N}$$

P ແທນຄ່າຄວາມຍາກ

r ແທນຄ່າອຳນາດຈຳແນກ

H ແທນຈຳນວນຄົນຕອບຖືກໃນກຸ່ມສູງ

L ແທນຈຳນວນຄົນຕອບຖືກໃນກຸ່ມຕ່ຳ

N ແທນຈຳນວນຄົນໃນກຸ່ມສູງ ຫຼື ກຸ່ມຕ່ຳ

9. ພິຈາລະນາຄັດເລືອກເອົາຂໍ້ສອບທີ່ມີຄ່າຄວາມຍາກງ່າຍແຕ່ 0.20-0.80 ແລະ ຄ່າອຳນາດຈຳແນກຕັ້ງແຕ່ 0.20–0.80 ເພື່ອນຳມາທົດສອບກັບນັກສຶກສາສາຍອັງກິດທີ່ບໍ່ແມ່ນກຸ່ມຕົວຢ່າງ (ທີ່ໄດ້ຜ່ານການຮຽນວິຊານີ້ມາແລ້ວ)

10. ຫາຄ່າຄວາມເຊື່ອໝັ້ນຂອງແບບທົດສອບມີຄ່າເທົ່າ 0.62 ໂດຍໃຊ້ສູດ KR-20 (ສົມລວຍ ສຸຕິຍະໄທ, 2011: 33)

ສູດ KR-20 $r_{tt} = \frac{n}{n-1}\left[1 - \frac{\sum pq}{s_t^2}\right]$

n ແທນ ຈຳນວນຂໍ້ສອບ.

P ແທນ ອັດຕາສ່ວນຂອງຜູ້ຕອບຖືກໄດ້ໃນຂໍ້ໜຶ່ງໆກັບຄົນທັງໝົດ.

q ແທນ ອັດຕາສ່ວນຂອງຜູ້ຕອບຜິດໃນຂໍ້ໜຶ່ງໆ ຫຼື 1-P.

$s_t^2$ ແທນຄວາມຜັນປ່ຽນຂອງຄະແນນລວມ.

11. ຫຼັງຈາກພິຈາລະນາຄວາມເຊື່ອໝັ້ນໄດ້ດັ່ງນີ້:

1. ແບບທົດສອບສະບັບທີ 1 ມີຈຳນວນ 7 ຂໍ້ໄດ້ຄັດເລືອກເອົາ 5 ຂໍ້, ປະກອບມີດ້ານຄວາມຮູ້, ຄວາມເຂົ້າໃຈ ແລະ ການນຳໃຊ້ເຊິ່ງມີຄວາມຍາກງ່າຍຕັ້ງແຕ່ P=0.45-0.65; ຄ່າອຳນາດຈຳແນກແຕ່ r = 0.30–0.50 ແລະ ມີຄ່າຄວາມເຊື່ອໝັ້ນ $r_{tt}$ = 0.41

2. ແບບທົດສອບສະບັບທີ່2 ມີຈຳນວນ 7 ຂໍ້ໄດ້ຄັດເລືອກເອົາ 5 ຂໍ້ ແລະ ປະກອບມີດ້ານຄວາມຈຳ, ຄວາມເຂົ້າໃຈ ແລະ ການນຳໃຊ້ເຊິ່ງມີຄວາມຍາກງ່າຍຕັ້ງແຕ່ P=0.45–0.65; ຄ່າອຳນາດຈຳແນກແຕ່ r =0.30–0.50 ແລະ ມີຄ່າຄວາມເຊື່ອໝັ້ນ $r_{tt}$ =0.30

3. ແບບທົດສອບສະບັບທີ່3 ມີຈຳນວນ 7 ຂໍ້ໄດ້ຄັດເລືອກເອົາ 5 ຂໍ້ ແລະ ປະກອບມີດ້ານຄວາມຮູ້, ຄວາມເຂົ້າໃຈ ແລະ ການນຳໃຊ້ເຊິ່ງມີຄວາມຍາກງ່າຍຕັ້ງແຕ່ P=0.55-65; ຄ່າອຳນາດຈຳແນກແຕ່ r =0.30-0.50 ແລະ ມີຄ່າຄວາມເຊື່ອໝັ້ນ $r_{tt}$=0.77

4. ແບບທົດສອບສະບັບທີ່4 ມີຈຳນວນ 7 ຂໍ້ໄດ້ຄັດເລືອກເອົາ 5 ຂໍ້, ປະກອບມີດ້ານການນຳໃຊ້, ຄວາມຈຳ ແລະ ຄວາມເຂົ້າໃຈ ເຊິ່ງມີຄວາມຍາກງ່າຍຕັ້ງແຕ່ P=0.50-60 ; ຄ່າອຳນາດຈຳແນກແຕ່ r =0.30-0.50 ແລະ ມີຄ່າຄວາມເຊື່ອໝັ້ນ $r_{tt}$=0.20

5. ແບບທົດສອບສະບັບທີ່ 5 ມີຈຳນວນ 7 ຂໍ້ໄດ້ຄັດເລືອກເອົາ 5 ຂໍ້ ແລະ ປະກອບມີດ້ານຄວາມເຂົ້າໃຈ, ຄວາມຮູ້ ແລະ ການນຳໃຊ້ເຊິ່ງມີຄວາມຍາກງ່າຍຕັ້ງແຕ່ P=0.30-0.45; ຄ່າອຳນາດຈຳແນກແຕ່ r = 0.30-0.40 ແລະ ມີຄ່າຄວາມເຊື່ອໝັ້ນ $r_{tt}$=0.37

6. ແບບທົດສອບກ່ອນຮຽນ ແລະ ຫຼັງຮຽນເຊິ່ງມີຄວາມຍາກງ່າຍຕັ້ງແຕ່ P=0.30-0.70; ຄ່າອຳນາດຈຳແນກແຕ່ r =0.20-0.50 ; ແລະ ມີຄ່າຄວາມເຊື່ອໝັ້ນ $r_{tt}$=0.62

12. ນຳເອົາຂໍ້ສອບທີ່ຜ່ານການຄັດໄລ່ ແລະ ເຫັນວ່າຂໍ້ທີ່ໄດ້ຄຸນນະພາບມາຈັດລຽງຂໍ້ຄືນໃໝ່ເພື່ອໃຫ້ໄດ້ແບບທົດສອບທີ່ສົມບູນທີ່ຈະນຳໄປໃຊ້ກັບກຸ່ມຕົວຢ່າງທີ່ໄດ້ກຽມໄວ້.

### 3.3 ການສ້າງ ແລະ ການຫາຄຸນນະພາບແບບສອບຖາມຄວາມເພິ່ງພໍໃຈ

ແບບວັດຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການຮຽນວິຊາ ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ສຳຫລັບນັກສຶກສາປີ 3 ລະບົບ 12+4 ສາຍຄູພາສາອັງກິດ ທີ່ວິທະຍາໄລຄູຫຼວງພະບາງ, ຜູ້ຄົ້ນຄວ້າດຳເນີນການສ້າງ ແລະ ຂັ້ນຕອນການຫາຄຸນນະພາບຂອງແບບວັດຄວາມເພິ່ງພໍໃຈຂອງນັກສຶກສາມີດັ່ງນີ້:

1). ສຶກສາທິດສະດີ, ເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງກັບວິທີສ້າງແບບວັດຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການຈັດການຮຽນ-ການສອນ.

2). ກຳນົດຫົວຂໍ້ ແລະ ປະເດັນຂອງແຕ່ລະດ້ານທີ່ໃຊ້ສອບຖາມກ່ຽວກັບຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນເຊິ່ງຜູ້ຄົ້ນຄ້ວາໄດ້ກຳນົດເອົາຂອບເຂດຂອງການສອບຖາມຢູ່ 6 ດ້ານຄື: ດ້ານເນື້ອໃນບົດຮຽນ, ດ້ານການຮຽນຮ່ວມມື, ດ້ານການຈັດການຮຽນ-ການສອນ, ດ້ານການອ່ານຈັບໃຈຄວາມ, ດ້ານການສອນຂອງຄູ ແລະ ດ້ານບັນຍາກາດໃນ

ຫ້ອງຮຽນໄດ້ກຳນົດເກນ ຫຼື ຄະແນນລະດັບຄວາມຄິດເຫັນຂອງຄວາມເພິ່ງພໍໃຈຕາມລັກສະນະຂໍ້ຄວາມເຊິ່ງປະກອບມີ 5 ລະດັບຄື (ບຸນຊົມ ສີສະອາດ, 2553:121)

ກຳນົດຄະແນນ 5 ໝາຍເຖິງ ມີຄວາມເພິ່ງພໍໃຈຫຼາຍທີ່ສຸດ.

ກຳນົດຄະແນນ 4 ໝາຍເຖິງ ມີຄວາມເພິ່ງພໍໃຈຫຼາຍ.

ກຳນົດຄະແນນ 3 ໝາຍເຖິງ ມີຄວາມເພິ່ງພໍໃຈປານກາງ.

ກຳນົດຄະແນນ 2 ໝາຍເຖິງ ມີຄວາມເພິ່ງພໍໃຈໜ້ອຍ.

ກຳນົດຄະແນນ 1 ໝາຍເຖິງ ມີຄວາມເພິ່ງພໍໃຈໜ້ອຍທີ່ສຸດ.

3). ດຳເນີນການສ້າງແບບວັດຄວາມເພິ່ງພໍໃຈໃຫ້ຄອບຄຸມເນື້ອໃນແຕ່ລະດ້ານຕາມທີ່ກຳນົດໄວ້ແລ້ວນຳໄປສະເໜີຕໍ່ອາຈານທີ່ເປີກສາເພື່ອກວດສອບຄວາມຖືກຕ້ອງ ແລະ ຊັດເຈນ.

4). ນຳແບບວັດຄວາມເພິ່ງພໍໃຈທີ່ໄດ້ປັບປຸງແກ້ໄຂຮຽບຮ້ອຍຈາກອາຈານທີ່ເປີກສາໄປສະເໜີຕໍ່ຜູ້ຊ່ຽວຊານຈຳນວນ 3 ທ່ານ ເພື່ອກວດສອບລັກສະນະການໃຊ້ຄຳຖາມ, ຄວາມສອດຄ່ອງລະຫວ່າງຈຸດປະສົງແລະ ພຶດຕິກຳທີ່ຕ້ອງການວັດໂດຍໃຫ້ຜູ້ຊ່ຽວຊານປະເມີນຄ່າດັດສະນີຄວາມສອດຄ່ອງແບບການວັດກັບເນື້ອໃນແຕ່ລະດ້ານໂດຍກຳນົດຄະແນນຄວາມສອດຄ່ອງດັ່ງນີ້:

ຄະແນນ +1 ໝາຍເຖິງມີຄວາມເຫັນວ່າ ມີຄວາມສອດຄ່ອງ.

ຄະແນນ 0 ໝາຍເຖິງມີຄວາມເຫັນວ່າ ບໍ່ແນ່ໃຈວ່າມີຄວາມສອດຄ່ອງ.

ຄະແນນ -1 ໝາຍເຖິງມີຄວາມເຫັນວ່າ ບໍ່ມີຄວາມສອດຄ່ອງ.

5). ນຳເອົາຄ່າຄວາມຄິດເຫັນຈາກຜູ່ຊ່ຽວຊານ, ຈາກແບບວັດຄວາມເພິ່ງພໍໃຈມາວິເຄາະຫາຄ່າດັດສະນີຄວາມສອດຄ່ອງ IOC ແຕ່ລະຂໍ້ລະດັບຄວາມສອດຄ່ອງຢູ່ໃນຫວ່າງ 0,67-1.00 ໂດຍໃຊ້ສູດລຸ່ມນີ້.

$$IOC = \frac{\sum R}{N}$$

$IOC$ ແມ່ນ ດັດສະນີຄວາມສອດຄ່ອງ.

$\sum R$ ແມ່ນ ຜົນລວມຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານ.

$N$ ແມ່ນ ຈຳນວນຜູ້ຊ່ຽວຊານ.

6). ເອົາໄປທົດລອງກັບນັກສຶກສາປີ.5 ທີ່ບໍ່ແມ່ນກຸ່ມຕົວຢ່າງແລ້ວນຳເອົາຂໍ້ມູນມາວິເຄາະຫາຄ່າອຳນາດຈຳແນກເປັນແຕ່ລະຂໍ້ໂດຍໃຊ້ສະຫະສຳພັນຂອງຄະແນນແຕ່ລະຂໍ້ກັບຄະແນນລວມ ແລະ ຄັດເລືອກເອົາຂໍ້ທີມີຄ່າສະຫະສຳພັນແຕ່ລະຂໍ້ຢູ່ໃນລະຫວ່າງ 0.20-0.80 ໄປໃຊ້ຕົວຈິງ ໂດຍໃຊ້ສູດ (ສົມລອຍ ສຸຕິຍະໄທ, 2011: 29).

$$r_{xy} = \frac{N\sum XY - \sum X \sum Y}{\sqrt{\left[N\sum X^2 - (\sum X)^2\right]\left[N\sum Y^2 - (\sum Y)^2\right]}}$$

$r_{xy}$ ແທນ ຄ່າສຳປະສິດສະຫະສຳພັນຢ່າງງ່າຍ.

$\sum X$ ແທນ ຜົນບວກທັງໝົດຂອງຄະແນນຊຸດ.

$\sum Y$ ແທນ ຜົນບວກທັງໝົດຂອງຄະແນນຊຸດ.

$\sum X^2$ ແທນ ຜົນບວກທັງໝົດຂອງກຳລັງສອງຂອງຄະແນນຊຸດ.

$\sum Y^2$ ແທນ ຜົນບວກທັງໝົດຂອງກຳລັງສອງຂອງຄະແນນຊຸດ.

$\sum X \sum Y$ ແທນ ຜົນບວກທັງໝົດຂອງຜົນຄູນລະຫວ່າງ X ກັບ Y ແຕ່ລະຄູ່.

N ແທນຈຳນວນກຸ່ມຕົວຢ່າງທັງໝົດ.

7). ນໍຂໍ້ມູນທີ່ໄດ້ມາຊອກຫາຄ່າຄວາມເຊື່ອໝັ້ນຂອງແບບສອບຖາມ (Reliability) ໂດຍໃຊ້ສຳປະສິດຂອງ Cronbach ໃຫ້ມີຄ່າຄວາມເຊື່ອໝັ້ນໃນລະດັບ $\alpha$=0.82 ດັ່ງສູດລຸ່ມນີ້ (ສົມລວຍ ສຸຕິຍະໄທ, 2011: 34)

$$\text{ສູດ } \alpha = \frac{K}{K-1}\left[1-\frac{\sum S_i^2}{S_t^2}\right]$$

ເມື່ອ $\alpha$ ແທນ ສຳປະສິດຂອງຄວາມເຊື່ອໝັ້ນ.

K ແທນ ຈຳນວນຂໍ້ສອບ.

$\sum S_i^2$ ແທນ ຄວາມຜັນປ່ຽນຂອງຄະແນນແຕ່ລະຂໍ້.

$S_t^2$ ແທນ ຄວາມຜັນປ່ຽນຂອງຄະແນນລວມ.

8). ເລືອກເອົາຂໍ້ທີ່ໄດ້ຄຸນນະພາບຈາກການວິເຄາະມາຈັດພິມ ແລະ ຮຽບຮຽງຄືນແບບວັດຄວາມເພິ່ງພໍໃຈສະບັບສົມບູນແລ້ວນຳໄປໃຊ້ກັບນັກສຶກສາປີ 3 ລະບົບ 12+4 ສາຍຄູພາສາອັງກິດ ທີ່ແມ່ນກຸ່ມຕົວຢ່າງຫຼັງຈາກທີ່ສອນໝົດທັງ 5 ບົດສອນແລ້ວ.

## 4. ການເກັບລວບລວມຂໍ້ມູນ

ການສຶກສາຄົ້ນຄ້ວາໃນຄັ້ງນີ້ຜູ້ຜູ້ຄົ້ນຄ້ວາໄດ້ເປັນຜູ້ທົດລອງສອນດ້ວຍຕົນເອງຈົນຄົບຕາມບົດສອນທີ່ໄດ້ກະກຽມໄວ້ໂດຍໃຊ້ບົດການສອນທີ່ຕົນເອງໄດ້ແຕ່ງໄວ້ຕາມຮູບແບບການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີແບບຈິກຊໍ່ (Jigsaw) ເຊິ່ງລວມທັງໝົດ 5 ບົດສອນ ແລະ ການເກັບກຳລວບລວມຂໍ້ມູນຄັ້ງນີ້ຜູ້ຄົ້ນຄ້ວາໄດ້ດຳເນີນການຕາມຂັ້ນຕອນດັ່ງນີ້:

1) ເຂົ້າພົບຫົວໜ້າຫ້ອງການພາສາຕ່າງປະເທດ ແລະ ຫົວໜ້າໜ່ວຍງານວິຊາສະເພາະຂອງຂະແໜງ, ເພື່ອສະເໜີ ຫຼື ແຈ້ງຈຸດປະສົງກ່ຽວກັບການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີແບບຈິກຊໍ່ (Jigsaw) ເພື່ອເປັນການເກັບກຳຂໍ້ມູນໃນການປະກອບເຂົ້າໃນການຂຽນບົດຄົ້ນຄ້ວາ.

2) ກ່ອນຈະດຳເນີນການສອນແຕ່ລະບົດສອນນັ້ນຜູ້ຄົ້ນຄ້ວາໄດ້ທົດສອບນັກສຶກສາກ່ອນຮຽນ (Pre-test) ດ້ວຍແບບທົດສອບລວມທີ່ກຽມໄວ້ຈຳນວນ 25 ຂໍ້

3) ດຳເນີນການສອນຕົວຈິງຕາມຂັ້ນຕອນລະອຽດດັ່ງນີ້:

- ສອນໝົດບົດສອນທີ 1 ຈົບສຳເລັດ ແລ້ວກໍທົດສອບຍ່ອຍຫຼັງການຮຽນຂອງບົດນັ້ນ ຫຼື ແບບທົດສອບປະຈຳບົດຈຳນວນ 5 ຂໍ້.

- ສອນໝົດບົດສອນທີ 2 ຈົບສຳເລັດ ແລ້ວກໍທົດສອບຍ່ອຍຫຼັງການຮຽນບົດນັ້ນ ຫຼື ແບບທົດສອບປະຈຳບົດຈຳນວນ 5 ຂໍ້.

- ສອນໝົດບົດສອນທີ 3 ຈົບສຳເລັດ ແລ້ວກໍ່ທົດສອບຍ່ອຍຫຼັງການຮຽນບົດນັ້ນ ຫຼື ແບບທົດສອບປະຈຳບົດຈຳນວນ 5 ຂໍ້.

- ສອນໝົດບົດສອນທີ 4 ຈົບສຳເລັດ ແລ້ວກໍ່ທົດສອບຍອ່ຍຫຼັງການຮຽນບົດນັ້ນ ຫຼື ແບບທົດສອບປະຈຳບົດຈຳນວນ 5 ຂໍ້.

- ສອນໝົດບົດສອນທີ 5 ຈົບສຳເລັດ ແລ້ວກໍ່ທົດສອບຍ່ອຍຫຼັງການຮຽນບົດນັ້ນ ຫຼື ແບບທົດສອບປະຈຳບົດຈຳນວນ 5 ຂໍ້.

- ພາຍຫຼັງສອນຄົບ 5 ບົດສອນແລ້ວຜູ້ສອນກໍໄດ້ເຮັດການທົດສອບລວມ ຫຼື ການທົດສອບຫຼັງຮຽນເຊິ່ງມີຈຳນວນຂໍ້ສອບ 25 ຂໍ້.

- ພາຍຫຼັງຜູ້ຮຽນໄດ້ສອບຫຼັງຮຽນ (ສອບທ້າຍພາກ) ສຳເລັດແລ້ວຜູ້ສອນກໍໄດ້ຢາຍແບບສອບຖາມຄວາມເພິງພໍໃຈໃຫ້ນັກສຶກສາເພື່ອໄດ້ສະແດງຄຳຄິດຄຳເຫັນຕໍ່ກັບການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw).

## 5. ການວິເຄາະຂໍ້ມູນ

ຫຼັງຈາກທີ່ຜູ້ຄົ້ນຄວ້າເກັບກຳຂໍ້ມູນແລ້ວໆກໍ່ໄດ້ນຳເອົາຂໍ້ມູນດັ່ງກ່າວມາຈັດລຽງ ຫຼື ປ້ອນຂໍ້ມູນເປັນແຕ່ລະພາກສ່ວນເຊິ່ງການວິເຄາະຂໍ້ມູນຄັ້ງນີ້ຜູ້ຄົ້ນຄວ້າໄດ້ນຳໃຊ້ Program Microsoft Excel ເຂົ້າໃນການວິເຄາະຫາຄ່າຕ່າງໆ ແລະ ດຳເນີນການຕາມຂັ້ນຕອນດັ່ງນີ້:

1. ການຫາປະສິດທິພາບຂອງບົດສອນໂດຍການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ຂອງນັກສຶກສາປີ 3 ລະບົບ 12+14 ສາຍຄູພາອັງກິດໂດຍການຫາຄ່າປະສິດທິພາບຂອງຂະບວນການ (E1) ແລະ ປະສິດທິພາບຂອງຜົນສຳເລັດທາງການຮຽນ (E2) ດັ່ງນີ້:

- ນຳເອົາບົດທົດສອບຈາກນັກສຶກສາມາກວດສອບຄວາມຖືກຕ້ອງຂອງການຕອບແບບທົດສອບຂອງນັກສຶກສາ.

- ກວດໃຫ້ຄະແນນແຕ່ລະຄົນຕາມເກນທີ່ໄດ້ກຳນົດໄວ້ 80/80 ລວມທັງໝົດແບບທົດສອບຍ່ອຍ ແລະ ບົດທົດສອບຫຼັງຮຽນຫຼັງຮຽນທັງໝົດ.

- ນຳເອົາຄະແນນຂອງນັກສຶກສາຈາກແບບທົດສອບຍ່ອຍທັງ 5 ຊຸດມາຊອກຫາປະສິດທິພາບຂອງຂະບວນການ ($E_1$).

- ນຳຜົນຄະແນນຂອງນັກສຶກສາຈາກແບບທົດສອບລວມຫຼັງກການຮຽນມາຊອກຫາປະສິດທິພາບຂອງຜົນລັບ ($E_2$).

- ນຳຜົນຄະແນນຂອງນັກສຶກສາ $E_1$ ແລະ $E_2$ ມາວິເຄາະຫາຜົນການທົດສອບຂອງນັກສຶກສາໂດຍຕາມເກນ 80/80.

2. ນຳຜົນຄະແນນທົດສອບກ່ອນຮຽນ ແລະ ຫຼັງຮຽນຂອງນັກສຶກສາມາຄຳນວນຫາຄ່າດັດສະນີປະສິທິຜົນ E.I ເພື່ອວິເຄາະຫາຄ່າປະສິດທິຜົນຂອງຄວາມກ້າວໜ້າທາງການຮຽນຮູ້ຂອງນັກສຶກສາປີ.3 ລະບົບ 12+4 ສາຍຄູພາສາອັງກິດທີ່ວິທະຍາໄລຄູຫລວງພະບາງ, ໂດຍການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (jigsaw).

3. ຄຳນວນຫາຄ່າ $\overline{X}$ ແລະ S.D ເພື່ອວິເຄາະຂໍ້ມູນຈາກແບບສອບຖາມຄວາມເພິງພໍໃຈຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ເຊິ່ງມີເກນ ແລະ ຂັ້ນຕອນດັ່ງນີ້:

1) ນຳແບບວັດຄວາມເພິງພໍໃຈຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີແບບຈິກຊໍ່ (Jigsaw) ໂດຍມີການກຳນົດເກນການໃຫ້ຄະແນນຂອງ (ບຸນຊົມ ສີສະອາດ, 2553: 121) ໄດ້ດັ່ງນີ້:

5 ໝາຍເຖິງ ລະດັບຄວາມເພິງພໍໃຈຫຼາຍທີ່ສຸດ.

4 ໝາຍເຖິງ ລະດັບຄວາມເພິງພໍໃຈຫຼາຍ.

3 ໝາຍເຖິງ ລະດັບຄວາມເພິງພໍໃຈປານກາງ.

2 ໝາຍເຖິງ ລະດັບຄວາມເພິງພໍໃຈໜ້ອຍ.

1 ໝາຍເຖິງ ລະດັບຄວາມເພິງພໍໃຈໜ້ອຍທີ່ສຸດ.

2) ການວິເຄາະຂໍ້ມູນໂດຍຫາຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຖານ (S.D) ໄດ້ກຳນົດເກນໄວ້ 5 ລະດັບໃນການແປຄວາມໝາຍຄ່າສະເລ່ຍດັ່ງນີ້:

ຄ່າສະເລ່ຍລະຫວ່າງ 4.51–5.00 ໝາຍເຖິງ ມີຄວາມເພິງພໍໃຈໃນລະດັບຫຼາຍທີ່ສຸດ.

ຄ່າສະເລ່ຍລະຫວ່າງ 3.51–4.50 ໝາຍເຖິງ ມີຄວາມເພິງພໍໃຈໃນລະດັບຫຼາຍ.

ຄ່າສະເລ່ຍລະຫວ່າງ 2.51–3.50 ໝາຍເຖິງ ມີຄວາມເພິງພໍໃຈໃນລະດັບປານກາງ.

ຄ່າສະເລ່ຍລະຫວ່າງ 1.51–2.50 ໝາຍເຖິງ ມີຄວາມເພິງພໍໃຈໃນລະດັບໜ້ອຍ.

ຄ່າສະເລ່ຍລະຫວ່າງ 1.00–1.50 ໝາຍເຖິງ ມີຄວາມເພິງພໍໃຈໃນລະດັບໜ້ອຍທີ່ສຸດ.

## 6. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

1. ຜູ້ສຶກສາໄດ້ນຳໃຊ້ສະຖິຕິເຂົ້າໃນການວິເຄາະຂໍ້ມູນມີດັ່ງນີ້: ໃຊ້ຄ່າສະເລ່ຍ (mean) ໃຊ້ສູດ (ບຸນຊົມ ສີສະອາດ, 2553:102-103)

$$\overline{X} = \frac{\sum X}{n}$$

$\overline{X}$ ແທນຄ່າສະເລ່ຍ.

$\sum X$ ແທນຜົນຄະແນນລວມທັງໝົດໃນກຸ່ມ.

$n$ ແທນຈຳນວນຄົນໃນກຸ່ມຕົວຢ່າງ.

2. ຄິດໄລ່ຄ່າຜັນປ່ຽນ S.D (Standard Deviation) (ບຸນຊົມ ສີສະອາດ, 2553:103)

$$SD = \sqrt{\frac{\sum X^2 - (\sum X)^2}{n(n-1)}}$$

$SD$ ແທນໃຫ້ຄ່າຜັນປ່ຽນມາດຕະຖານ.

$X$ ແທນຄະແນນແຕ່ລະໂຕ.

$n$ ແທນຜົນຄະແນນໃນກຸ່ມ.

$\sum$ ແທນຜົນລວມ.

3. ການຫາຄ່າປະສິດທິພາບການຈັດການຮຽນ-ການສອນຕາມເກນ 80/80 ໂດຍໃຊ້ສູດ $E_1/E_2$ ຊຶ່ງມີສູດລະອຽດດັ່ງນີ້

ສູດ $E_1 = \dfrac{\frac{\sum X}{N}}{A} X100$

$E_1$ ແທນ ປະສິດທິພາບຂອງຂະບວນການ.

$\sum X$ ແທນ ຄະແນນລວມຂອງແບບທົດສອບ.

A ແທນ ຄະແນນເຕັມຂອງແບບທົດສອບທຸກອັນລວມກັນ.

n ແທນ ຈຳນວນນັກຮຽນທັງໝົດ.

ສູດ $E_2 = \dfrac{\frac{\sum Y}{N}}{B} x100$

$E_2$ ແທນ ປະສິດທິພາບຂອງຜົນສຳເລັດ.

$\sum Y$ ແທນ ຄະແນນລວມຂອງຜົນສຳເລັດຫຼັງຮຽນ.

B ແທນ ຄະແນນເຕັມຂອງແບບທົດສອບລວມຫຼັງຮຽນ.

n ແທນ ຈຳນວນນັກຮຽນທັງໝົດ.

4. ຫາຄ່າດັດສະນີປະສິດທິຜົນຄວາມກ້າວໜ້າທາງການຮຽນຂອງນັກສຶກສາ (Effectiveeness Index: E.I) ມີສູດດັ່ງນີ້:

$$\text{ຄ່າດັດສະນີປະສິດທິຜົນ} = \frac{\text{ຜົນລວມຂອງຄະແນນທົດສອບຫຼັງຮຽນ} - \text{ຜົນລວມຂອງຄະແນນທົດສອບກ່ອນຮຽນ}}{\text{ຄະແນນເຕັມຫຼັງຮຽນ} - \text{ຄະແນນສະເລ່ຍກ່ອນຮຽນ}}$$

ຫຼື $E.I = \dfrac{P_2 - P_1}{Total - P_1}$

E.I. ແມ່ນດັດສະນີປະສິດທິຜົນ.

$P_1$ ແມ່ນຜົນລວມຂອງຄະແນນກ່ອນຮຽນໝົດທຸກຄົນ.

$P_2$ ແມ່ນຜົນລວມຂອງຄະແນນທຸກຄົນໝົດຫຼັງຮຽນ.

$Total$ ແມ່ນຜົນຄູນຂອງຈຳນວນນັກຮຽນກັບຄະແນນເຕັມ.

# ບົດທີ 4

# ຜົນຂອງການວິເຄາະຂໍ້ມູນ

ການສຶກສາຄົ້ນຄ້ວາໃນຄັ້ງນີ້ຜູ້ຄົ້ນຄ້ວາມີຈຸດປະສົງເພື່ອສຶກສາການສອນວິຊາການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ສຳຫລັບນັກສຶກສາປີ 3, ລະບົບ 12+4 ສາຍຄູພາສາອັງກິດທີ່ວິທະຍາໄລຄູຫຼວງພະບາງ, ສົກຮຽນ 2013–14 ດັ່ງນັ້ນຜູ້ຄົ້ນຄ້ວາຈິ່ງໄດ້ນຳສະເໜີຜົນການຄົ້ນຄວ້າດັ່ງນີ້:

1. ຜົນວິເຄາະຫາປະສິດທິພາບຂອງບົດສອນດ້ວຍການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw)

2. ຜົນວິເຄາະປະສິດທິຜົນການຮຽນຂອງນັກສຶກສາດ້ວຍການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw)

3. ຜົນວິເຄາະຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw)

## 1. ຜົນການວິເຄາະປະສິດທິພາບບົດສອນ E1

ປະສິດທິພາບຂອງບົດສອນວິຊາການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ ສຳຫລັບ ນັກສຶກສາປີ 3 ລະບົບ 12+4 ສາຍຄູພາສາອັງກິດທີ່ວິທະຍາໄລຄູຫຼວງພະບາງ, ມີປະສິດທິພາບຕາມເກນ 80/80.

**ຕາຕະລາງທີ 1:** ສະແດງຄ່າຄ່າປະສິດທິພາບຂອງບົດສອນ ($E_1$)

| ລດ ຄົນ | ຄະແນນບຸກຄົນຈາກກິດຈະກຳແຕ່ລະຄັ້ງໃນລະຫວ່າງຮຽນທັງ 5 ແຜນ | | | | | | $\overline{X}$ | S.D. | ສ່ວນຮ້ອຍ |
|---|---|---|---|---|---|---|---|---|---|
| | ແຜນ 1(5) | ແຜນ 2(5) | ແຜນ 3(5) | ແຜນ 4(5) | ແຜນ 5(5) | ລວມ ຄະແນນ 25 | | | |
| 1 | 3 | 4 | 3 | 4 | 4 | 18 | 3.60 | 0.55 | 72 |
| 2 | 4 | 4 | 4 | 3 | 5 | 20 | 4.00 | 0.71 | 80 |
| 3 | 5 | 4 | 3 | 5 | 3 | 20 | 4.00 | 1.00 | 80 |
| 4 | 3 | 4 | 4 | 3 | 5 | 19 | 3.80 | 0.84 | 76 |
| 5 | 3 | 5 | 5 | 3 | 5 | 21 | 4.20 | 1.10 | 84 |
| 6 | 5 | 4 | 4 | 5 | 3 | 21 | 4.20 | 0.84 | 84 |
| 7 | 5 | 3 | 3 | 4 | 4 | 19 | 3.80 | 0.84 | 76 |
| 8 | 3 | 4 | 5 | 4 | 3 | 19 | 3.80 | 0.84 | 76 |
| 9 | 4 | 2 | 4 | 4 | 5 | 19 | 3.80 | 1.10 | 76 |

ຕາຕະລາງທີ 1: (ຕໍ່)

| ຄະແນນບຸກຄົນຈາກກິດຈະກຳແຕ່ລະຄັ້ງໃນລະຫວ່າງຮຽນທັງ 5 ແຜນ | | | | | | | | | |
|---|---|---|---|---|---|---|---|---|---|
| ລດ ຄົນ | ແຜນ 1(5) | ແຜນ 2(5) | ແຜນ 3(5) | ແຜນ 4(5) | ແຜນ 5(5) | ລວມ 25 | $\overline{X}$ | S.D. | ສ່ວນ ຮ້ອຍ |
| 10 | 4 | 5 | 3 | 3 | 4 | 19 | 3.80 | 0.84 | 76 |
| 11 | 3 | 5 | 2 | 3 | 4 | 17 | 3.40 | 1.14 | 68 |
| 12 | 5 | 4 | 4 | 3 | 2 | 18 | 3.60 | 1.14 | 72 |
| 13 | 3 | 4 | 4 | 3 | 4 | 18 | 3.60 | 0.55 | 72 |
| 14 | 5 | 4 | 5 | 4 | 5 | 23 | 4.60 | 0.55 | 92 |
| 15 | 3 | 2 | 4 | 4 | 3 | 16 | 3.20 | 0.84 | 64 |
| 16 | 5 | 4 | 5 | 3 | 4 | 21 | 4.20 | 0.84 | 84 |
| 17 | 3 | 4 | 4 | 5 | 5 | 21 | 4.20 | 0.84 | 84 |
| 18 | 4 | 5 | 4 | 5 | 5 | 23 | 4.60 | 0.55 | 92 |
| 19 | 5 | 4 | 4 | 5 | 5 | 23 | 4.60 | 0.55 | 92 |
| 20 | 3 | 5 | 5 | 4 | 4 | 21 | 4.20 | 0.84 | 84 |
| 21 | 5 | 4 | 5 | 4 | 2 | 20 | 4.00 | 1.22 | 80 |
| 22 | 5 | 4 | 5 | 5 | 4 | 23 | 4.60 | 0.55 | 92 |
| 23 | 4 | 3 | 5 | 4 | 3 | 19 | 3.80 | 0.84 | 76 |
| 24 | 5 | 4 | 3 | 5 | 5 | 22 | 4.40 | 0.89 | 88 |
| 25 | 3 | 5 | 4 | 5 | 4 | 21 | 4.20 | 0.84 | 84 |
| 26 | 4 | 4 | 4 | 4 | 5 | 21 | 4.20 | 0.45 | 84 |
| 27 | 5 | 3 | 4 | 4 | 4 | 20 | 4.00 | 0.71 | 80 |
| 28 | 4 | 5 | 4 | 4 | 5 | 22 | 4.40 | 0.55 | 88 |
| 29 | 3 | 4 | 3 | 5 | 4 | 19 | 3.80 | 0.84 | 76 |
| 30 | 4 | 4 | 5 | 3 | 5 | 21 | 4.20 | 0.84 | 84 |
| **Total** | **120** | **120** | **121** | **120** | **123** | **604** | | | |
| $\overline{X}$ | **4.00** | **4.00** | **4.03** | **4.00** | **4.10** | **20.13** | **4.03** | **0.81** | |
| **S.D.** | **0.87** | **0.79** | **0.81** | **0.79** | **0.92** | **1.81** | **0.36** | **0.21** | |
| **E1** | **80** | **80** | **80.67** | **80** | **82** | | | | |
| **ຜົນຂອງ E1** | | | | | | | | | **80.53** |

ຕາຕະລາງທີ 1 ຈາກການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ມີຜົນຄະແນນຈາກແບບທົດສອບຍ່ອຍທັງ 5 ບົດສອນ ສຳຫລັບນັກສຶກສາປີທີ 3, ລະບົບ 12+4 ສາຍຄູພາສາອັງກິດຈຳນວນ 30 ຄົນທີ່ເຮັດແບບທົດສອບຍ່ອຍມີປະສິດທິພາບຕາມເກນ 80 ຕົວທຳອິດຂອງບົດສອນມີຄ່າ $E_1$= 80.53; $\overline{X}$ = 4.03 ແລະ S.D= 0.36 ເຫັນສູງກ່ວາເກນທີ່ຕັ້ງໄວ້.

## 2. ຜົນການຫາຄ່າປະສິດທິພາບຂອງຜົນສຳເລັດ ($E_2$)

**ຕາຕາລາງທີ 2:** ສະແດງຄະແນນຜົນສຳເລັດທາງການຮຽນ ($E_2$)

| ລດ/ຄົນ | ຜົນລວມຄະແນນຈາກບົດທົດສອບຫຼັງການສອນຄົບທັງ 5 ບົດສອນ | ເປີເຊັນ |
|---|---|---|
| 1 | 19 | 63.33 |
| 2 | 21 | 70.00 |
| 3 | 23 | 76.67 |
| 4 | 20 | 66.67 |
| 5 | 20 | 66.67 |
| 6 | 22 | 73.33 |
| 7 | 21 | 70.00 |
| 8 | 20 | 66.67 |
| 9 | 18 | 60.00 |
| 10 | 21 | 70.00 |
| 11 | 20 | 66.67 |
| 12 | 22 | 73.33 |
| 13 | 21 | 70.00 |
| 14 | 23 | 76.67 |
| 15 | 20 | 66.67 |
| 16 | 17 | 56.67 |
| 17 | 20 | 66.67 |
| 18 | 21 | 70.00 |
| 19 | 24 | 80.00 |
| 20 | 19 | 63.33 |
| 21 | 22 | 73.33 |

**ຕາຕາລາງທີ 2:** (ຕໍ່)

| ລດ/ຄົນ | ຜົນລວມຄະແນນຈາກບົດທົດສອບຫຼັງການສອນຄົບ ທັງ 5 ບົດສອນ | ເປີເຊັນ |
|---|---|---|
| 22 | 23 | 76.67 |
| 23 | 21 | 70.00 |
| 24 | 23 | 76.67 |
| 25 | 23 | 76.67 |
| 26 | 21 | 70.00 |
| 27 | 20 | 66.67 |
| 28 | 22 | 73.33 |
| 29 | 20 | 66.67 |
| 30 | 23 | 76.67 |
| **ລວມ** | | **2,100.00** |
| **ສະເລ່ຍ** | | **84.00** |
| **ຜົນຂອງ E2** | | **84.00** |

ຕາຕະລາງທີ 2: ຈາກການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ສຳຫລັບນັກສຶກສາປີ 3, ລະບົບ 12+4 ສາຍຄູພາສາອັງກິດເຊິ່ງຜົນຄະແນນຂອງການຫາຄ່າປະສິດທິພາບຕາມເກນມາດຖານ $E_2$ ຕົວຫຼັງ, ຄະແນນທີ່ເຮັດແບບທົດສອບຜົນສຳເລັດທາງການຮຽນເຫັນວ່າມີຄ່າສະເລ່ຍຂອງຈຳນວນນັກສຶກສາທີ່ຜ່ານເກນສູງກວ່າເກນ 80 ຕົວຫຼັງຂອງບົດສອນທັງໝົດທີ່ຕັ້ງໄວ້ເຊິ່ງມີຄ່າ $E_2$= 84.00; ຄ່າສະເລ່ຍ $\overline{X}$ =**21.00** ແລະ S.D=**1.64** ເຫັນວ່າສູງກວ່າເກນມາດຖານ $E_2$ (80) ທີ່ກຳນົດໄວ້.

**ຕາຕາລາງທີ 3:** ສະແດງຄ່າປະສິດທິພາບ ແລະ ປະສິດດທິຜົນຂອງ ($E_1/E_2$)

| ຄະແນນ | ຄະແນນເຕັມ | $\overline{X}$ | S.D | $E_1$ / $E_2$ |
|---|---|---|---|---|
| ປະສິດທິພາບຂະບວນການ $E_1$ | 5 | 4.03 | 0.36 | 80.53/84.00 |
| ປະສິດທິພາບຜົນການຮຽນ $E_2$ | 25 | 21.00 | 1.64 | |

ຕາຕະລາງທີ3 ເຫັນວ່າປະສິດທິພາບຂອງບົດສອນເລື່ອງການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ສຳຫລັບນັກສຶກສາປີ 3, ລະບົບ 12+4 ສາຍຄູພາສາອັງກິດຕາມເກນຂອງ $E_1$ / $E_2$ = 80.53/ 84.00 ເຫັນວ່າສູງກວ່າເກນທີ່ຕັ້ງໄວ້.

## 3. ຜົນການວິເຄາະຄ່າດັດສະນີປະສິດທິຜົນ (E.I) ຂອງການຮຽນ

ດັດສະນີປະສິດທິຜົນການຮຽນຂອງນັກສຶກສາຕໍ່ການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່(Jigsaw) ສໍາຫລັບນັກສຶກສາປີ3 ລະບົບ 12+4 ສາຍຄູພາສາອັງກິດ ທີ່ວິທະຍາໄລຄູຫຼວງພະບາງ.

**ຕາຕະລາງທີ 4:** ສະແດງຄ່າດັດສະນີປະສິດທິຜົນ (E.I) ທາງການຮຽນຂອງນັກສຶກສາ

| ລດ/ຄົນ | ສອບກ່ອນຮຽນ | ສອບຫຼັງຮຽນ |
|---|---|---|
| | ຄະແນນເຕັມ 25 | ຄະແນນເຕັມ 25 |
| 1 | 12 | 19 |
| 2 | 14 | 21 |
| 3 | 13 | 23 |
| 4 | 15 | 20 |
| 5 | 16 | 20 |
| 6 | 12 | 22 |
| 7 | 13 | 21 |
| 8 | 16 | 20 |
| 9 | 13 | 18 |
| 10 | 14 | 21 |
| 11 | 15 | 20 |
| 12 | 14 | 22 |
| 13 | 12 | 21 |
| 14 | 14 | 23 |
| 15 | 16 | 20 |
| 16 | 11 | 17 |
| 17 | 15 | 20 |
| 18 | 14 | 21 |
| 19 | 16 | 24 |
| 20 | 12 | 19 |
| 21 | 12 | 22 |
| 22 | 10 | 23 |
| 23 | 9 | 21 |
| 24 | 12 | 23 |

**ຕາຕະລາງທີ 4 :** (ຕໍ່)

| ລດ/ຄົນ | ສອບກ່ອນຮຽນ | ສອບຫຼັງຮຽນ |
|---|---|---|
| | ຄະແນນເຕັມ 25 | ຄະແນນເຕັມ 25 |
| 25 | 12 | 23 |
| 26 | 13 | 21 |
| 27 | 12 | 20 |
| 28 | 12 | 22 |
| 29 | 13 | 20 |
| 30 | 12 | 23 |
| **ລວມ** | **394** | **630** |
| $\overline{X}$ | **13.13** | **21** |
| **EI** | **0.66** | |

**ຕາຕະລາງທີ 5:** ສະແດງຄ່າປະສິດທິຜົນທາງການຮຽນຂອງນັກສຶກສາ

| ຈຳນວນນັກສຶກສາ | ຄະແນນເຕັມຫຼັງຮຽນ | ຜົນລວມຂອງຄະແນນສອບ | | ດັດສະນີປະສິດທິຜົນ E.I |
|---|---|---|---|---|
| | | ຜົນທົດສອບກ່ອນຮຽນ | ຜົນທົດສອບຫຼັງຮຽນ | |
| 30 | 25 | 13.13 | 21 | 0.66 |

ຈາກຕາຕະລາງທີ 5 ເຫັນວ່າຄ່າດັດສະນີປະສິດທິຜົນການຮຽນຂອງນັກສຶກສາດ້ວຍການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ເຊິ່ງມີຄ່າດັດສະນີປະສິດທິຜົນເທົ່າກັບ E.I= 0.66 ຫຼື ຄິດເປັນເປີເຊັນ 66%

## 4. ຜົນວິເຄາະແບບວັດຄວາມເພິ່ງພໍໃຈ

**ຕາຕະລາງທີ 6:** ຜົນການວິເຄາະຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການຈັດການຮຽນ-ການສອນ

| ລ/ດ | **ດ້ານ** | $\overline{X}$ | **S.D** | **ແປຜົນ** |
|---|---|---|---|---|
| 1 | ດ້ານເນື້ອໃນບົດຮຽນ | 4.03 | 0.70 | ພໍໃຈຫຼາຍ |
| 2 | ດ້ານການຮຽນຮ່ວມມື | 4.07 | 0.59 | ພໍໃຈຫຼາຍ |
| 3 | ດ້ານການຈັດການຮຽນ-ການສອນ | 3.95 | 0.62 | ພໍໃຈຫຼາຍ |
| 4 | ດ້ານການອ່ານຈັບໃຈຄວາມ | 3.87 | 0.59 | ພໍໃຈຫຼາຍ |
| 5 | ດ້ານການສອນຂອງຄູ | 4.25 | 0.71 | ພໍໃຈຫຼາຍ |

**ຕາຕະລາງທີ 6**: (ຕໍ່)

| ລ/ດ | ດ້ານ | $\overline{X}$ | S.D | ແປຜົນ |
|---|---|---|---|---|
| 6 | ດ້ານບັນຍາກາດໃນຫ້ອງຮຽນ | 4.11 | 0.75 | ພໍໃຈຫຼາຍ |
| | **ລວມ** | **4.05** | **0.66** | **ພໍໃຈຫຼາຍ** |

ຈາກຕາຕະລາງທີ 6 ພົບວ່ານັກສຶກສາທີ່ຜ່ານການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ໂດຍລວມແລ້ວມີລະດັບຄວາມເພິງພໍໃຈຂອງນັກສຶກສາເຊິ່ງມີຄ່າສະເລ່ຍ $\overline{X}$ =4.05 ແລະ ຄ່າຜັນປ່ຽນມາດຖານ S.D=0.66 ຈັດຢູ່ໃນເກນມີຄວາມເພິງພໍໃຈຫຼາຍ.

**ຕາຕະລາງທີ 7**: ດ້ານເນື້ອໃນບົດຮຽນ

| ຂໍ້ທີ | ດ້ານເນື້ອໃນບົດຮຽນ | $\overline{X}$ | S.D | ລະດັບຄວາມເພິງພໍໃຈ |
|---|---|---|---|---|
| 1 | ເນື້ອໃນບົດເລື່ອງທີ່ອ່ານພໍເຂົ້າໃຈໄດ້ | 3.67 | 0.61 | ພໍໃຈຫຼາຍ |
| 2 | ເນື້ອໃນບົດເລື່ອງເປັນໜ້າສົນໃຈແກ່ຜູ້ອ່ານ | 4.10 | 0.80 | ພໍໃຈຫຼາຍ |
| 3 | ຂໍ້ມູນທີ່ຢູ່ໃນບົດເລື່ອງເປັນບົດຮຽນໃຫ້ແກ່ຜູ້ອ່ານ | 4.27 | 0.64 | ພໍໃຈຫຼາຍ |
| 4 | ເນື້ອໃນບົດເລື່ອງສາມາດນຳໄປໃຊ້ໃນຊີວິດປະຈັນໄດ້ | 4.10 | 0.76 | ພໍໃຈຫຼາຍ |
| | **ສະເລ່ຍລວມ** | **4.03** | **0.70** | ພໍໃຈຫຼາຍ |

ຕາຕະລາງທີ 7 ພົບວ່ານັກສຶກສາທີ່ມີຄວາມເພິງພໍໃຈຫຼາຍຄືຂໍ້ທີ່ 3. ຂໍ້ມູນທີ່ຢູ່ໃນບົດເລື່ອງເປັນບົດຮຽນໃຫ້ແກ່ຜູ້ອ່ານເຊິ່ງມີຄ່າ $\overline{X}$ =4.27 ແລະ S.D=0.64 ໃນນັ້ນສະເລ່ຍລວມທັງໝົດດ້ານເນື້ອໃນບົດຮຽນເຊິ່ງມີຄ່າ $\overline{X}$ =4.03 ແລະ S.D=0.70 ເຫັນວ່າມີຄວາມເພິງພໍໃຈຫຼາຍ.

**ຕາຕະລາງທີ 8**: ດ້ານການຮຽນຮູ້ແບບຮ່ວມມື

| | **ດ້ານການຮຽນຮູ້ແບບຮ່ວມມື** | $\overline{X}$ | S.D | **ແປຜົນ** |
|---|---|---|---|---|
| 5 | ຊ່ວຍໃຫ້ຜູ້ຮຽນມີຄວາມສົນໃຈຫຼາຍຂຶ້ນ | 3.80 | 0.48 | ພໍໃຈຫຼາຍ |
| 6 | ກະຕຸ້ນໃຫ້ຜູ້ຮຽນມີຄວາມສາມາດສະແດງຄວາມຄິດຄວາມເຫັນ | 4.13 | 0.57 | ພໍໃຈຫຼາຍ |
| 7 | ການຮຽນແບບເປັນກຸ່ມແມ່ນສົ່ງເສີມໃຫ້ຜູ້ຮຽນສົນທະນາກັນ | 4.33 | 0.71 | ພໍໃຈຫຼາຍ |
| 8 | ການຈັດກຸ່ມການຮຽນຮູ້ເໝາະສົມກັບຜູ້ຮຽນ | 3.97 | 0.61 | ພໍໃຈຫຼາຍ |
| 9 | ນັກສຶກສາມີການແລກປ່ຽນຄຳຄິດຄຳເຫັນກັນ | 4.13 | 0.57 | ພໍໃຈຫຼາຍ |
| | **ສະເລ່ຍລວມ** | **4.07** | **0.59** | ພໍໃຈຫຼາຍ |

ຕາຕະລາງທີ 8 ພົບວ່າຂໍ້ທີ່ນັກສຶກສາມີຄວາມເພິ່ງພໍໃຈຫຼາຍຄືຂໍ້ທີ 7 ການຮຽນແບບເປັນກຸ່ມແມ່ນສົ່ງເສີມໃຫ້ຜູ້ຮຽນສົນທະນາກັນເຊິ່ງມີຄ່າ $\overline{X}$ = 4.33 ແລະ S.D= 0.71 ໃນນັ້ນຜົນສະເລ່ຍລວມທັງໝົດດ້ານການຮຽນຮູ້ແບບຮ່ວມມືເຊິ່ງມີຄ່າ $\overline{X}$ = 4.07 ແລະ S.D= 0.59

**ຕາຕະລາງທີ 9:** ດ້ານການຈັດການຮຽນ-ການສອນ

| **ດ້ານການຈັດການຮຽນ-ການສອນ** | | $\overline{X}$ | **S.D** | **ແປຜົນ** |
|---|---|---|---|---|
| 10 | ກິດຈະກຳເໝາະສົມກັບຄວາມຮູ້ຂອງນັກສຶກສາ | 3.77 | 0.57 | ພໍໃຈຫຼາຍ |
| 11 | ການມີສ່ວນຮ່ວມຂອງນັກສຶກສາຕໍ່ກິດຈະກຳ | 4.10 | 0.71 | ພໍໃຈຫຼາຍ |
| 12 | ເປີດໂອກາດໃຫ້ຜູ້ຮຽນໄດ້ສະແດງຄວາມຄິດຄວາມເຫັນ | 4.00 | 0.59 | ພໍໃຈຫຼາຍ |
| 13 | ເນື້ອໃນກິດຈະກຳເຂົ້າໃຈງ່າຍ ແລະ ຊັດເຈນ | 3.97 | 0.67 | ພໍໃຈຫຼາຍ |
| 14 | ກິດຈະກຳມີຫຼາກຫຼາຍຮູບແບບ | 3.90 | 0.55 | ພໍໃຈຫຼາຍ |
| **ສະເລ່ຍລວມ** | | **3.95** | **0.62** | ພໍໃຈຫຼາຍ |

ຕາຕະລາງທີ 9 ພົບວ່າຂໍ້ທີ່ນັກສຶກສາທີ່ມີຄວາມເພິ່ງພໍໃຈຫຼາຍຄືຂໍ້ທີ່ 11. ການມີສ່ວນຮ່ວມຂອງນັກສຶກສາຕໍ່ກິດຈະກຳເຊິ່ງມີຄ່າ $\overline{X}$ = 4.10 ແລະ S.D= 0.71 ໃນນັ້ນຜົນສະເລ່ຍລວມທັງໝົດດ້ານການຈັດການຮຽນ-ການສອນເຊິ່ງມີຄ່າ $\overline{X}$ =3.95 ແລະ S.D=0.62

**ຕາຕະລາງທີ 10:** ດ້ານການອ່ານຈັບໃຈຄວາມ

| **ດ້ານການອ່ານຈັບໃຈຄວາມ** | | $\overline{X}$ | **S.D** | **ແປຜົນ** |
|---|---|---|---|---|
| 15 | ອ່ານເຂົ້າໃຈຄວາມໝາຍຂອງຄຳສັບ | 3.90 | 0.66 | ພໍໃຈຫຼາຍ |
| 16 | ການເຂົ້າໃຈຄວາມໝາຍຫຼັກຂອງເລື່ອງ | 3.80 | 0.61 | ພໍໃຈຫຼາຍ |
| 17 | ເຂົ້າໃຈໂຄ້ງສ້າງຫຼັກໄວຍາກອນ | 3.80 | 0.61 | ພໍໃຈຫຼາຍ |
| 18 | ເຂົ້າໃຈຕອບຄຳຖາມໃນບົດເລື່ອງ | 3.97 | 0.49 | ພໍໃຈຫຼາຍ |
| **ສະເລ່ຍລວມ** | | **3.87** | **0.59** | ພໍໃຈຫຼາຍ |

ຕາຕະລາງທີ 10 ພົບວ່າຂໍ້ທີ່ນັກສຶກສາມີຄວາມເພິ່ງພໍໃຈຫຼາຍຄືທີ່ 18. ເຂົ້າໃຈຕອບຄຳຖາມໃນບົດເລື່ອງ ເຊິ່ງມີຄ່າ $\overline{X}$ = 3.97 ແລະ S.D= 0.49, ໃນນັ້ນ ຜົນສະເລ່ຍລວມທັງໝົດດ້ານການອ່ານຈັບໃຈຄວາມເຊິ່ງມີຄ່າ $\overline{X}$ = 3.87 ແລະ S.D= 0.59

**ຕາຕະລາງທີ 11:** ດ້ານການສອນຂອງຄູ

| | ດ້ານການສອນຂອງຄູ | $\overline{X}$ | S.D | ແປຜົນ |
|---|---|---|---|---|
| 19 | ການໃຫ້ຄຳແນະນຳຂອງຄູຈະແຈ້ງ | 4.47 | 0.73 | ພໍໃຈຫຼາຍ |
| 20 | ຄວາມເປັນກັນເອງຂອງຜູ້ສອນຕໍ່ຜູ້ຮຽນ | 4.47 | 0.68 | ພໍໃຈຫຼາຍ |
| 21 | ຄູມີຄວາມຊ່ວຍເຫຼືອຜູ້ຮຽນ | 4.37 | 0.67 | ພໍໃຈຫຼາຍ |
| 22 | ການໃຫ້ລາງວັນ ແລະ ຊົມເຊີຍຜູ້ເຮັດໄດ້ | 3.70 | 0.70 | ພໍໃຈຫຼາຍ |
| 23 | ການອະທິບາຍບົດຮຽນຄືນໃຫ້ແກ່ຜູ້ບໍ່ເຂົ້າໃຈ | 4.13 | 0.82 | ພໍໃຈຫຼາຍ |
| 24 | ການເຮັດກິດຈະກຳໄປຕາມຂັ້ນຕອນຢ່າງເປັນລະບົບ | 4.37 | 0.67 | ພໍໃຈຫຼາຍ |
| | **ສະເລ່ຍລວມ** | **4.25** | **0.71** | ພໍໃຈຫຼາຍ |

ຕາຕະລາງທີ 11: ພົບວ່າຂໍ້ທີ່ນັກສຶກສາມີຄວາມເພິງພໍໃຈຫຼາຍຄືຂໍ້ທີ່19–20 ການໃຫ້ຄຳແນະນຳຂອງຄູຈະແຈ້ງ, ຄວາມເປັນກັນເອງຂອງຜູ້ສອນຕໍ່ຜູ້ຮຽນເຊິ່ງມີຄ່າ $\overline{X}$ =4.47 ແລະ S.D=0.73; 0.68, ໃນນັ້ນຜົນສະເລ່ຍລວມທັງໝົດດ້ານການສອນຂອງຄູເຊິ່ງມີຄ່າ $\overline{X}$ =4.25 ແລະ S.D= 0.71.

**ຕາຕະລາງທີ 12:** ບັນຍາກາດໃນຫ້ອງ

| | ດ້ານບັນຍາກາດໃນຫ້ອງ | $\overline{X}$ | S.D | ແປຜົນ |
|---|---|---|---|---|
| 25 | ບັນຍາກາດໃນຫ້ອງຮຽນມີຄວາມຜ່ອນຟື້ນ | 4.10 | 0.84 | ພໍໃຈຫຼາຍ |
| 26 | ນັກສຶກສາມີຄວາມຕັ້ງໃຈຮຽນ | 3.87 | 0.73 | ພໍໃຈຫຼາຍ |
| 27 | ນັກສຶກສາໄດ້ສະແດງຄຳຄິດຄຳເຫັນຢ່າງເປັນອິດສະຫຼະ | 4.37 | 0.67 | ພໍໃຈຫຼາຍ |
| | **ສະເລ່ຍລວມ** | **4.11** | **0.75** | **ພໍໃຈຫຼາຍ** |

ຕາຕະລາງທີ 12 ພົບວ່າຂໍ້ທີ່ນັກສຶກສາມີຄວາມເພິງພໍໃຈຫຼາຍຄືຂໍ້ທີ່ 25 ບັນຍາກາດໃນຫ້ອງຮຽນມີຄວາມຜ່ອນຟື້ນເຊິ່ງມີຄ່າ $\overline{X}$ =4.10 ແລະ S.D=0.84 ໃນ ນັ້ນຜົນສະເລ່ຍລວມທັງໝົດດ້ານບັນຍາກາດໃນຫ້ອງຮຽນເຊິ່ງມີຄ່າ $\overline{X}$ =4.11 ແລະ S.D= 0.75.

# ບົດທີ 5

# ສະຫຼຸບຜົນ ອະພິປາຍຜົນ ແລະ ຂໍ້ສະເໜີແນະ

ການສຶກສາຄົ້ນຄວ້າໃນຄັ້ງນີ້ແມ່ນເພື່ອພັດທະນາການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ສຳຫລັບນັກສຶກສາປີ.3, ລະບົບ 12+4 ສາຍຄູພາສາອັງກິດ ທີ່ວິທະຍາໄລຄູຫຼວງພະບາງມີດັ່ງນີ້:

1. ຈຸດປະສົງຂອງການຄົ້ນຄ້ວາ.
2. ສະຫຼຸບຜົນ.
3. ອະພິປາຍຜົນ.
4. ຂໍ້ສະເໜີແນະ.

## 1. ຈຸດປະສົງຂອງການຄົ້ນຄວ້າ

1. ເພື່ອສຶກສາປະສິດທິພາບບົດສອນ ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່.

2. ເພື່ອສຶກສາປະສິດທິຜົນຂອງການຮຽນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່.

3. ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ຕາມເກນ 80/80.

## 2. ສະຫຼຸບຜົນການສຶກສາຄົ້ນຄ້ວາ

ການສຶກສາຄົ້ນຄ້ວາໃນຄັ້ງນີ້ເປັນການພັດທະນາການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ສຳລັບນັກສຶກສາປີ 3, ລະບົບ 12+4 ສາຍຄູພາສາອັງກິດ ທີ່ວິທະຍາໄລຄູຫຼວງພະບາງ ສະຫຼຸບໄດ້ດັ່ງນີ້:

1). ປະສິດທິພາບບົດສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ສຳຫລັບນັກສຶກສາ ປີ 3, ລະບົບ 12+4 ສາຍຄູພາສາອັງກິດທີວິທະຍາໄລຄູຫຼວງພະບາງມີປະສິດທິພາບເທົ່າກັບ 80.53/84.00.

2). ດັດສະນີປະສິດທິຜົນຂອງການຮຽນດ້ວຍການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ສຳຫລັບນັກສຶກສາປີ 3 ລະບົບ 12+4 ສາຍຄູພາສາອັງກິດທີວິທະຍາໄລຄູຫຼວງພະບາງ ມີຄ່າເທົ່າກັບ 0.66 ແລະ ຄິດເປັນເປີເຊັນເທົ່າກັບ 66%.

3). ຜົນການວັດຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ ສຳຫລັບນັກສຶກສາປີ 3, ລະບົບ 12+4 ສາຍຄູ

ພາສາອັງກິດໂດຍລວມແລ້ວນັກສຶກສາມີຄວາມເພິງພໍໃຈຕໍ່ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດແມ່ນຢູ່ໃນລະດັບຄວາມເພິງພໍໃຈດີຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ 4.05 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.66.

ສະຫຼຸບໄດ້ວ່າ ການພັດທະນາການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ສຳຫລັບນັກສຶກສາປີ3, ລະບົບ 12+4 ສາຍຄູພາສາອັງກິດທີ່ວິທະຍາໄລຄູຫຼວງພະບາງມີປະສິດທິພາບຕາມເກນມາດຖານ $E_1/E_2$ =80.53/84.00 ເຫັນວ່າສູງກ່ວາເກນທີ່ຕັ້ງໄວ້.

## 3. ອະພິປາຍຜົນ

ການສຶກສາຄົ້ນຄ້ວາເລື່ອງ: ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ສຳຫລັບນັກສຶກສາປີ 3, ລະບົບ 12+4 ສາຍຄູພາສາອັງກິດທີ່ວິທະຍາໄລຄູຫຼວງພະບາງ ທີ່ຜູ້ສຶກສາໄດ້ສ້າງຂຶ້ນມີປະສິດທິພາບ E1/E2=80.53/84.00 ສູງກວ່າເກນມາດຖານທີ່ຕັ້ງໄວ້ເຊິ່ງເນື່ອງມາຈາກເຫດຜົນດັ່ງຕໍ່ໄປນີ້:

ການວິເຄາະຫາປະສິດທິພາບ $E_1$ ຈາກແບບທົດສອບຍ່ອຍທັງ 5 ບົດສອນເລື່ອງ: ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ສຳລັບນັກສຶກສາສາຍຄູພາສາອັງກິດຊັ້ນປີທີ 3, ຈຳນວນ 30 ຄົນ, ເຮັດແບບທົດສອບຍ່ອຍມີປະສິດທິພາບຕາມເກນ 80 ຕົວທຳອິດຂອງບົດສອນ 5 ບົດມີຄ່າ $E_1$=80.53; $\overline{X}$ =4.03 ແລະ S.D=0.36 ພົບວ່າການຮຽນຂອງນັກສຶກສາໄດ້ສູງກ່ວາເກນທີ່ຕັ້ງໄວ້ $E_1$=80/80 ເພາະວ່ານັກສຶກສາມີຄວາມເຂົ້າໃຈ ແລະ ມີຄວາມຕັ້ງໃຈຕໍ່ກັບການຈັດການຮຽນ-ການສອນທີ່ຜູ້ຄົ້ນຄ້ວາສ້າງຂື້ນ ເຊິ່ງສອດຄ່ອງກັບຜົນການຄົ້ນຄ້ວາຂອງ ປະລິນຍາ ປັ້ນສຸວັນ (2553) ເຊິ່ງໄດ້ເຮັດການຄົ້ນຄ້ວາໃນຫົວຂໍ້ ການປຽບທຽບຜົນການຮຽນວິຊາວັນນະຄະດີຂອງນັກສຶກສາປີທີ່ 2 ທີ່ຈັດການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ່2 (jigsawII) ກັບປົກະຕິ ເຊິ່ງຜົນການວິໄຈ ພົບວ່າ ຜົນສະຖິຕິທາງການຮຽນວັນນະຄະດີໄທຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ່2 ທີ່ຈັດການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ່ (Jigsaw) ມີຄ່າສະເລ່ຍເທົ່າກັບ 30.30, ຄ່າຜັນປ່ຽນມາດຕະຖານເທົ່າກັບ 3.30 ສູງກ່ວາຜົນສຳເລັດການຮຽນວັນນະຄະດີໄທຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ່2 ທີ່ຈັດການຮຽນຮູ້ແບບປົກະຕິທີ່ມີຄ່າສະເລ່ຍເທົ່າກັບ 26.55, ຄ່າຜັນປ່ຽນມາດຕະຖານເທົ່າກັບ 3.25 ໂດຍຄະແນນແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິມີລະດັບ .05, ຜົນສຳເລັດການຮຽນວັນນະຄະດີໄທຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ່2 ທີ່ຈັດການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ່ (Jigsaw 2) ຫຼັງຮຽນມີຄ່າສະເລ່ຍເທົ່າກັບ 30.30, ຄ່າຜັນປ່ຽນມາດຕະຖານ 3.30 ສູງກ່ວາກ່ອນຮຽນເຊິ່ງມີຄ່າສະເລ່ຍເທົ່າກັບ 22.49, ຄ່າຜັນປ່ຽນມາດຕະຖານເທົ່າກັບ 3.62 ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະທຖິຕິລະດັບ.05, ຄວາມຄິດເຫັນຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ່ 2 ທີ່ມີຕໍ່ການຈັດການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ່ (Jigsaw)2 ໂດຍພາບ

ລວມຢູ່ໃນລະດັບເຫັນດີຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ 4.39, ຄ່າຜັນປ່ຽນມາດຖານເທົ່າກັບ 0.46 ແລະ ນັກຮຽນມີຄວາມຄິດເຫັນໃນລະດັບດີຫຼາຍຕໍ່ກິດຈະກຳການຮຽນຮູ້ເຊິ່ງມີຄ່າສະເລ່ຍເທົ່າກັບ 4.42, ຄ່າຜັນປ່ຽນມາດຖານເທົ່າກັບ 0.49 ຜົນປະໂຫຍດທີ່ໄດ້ຮັບຈາກການຮຽນເຊິ່ງມີຄ່າສະເລ່ຍເທົ່າກັບ 4.39, ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.51 ແລະ ບັນຍາກາດໃນການຮຽນມີຄ່າສະເລ່ຍເທົ່າກັບ 4.34, ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.60.

ການວິເຄາະຫາປະສິດທິຜົນ $E_2$ ການຮຽນຂອງນັກສຶກສາ ຕໍ່ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ ສຳຫລັບນັກສຶກສາປີ 3, ລະບົບ 12+4 ສາຍຄູພາສາອັງກິດ, ເມື່ອນຳຄະແນນທີ່ໄດ້ຈາກການເຮັດແບບທົດສອບຜົນສຳເລັດທາງການຮຽນຂອງນັກຮຽນພົບວ່າມີຄ່າສະເລ່ຍ $\overline{X}$=21.00, S.D=1.64 ແລະ $E_2$= 84.00 ເຊິ່ງສູງກວ່າເກນມາດຖານ $E_2$ (80) ທີ່ກຳນົດໄວ້ເຊິ່ງສອດຄ່ອງກັບຜົນວິໄຈຂອງ ປັດທະມາວະດີ ຄະໜາດີ (2552) ໄດ້ຄົ້ນຄ້ວາເລື່ອງການປຽບທຽບຄວາມສາມາດໃນການອ່ານຈັບໃຈຄວາມພາສາອັງກິດຂອງນັກຮຍນຊັ້ນມັດທະຍົມສຶກສາ ປີທີ 1 ລະຫວ່າງການຈັດກິດຈະກຳດ້ວຍກຸ່ມແບບ Jigsaw ແລະ ກຸ່ມແບບ TAI, ເຊິ່ງຜົນການຄົ້ນຄ້ວາພົບວ່າແຜນການຈັດກິດຈະກຳການອ່ານຈັບໃຈຄວາມພາສາອັງກິດຂອງນັກຮຽນດ້ວຍການຈັດກິດຈະກຳກຸ່ມແບບ Jigsaw ແລະ ກຸ່ມແບບ TAI ມີປະສິດທິພາບເທົ່າກັບ 88.15/79.15 ແລະ 82.94/81.22 ຕາມລຳດັບ ສະແດງວ່າແຜນການອ່ານຈັບໃຈຄວາມແບບກຸ່ມJigsaw ແລະ TAI ທີ່ຜູ້ຄົ້ນຄ້ວາພັດທະນາຂຶ້ນມາມີປະສິດທິພາບສູງກວ່າເກນ 75/75 ທີ່ຕັ້ງໄວ້.

ການວິເຄະຫາຄ່າດັດສະນີປະສິດທິຜົນ (E.I) ໂດຍການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍການສອນແບບຈິກຊໍ່ (Jigsaw) ເຊິ່ງມີດັດສະນີປະສິດທິຜົນເທົ່າກັບ E.I= 0.66 ຫຼື ຄິດເປັນເປີເຊັນ 66% ສະແດງວ່າຄວາມກ້າວໜ້າທາງການຮຽນຂອງນັກສຶກສາແມ່ນສູງກ່ວາເກນທີ່ກຳນົດໄວ້ເຊິ່ງສອດຄ່ອງກັບຜົນວິໄຈຂອງ ວັດຊະຣາ ເວດບັນພົດ ໄດ້ເຮັດການວິໄຈເລື່ອງຜົນການຈັດກິດຈະກຳການຮຽນຮູ້ເລື່ອງການອ່ານຈັບໃຈຄວາມນິທານພື້ນບ້ານໂດຍໃຊ້ການຮຽນຮູ້ແບບຮ່ວມມືດ້ວຍເທັກນິກ Jigsaw ຂອງນັກຮຽນຊັ້ນປະຖົມສຶກສາປີ 2 ຜົນການຄົ້ນຄ້ວາພົບວ່າ ແຜນການຈັດກິດຈະກຳການຮຽນຮູ້ເລື່ອງການອ່ານຈັບໃຈຄວາມນິທານພື້ນບ້ານໂດຍໃຊ້ການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ່ທີ່ສ້າງຂຶ້ນມີປະສິດທິພາບເທົ່າກັບ 86.91/85.05 ແລະ ມີດັດສະນີປະສິດທິຜົນເທົ່າກັບ 0.59, ສະແດງວ່ານັກຮຽນມີຄວາມກ້າວໜ້າທາງການຮຽນຮ້ອຍລະ 59.

ການວິເຄາະຜົນຈາກການວັດຄວາມເພິ່ງພໍໃຈຂອງນັກສຶກສາ ຕໍ່ການຈັດການຮຽນ-ການສອນອ່ານຈັບໃຈຄວາມບົດເລື່ອງພາສາອັງກິດດ້ວຍວິທີສອນແບບຈິກຊໍ່ (Jigsaw) ພົບວ່າລະດັບຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການຈັດການຮຽນ-ການສອນເຊິ່ງມີຄ່າສະເລ່ຍ $\overline{X}$=4.05 ແລະຄ່າຜັນປ່ຽນມາດຖານ S.D=0.66 ຈັດຢູ່ໃນມີຄວາມເພິ່ງພໍໃຈຫຼາຍ.

ໃນນັ້ນເມື່ອເຮົາແຍກໄປຕາມແຕ່ລະດ້ານເຊິ່ງມີລາຍລະອຽດດັ່ງນີ້:ດ້ານທີ່ນັກຮຽນມີຄວາມເພິ່ງພໍໃຈໜ້ອຍກ່ວາໝູ່ແມ່ນດ້ານການອ່ານຈັບໃຈຄວາມເຊິ່ງມີຄ່າສະເລ່ຍ $\overline{X}$ =3.87, S.D=0.59 ຍ້ອນຍັງມີນັກສຶກສາຈຳນວນໜຶ່ງບໍ່ສາມາດອ່ານ ແລະ ແປຄຳສັບບາງຄຳບໍ່ທັນໄດ້.

ດ້ານທີ່ນັກສຶກສາມີຄວາມເພິ່ງພໍໃຈຕໍ່ການຮຽນ-ການສອນຫຼາຍທີ່ສຸດແມ່ນດ້ານການໃຫ້ຄຳແນະນຳຂອງຄູ ແລະ ຄວາມເປັນກັນເອງຂອງຜູ້ສອນຕໍ່ຜູ້ຮຽນ, ຍ້ອນວ່າຄູໄດ້ໃຫ້ຄຳແນະນຳທີ່ຈະແຈ້ງ, ນັກຮຽນສາມາດເຂົ້າໃຈ ແລະ ແກ້ກິດຈະກຳທີ່ຄູໃຫ້ໄດ້ດີ, ຄູ ແລະ ນັກຮຽນມີຄວາມສະໜິດສະໜົມ ແລະ ເປັນກັນເອງເຮັດໃຫ້ນັກຮຽນບໍ່ມີຄວາມກັງວົນໃນການປະຕິບັດກິດຈະກຳແຕ່ລະຄັ້ງເຊິ່ງສະແດງອອກມີຄ່າສະເລ່ຍທັງສອງດ້ານ $\overline{X}$ =4.47 ແລະ S.D=0.73 ຈັດຢູ່ໃນເກນມີຄວາມເພິ່ງພໍໃຈຫຼາຍເຊິ່ງສອດຄ່ອງກັບຜົນວິໄຈຂອງສຸວະດົນ ທອງແມ້ນທີ່ໄດ້ເຮັດການຄົ້ນຄ້ວາກ່ຽວກັບ ການພັດທະນາການອ່ານຈັບໃຈຄວາມດ້ວຍເທັກນິກຈິກຊໍ່ (Jigsaw) ກຸ່ມສະລະການຮຽນຮູ້ພາສາໄທ ຊັ້ນມັດທະຍົມປີທີ່1ເຊິ່ງຜົນການສຶກສາຄົ້ນຄ້ວາພົບວ່າ ຜົນການພັດທະນາທັກສະການອ່ານຈັບໃຈຄວາມຂອງນັກສຶກສາດ້ວຍເທັກນິກຈິກຊໍ່ (Jigsaw) ໄດ້ພັດທະນາການເພີ່ມຂຶ້ນຄິດເປັນສ່ວນຮ້ອຍລະ 33.88 ແຜນການຈັດການຮຽນຮູ້ເລື່ອງການອ່ານຈັບໃຈຄວາມດ້ວຍເທັກນິກຈິກຊໍ່ (Jigsaw) ກຸ່ມສະການຮຽນພາສາໄທຊັ້ນມັດທະຍົມສຶກສາປີທີ່1 ທີ່ສ້າງຂຶ້ນມີປະສິດທິພາບເທົ່າກັບ 83.36/83.44 ແລະ ມີຄ່າດັດສະນີປະສິດທິຜົນເທົ່າກັບ 0.6716 ນັ້ນຄືຜູ້ຮຽນມີຄວາມຮູ້ເພີ່ມຂຶ້ນຮ້ອຍລະ 67.16 ຫຼັງຈາກຮຽນຕາມແຜນການຈັດການຮຽນຮູ້ດ້ວຍເທັກນິກຈິກຊໍ່ (Jigsaw) ແລະ ນັກສຶກສາມີຄວາມເພິ່ງພໍໃຈຕໍ່ກັບການຮຽນຕາມແຜນການຈັດການຮຽນຮູ້ດ້ວຍເທັກນິກຈິກຊໍ່ (Jigsaw) ຢູ່ໃນລະດັບຫຼາຍ.

## 4. ຂໍ້ສະເໜີແນະ

### 4.1. ຂໍ້ສະເໜີແນະສຳລັບການນຳຜົນການສຶກສາໄປໃຊ້

1. ກ່ອນຈະນຳເອົາແຜນການຮຽນ-ການສອນດ້ວຍວິທີການສອນແບບຈິກຊໍ່ Jigsaw ໄປນຳໃຊ້ຄູຜູ້ສອນຄວນສຶກສາເພື່ອທຳຄວາມເຂົ້າໃຈເນື້ອໃນບົດເລື່ອງທີ່ຈະສອນໃຫ້ລະອຽດກ່ອນຈັດການຮຽນ-ການສອນ, ຫຼັກສູດຂອງໂຮງຮຽນວາງອອກ.

2. ຄູຜູ້ສອນຄວນນຳເອົາແຜນການສອນກັບຜູ້ທີ່ສ້າງຂຶ້ນໄປປັບໃຊ້ໃຫ້ສອດຄ່ອງເໝາະສົມກັບສະພາບຕົວຈິງຂອງທ້ອງຖິ່ນ.

3. ການນຳເອົາແຜນການຈັດການຮຽນ-ການສອນແບບກຸ່ມໂດຍໃຊ້ເທັກນິກຈິກຊໍ່ (Jigsaw) ໄປໃຊ້ໃນການຮຽນ-ການສອນນັ້ນຄວນໃຫ້ນັກສຶກສາໄດ້ມີໂອກາດສົນທະນາກັນຢ່າງຕໍ່ເນື່ອງເພື່ອໃຫ້ເກີດປະສິດທິພາບການຮຽນສູງຂຶ້ນ.

4. ກ່ອນໃຫ້ນັກສຶກສາດຳເນີນເຮັດກິດຈະກຳກຸ່ມທຸກຄັ້ງຄູຕ້ອງອະທິບາຍ ຫຼື ແນະນຳວິທີປະຕິບັດກິດຈະກຳໃຫ້ຊັດເຈນເພື່ອໃຫ້ນັກຮຽນເຂົ້າໃຈວິທີເຮັດກິດຈະກຳການຮຽນ-ການສອນບັນລຸຕາມເປົ້າໝາຍ ແລະ ມີປະສິດທິພາບສູງ.

5. ຄູຜູ້ສອນຄວນບັນທຶກບັນຫາ ແລະ ຂໍ້ຄົງຄ້າງທີ່ນັກສຶກສາທີ່ບໍ່ເຂົ້າໃຈໄວ້ເພື່ອຈະເປັນຂໍ້ມູນໄປປັບປຸງບົດສອນໃຫ້ມີປະສິດທິພາບດີຂື້ນ.

6. ການແບ່ງກຸ່ມເພື່ອຈັດກິດຈະກຳ, ຄູຄວນກຳນົດກຸ່ມໃຫ້ຊັດເຈນ, ເພື່ອເຮັດໃຫ້ຂະບວນການກຸ່ມມີປະສິດທິພາບ ແລະ ສະມາຊິກໃນກຸ່ມມີຄວາມຮັບຜິດຊອບໃນການດຳເນີນກິດຈະກຳໃຫ້ຫຼາຍຂື້ນ,ແລະ ບໍ່ຄວນຍຶດກຸ່ມຢູ່ຕະຫຼອດ,ຄວນມີການປ່ຽນແປງກຸ່ມຕາມຄວາມເໝາະສົມ ແລະ ແຕ່ລະກຸ່ມຄວນປະກອບມີນັກສຶກສາ ເກັ່ງ, ກາງ ແລະ ອ່ອນ.

### 4.2. ຂໍ້ສະເໜີເພື່ອການສຶກສາຄັ້ງຕໍ່ໄປ

1. ຄວນເຮັດການຄົ້ນຄ້ວາກ່ຽວກັບຜົນຂອງການຈັດກິດຈະກຳການຮຽນ-ການສອນດ້ວຍກຸ່ມຮ່ວມມືແບບຈິກຊໍ່ (Jigsaw) ແຕ່ລະຄົນພາຍໃນກຸ່ມໃຫ້ມີຄວາມຮັບຜິດຊອບເນື້ອໃນບົດຮຽນຕ່າງໆ.

2. ການຈັດການຮຽນ-ການສອນບົດເລື່ອງເປັນພາສາອັງກິດຄູຄວນເນັ້ນໃຫ້ນັກສຶກສາຮູ້ຄວາມໝາຍຂອງຄຳສັບຢູ່ໃນບົດເລື່ອງໃຫ້ລະອຽດ.

3. ບົດເລື່ອງທີ່ເອົາມາສອນຄວນເປັນບົດເລື່ອງທີ່ເປັນໜ້າສົນໃຈ ແລະ ນຳໃຊ້ເຂົ້າໃນຊີວິດປະຈຳວັນຂອງເຂົາໄດ້.

4. ຄວນມີການປຽບທຽບລະຫວ່າງການສອນດ້ວຍເທັກນິກຈິກຊໍ່ (Jigsaw) ກັບວິທີການສອນອື່ນໆ.

5. ຄວນມີການສຶກສາຄົ້ນຄ້ວາເພື່ອພັດທະນາການຈັດການຮຽນ-ການສອນແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ່ (Jigsaw) ຮ່ວມກັບເທັກນິກວິທີສອນອື່ນໆເພື່ອໃຫ້ກິດຈະກຳການຮຽນຮູ້ມີຄວາມຫຼາກຫຼາຍໜ້າສົນໃຈນັກສຶກສາເກີດຄວາມກະຕືລືລົ້ນຕໍ່ການຮຽນຫຼາຍຂື້ນ.

# ເອກະສານອ້າງອີງ

# ເອກະສານອ້າງອີງ

ກະນິກາພອນ ແສງສະຫວ່າງ. (2540). *ການສຶກສາປຽບທຽບຜົນສໍາເລັດທາງການຮຽນ ແລະ ທັກສະນການເຮັດວຽກຮ່ວມກັນທີ່ສອນໂດຍການຮຽນແບບຮ່ວມມື ໂດຍໃຊ້ເທັກນິກຈິກຊໍກັບການສອນປົກກະຕິໃນລາຍວິຊາ ໂລກຂອງເຮົາຂອງນັກຮຽນຊັ້ນມັດທະຍົມປີທີ 3 ໂຮງຮຽນທີ້ວທວ້າວິທຍາຄົມ ຈັງຫວັດອ່າງທອງ.* [ວິທະຍານິພົນ]. ມະຫາວິທະຍາໄລສຸໂຂໄທທໍາມາທິລາດ

ການຈະນາ ສີລາພັດວິທະຍາ. (2533). *ຂະບວນການໂຕ້ຕອບ.* ກຸງເທບ: ສາຫະພາບການພິມ.

ກົມວິຊາການ. (2540). *ຄວາມເຂົ້າໃຈໃນການອ່ານ.* ກຸງເທບ: ໄທພິນຕິ້ງ.

ກົມວິຊາການ. (2545). *ຄວາມໝາຍເທັກນິກຈິກຊໍ່.* ກຸງເທບ: ໂຮງພິມພາບພິມ.

ກິ່ງແກ້ວ ກິ່ນຈັນ. (2536). *ອົງປະກອບສໍາຄັນໃນການເຮັດກິດຈະກໍາ.* ກຸງເທບ: ໄທພິ່ນຕິ້ງ.

ເຂມລັດ ໂຕໄທຍະ. (2540). *ຄູ່ມືການສ້າງແຜນການສອນກຸ່ມສ້າງເສີມປະສົບການຊີວິດເນື້ອຫາສິ່ງແວດລ້ອມເນັ້ນທັກສະຂະບວນການທາງວິທະຍາສາດຊັ້ນປະຖົມສຶກສາປີທີ 6 ຕາມຫຼັກສູດປະຖົມສຶກສາ ປີ 2521.* (ພິມຄັ້ງທີ 2). ຮ້ອຍເອັດ: ບໍ່ປະກົດສະຖານທີ່ພິມ

ຄໍາເຜີຍ ພິພັກຂະວົງ. (2012). *ວິທີວິທະຍາການວິໄຈການສຶກສາ.* ຄະນະສຶກສາສາດ: ມະຫາວິທະຍາໄລແຫ່ງຊາດ.

ສະມຸດ ເຊັນເຊົາວະນິດ. (2537). *ຄວາມເຂົ້າໃຈການສະຫຼຸບ.* ກຸງເທບ. ບໍ່ລະບຸສະຖານທີ່ພິມ

ສິດາ ໂມສິກລັດ. (2548). *ການພັດທະນາຜູ້ຮຽນສາມາດແບ່ງອອກເປັນຫຼາຍລະດັບ.* ສຸໂຕໄທ: ສີຣິພັນວະລະສະກຸນ.

ສຸປະນີ ພັດທອງ. (2545). *ຄວາມໝາຍການອ່ານຈັບໃຈຄວາມ.* ມະຫາສາລະຄາມ: ສະຫະພາບການພິມ.

ສຸມົນທາ ພອນທົມບຸນ ແລະ ຄະນະ. (2540). *ທິດສະດີການຮຽນຮູ້ແບບມີສ່ວນຮ່ວມ.* ກຸງເທບ, ສໍານັກງານຄະນະກໍາມະການການສຶກສາແຫ່ງຊາດ.

ສຸວະດົນ ທອງແມ້ນ. (2547). ການຮຽນແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ່. ກຸງເທບ: ສະຫະພາບການພິມ.

ສຸວິດ ມູນຄໍາ. (2545). *ການຈັດການຮຽນຮູ້ແບບຮ່ວມມື.* ກຸງເທບ: ຮ້ານຮຸ້ນສ່ວນຈໍາກັດ ພາບພິມ.

ສຸວິດ ມູນຄໍາ ແລະ ອໍລະໄທ ມູນຄໍາ. (2547). *21 ວິທີການຈັດການຮຽນຮູ້: ເພື່ອພັດທະນາຂະບວນການຄິດ.* (ພິມຄັ້ງທີ 5). ກຸງເທບ: ພາບພິມ.

ສຸວິດ ມູນຄໍາ ແລະ ອໍລະໄທ ມູນຄໍາ. (2545). *ການຮັບລາງວັນ ຫຼື ການຊົມເຊີຍ.* ກຸງເທບ: ໂຮງພິມພາບພິມ.

ສຸວະດົນ ທອງແມ້ນ. (2547). *ການຮຽນຮູ້ແບບຮ່ວມມື.* ກຸງເທບ: ໂຮງພິມພາບພິມ.

ສົມຄິດ ສະລອຍນໍ້າ. (2542). *ຂັ້ນຕອນການຈັດການຮຽນ-ການສອນ.* ມະຫາສາລະຄາມ: ສະຫະພາບການພິມ.

ສົມນຶກ ພັດທິຍະທະນີ. (2537). *ການວັດຜົນການສຶກສາ.* ກາລະສິນ: ປະສານການພິມ.

ສົມລວຍ ສຸຕິຍະໄທ. (2011). *ການວັດຜົນ ແລະ ການປະເມີນຜົນການສຶກສາ.* ວິທະຍາໄລຄູຫຼວງພະບາງ.

ສົນອົງ ອິນລະຄອນ. (2544). *ຂັ້ນຕອນການຈັດການຮຽນຮູ້.* ກຸງເທບ. ບໍ່ລະບຸສະຖານທີ່ພິມ.

ໄຊຍົງ ພົນຫຼວງ (2523). *ການຫາປະສິດທິພາບຂອງສື່.* ມະຫາສະລະຄາມ: ສະຫະການພິມ

ທິຕິມາ ອຸ່ນໃຈ. (2538). *ການປຽບທຽບການຄິດແບບຄະເນກໃບຂອງເດັກກຽມປະຖົມທີ່ໄດ້ຮັບປະສົບການການຮຽນແບບຮ່ວມມືກັບປະສົບການຕາມປົກກະຕິ.* [ວິທະຍານິພົນ]. ມະຫາວິທະຍາໄລສຸໂຂໄທທຳມາທິລາດ

ທົງໄຊ ພອນໜໍປົກ. (2540). *ຄວາມເຂົ້າໃຈໃນການອ່ານ.* ກຸງເທບ: ສະຫະພາບການພິມ.

ທິດສະໜາ ແຂມມະນີ. (2551). *ຂະບວນການຮຽນຮູ້.* ມະຫາສາລະຄາມ: ໂຮງພິມພາບພິມ.

ທິດສະໜາ ແຂມມະນີ. (2552). *ສາດການສອນ:* ທິດສະດີການຮຽນຮູ້ກຸ່ມພຶດຕິກຳນິຍົມ. (ພິມຄັ້ງທີ 10). ກຸງເທບ: ຈຸລາລົງກອນມະຫາວິທະຍາໄລ.

ທົນລະວົນ ທຽນເຈນຖາ. (2548). *ການພັດທະນາທັກສະການອ່ານຈັບໃຈຄວາມ ລະດັບຊັ້ນປະກາດສະນີຍະບັດວິຊາຊີບ ສາຂາວິຊາຄອມພິວເຕີທຸລະກິດ ຊັ້ນປີທີ 1 ດ້ວຍກຸ່ມຮ່ວມມືແບບຈິກຊໍ ວິທະຍາໄລການອາຊີບຂອນແກ່ນ.* [ວິທະຍານິພົນ]. ຂອນແກ່ນ: ສະຫະພາບການພິມ.

ນິ່ງໄທ ວານຕາ. (2549). *ການພັດທະນາການອ່ານພາສາອັງກິດ.* ມະຫາວິທະຍາໄລຊຽງໃໝ່.

ນະລິນ ກະພີ້ແດງ. (2542). *ການຮຽນຮູ້ແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ່.* Retrieved January 28, 2013, from kknic: www.kknic.ac.th/web2010/webpage/workAcadamic/2_2554/O9.

ບຸນຊົມ ສີສະອາດ. (2553). *ການວິໄຈເບື້ອງຕົ້ນ.* (ພິມຄັ້ງທີ 9) .ກຸງເທບ: ຊົມລົມເດັກ.

ບັນລື ພຶດສະວັນ. (2534). *ຄວາມໝາຍການອ່ານຈັບໃຈຄວາມ.* ມະຫາສາລະຄາມ: ພິມໄພ ຈຳກັດ.

ບັນລື ພຶດສະວັນ. (2532). *ຄຳຈຳກັດຄວາມການອ່ານຈັບໃຈຄວາມ.* ກຸງເທບ: ໄທພິ່ນຕິ່ງ.

ປະສົບ ສຸກໂສຕິລັດ. (2537). *ຄວາມໝາຍໃນການສອນອ່ານ.* ກຸງເທບ: ໂຮງພິມພາບພິມ.

ປະລິນຍາ ປັ້ນສຸວັນ. (2553). *ການຮຽນຮູ້ແບບຮ່ວມມືໂດຍໃຊ້ເທັດນິກຈິກຊໍ່.* ກຸງເທບ: ມະຫາວິທະຍາໄລສິນລະປະກອນ.

ປີຍະສັດ ຂາວແກ້ວ. (2542). *ຜົນການຮຽນຮູ້ແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍທີ່ມີຜົນຕໍ່ການເຮັດວຽກຮ່ວມກັນ ແລະ ຜົນສຳ ເລັດທາງການຮຽນໃນລາຍວິຊາ ປະເທດຂອງເຮົາ ຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ໂຮງຮຽນສະຕິລາຊີນູທິດ ຈັງຫວັດອຸດອນທານີ.* [ວິທະຍານິພົນ]. ມະຫາວິທະຍາໄລສຸໂຂໄທທຳມາທິລາດ.

ປັດທະມາວະດີ ຄະນາດີ. (2552). *ການປຽບທຽບຄວາມສາມາດດ້ານການອ່ານຈັບໃຈຄວາມພາສາອັງກິດຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 1 ລະຫວ່າງການຈັດກິດຈະກຳດ້ວຍກຸ່ມແບບ Jigsaw ແລະ ກຸ່ມແບບ TAI.* [ວິທະຍານິພົນ]. ມະຫາວິທະຍາໄລມະຫາສາລະຄາມ.

ຜະເຊີນ ກິດຈະການ. (2542). *ດັດສະນີປະສິດທິຜົນ.* ກຸງເທບ: ກຸງເທບພຣິນຕິງ.

ພາລາກິດການສຶກສາ. (2011). *ກອງປະຊຸມໃຫ່ຍແນວລາວສ້າງຊາດ.* ກອງປະຊຸມໃຫ່ຍແນວລາວສ້າງຊາດ, 29.

ພອນເພີນ ພູມສະອາດ. (2543). *ຄວາມເຂົ້າໃຈໃນການອ່ານ.* ກຸງເທບ: ເອມໄທຈຳກັດ.

ອະໄລພອນ ອາມາດ. (2554). *ການປຽບທຽບຄວາມເຂົ້າໃຈໃນການອ່ານພາສາອັງກິດຂອງນັກຮຽນລະດັບປະກາດສະນີຍະບັດວິຊາຊີບພະແນກວິຊາກົນຈັກ.* [ວິທະຍານິພົນ]. ຂອນແກ່ນ: ວິທະຍາໄລການອາຊີບຂອນແກ່ນ.

ວັດສະລາ ເວດບັນພິດ. (2550). *ການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ່.* ມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ.

ວັດທະພອນ ລະງັບສຸກ. (2545). *ຂັ້ນຕອນການຈັດກິດຈະກຳ.* ມະຫາສາລະຄາມ: ສະຫະພາບການພິມ.

ວິນລະທິພາ ຮອດແຮງກ້າ. (2540). *ທິດສະດີຂອງກຸ່ມທີ່ເນັ້ນການຮັບຮູ້ ແລະ ການເຊື່ອມໂຍມຄວາມຄິດ (Apprception).* Retrieved June 29, 2013, from Math53sec1: www.math53sec1.blogspot.com/2012/09/135 theory of cooperative. html

ອາລົມພອນ ພອນສີມາ. (2541). *ການຮຽນແບບຮ່ວມມື (Cooperative Learning).* ກຸງເທບ: ສະຫະພາບການພິມ.

ແວວມະຍຸລາ ເໜືອນນິດ (2545). *ຄວາມໝາຍການອ່ານຈັບໃຈຄວາມ.* ກຸງເທບ: ຊິນຣິນເດັກ.

ແມ້ນມາດ ຊີວະລິດ. (2534). *ຄຸນນະພາບຂອງສະໝອງ.* ມະຫາສາລະຄາມ: ສະຫະພາບການພິມ.

Applewhite, P. B. (1965). *Organization and Behavior***.** New York: Prentice-Hall.

Barkley, E. F. (2004). Collabrorative Learning Techniques the use of Authentic Materails in the Teaching of reading. The Reading Matrix. 6(2)

Good, C. V (1973). Dictionary of Education. NewYork: McGraw-Hill Book company.

Johnson, D. W and Johnson, R. T. (1991). Cooperative and completion: Theory and Research. New Jersey : Prentice - Hall.

Millis, E. M (1998). *Teaching reading in secondary school content subjects*: a book thinking process. America: Orxy press.

Scott, M. M. (*1970*). *Every Employer a Manager: More Meaningful Work through.* Job Environment. New York: Mc Graw-Hill Book Company**.**

Smith, S. C (1978). *Teaching reading in secondary school content subjects*: a book thinking process. Holt: Rineheart and Winston.

Widdowson, H. G. (1983). *On Literature and ELT: English Language Teaching*. Oxford: Oxford University Press.

*Dechant*, E V. (1982). *Improving the Teaching of Reading*. (3rd ed). Englewood Clipps,. N.J., Prentice

Wainwright, G. R. (1972). *Rapid Reading Made Simple*. Published by W.H.Allen

# ເອກະສານຊ້ອນທ້າຍ

# ເອກະສານຊ້ອນທ້າຍ ກ

# ໜັງສືສະເໜີຕ່າງໆ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********0000**********

ກະຊວງສຶກສາທິການ ແລະ ກິລາ

ມະຫາວິທະຍາໄລແຫ່ງຊາດ

ຄະນະສຶກສາສາດ

ເລກທີ 119 - - ............/ຄສສ.2014

ວັນທີ......................... 24 MAR 2014

**ໜັງສືສະເໜີ**

ເຖິງ: ທ່ານ ອາຈານ ບົວພັນ ຈັນເທົາ ຫົວໜ້າຫ້ອງການພາສາຕ່າງປະເທດ ວິທະຍາໄລຄູຫຼວງພະບາງ

ເລື່ອງ: ຂໍຄວາມຊ່ວຍເຫຼືອເປັນຜູ້ຊ່ຽວຊານກວດສອບເຄື່ອງມືການຄົ້ນຄ້ວາຂອງນັກສຶກສາປະລິນຍາໂທສຶກສາສາດ ສາຂາ ຫຼັກສູດ ແລະ ການສອນ

